
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ



ກະຊວງສຶກສາທິການ

ສະຫຼຸບຕີລາຄາການປະຕິບັດ
ແຜນພັດທະນາການສຶກສາ
1996-2000

ແລະ

ແຜນພັດທະນາການສຶກສາ
2001-2005

ເດືອນ ທັນວາ 2000

สาละบาม หน้า

ພາກທີ່ໜຶ່ງ

I. ສະຫຼຸບການປະຕິບັດແຜນການພັດທະນາການສຶກສາ 5 ປີຄັ້ງທີ IV (1996-2000) 1

1.1. ຕີລາຄາລວມສະພາບຂອງການພັດທະນາການສຶກສາ 1

1.2. ສັງເກດຕີລາຄາລວມ 18

1.3. ບັນຫາ ແລະ ຂໍ້ຄົງຄ້າງຕ່າງໆ 19

1.4. ສາຍເຫດທີ່ພາໃຫ້ມີຜົນສຳເລັດ ແລະ ມີຈຸດອ່ອນຂໍ້ຄົງຄ້າງຕ່າງໆ 21

1.5. ຖອດຖອນບົດຮຽນ 22

ພາກທີ່ສອງ 23

II. ທິດທາງແຜນການພັດທະນາການສຶກສາ 5 ປີຄັ້ງທີ V (2001-2005) 23

2.1. ບ່ອນອີງໃນການສ້າງແຜນພັດທະນາການສຶກສາ 23

2.1.1. ດ້ານການຂະຫຍາຍໂອກາດ ແລະ ໃຫ້ຄວາມເປັນທຳ 23

2.1.2. ດ້ານຄຸນນະພາບ 24

2.1.3. ດ້ານການຄວາມສອດຄ່ອງ 24

2.1.4. ດ້ານການຄຸ້ມຄອງ 25

2.1.5. ດ້ານການລົງທຶນ ແລະ ການໃຊ້ຈ່າຍຕ່າງໆ 26

2.2. ສະພາວະຄວາມເປັນຈິງໃນປະຈຸບັນ ແລະ ທ່າອ່ຽງໃນສະເພາະໜ້າ 28

2.2.1. ທ່າອ່ຽງໃນສະເພາະໜ້າຂອງສາກົນ 29

2.2.2. ທ່າອ່ຽງໃນສະເພາະໜ້າຂອງຂົງເຂດ 30

2.3. ທິດທາງລວມ 31

2.4. ຈຸດໝາຍລວມ 32

2.5. ລະດັບຄາດໝາຍລວມ 32

2.6. ແຜນງານທີ່ຈະຕ້ອງປະຕິບັດ 36

2.6.1. ແຜນງານປັບປຸງການຂະຫຍາຍໂອກາດການເຂົ້າຮຽນ 37

2.6.2. ແຜນງານປັບປຸງຄຸນນະພາບ 41

2.6.3. ແຜນງານປັບປຸງຄວາມສອດຄ່ອງ 48

2.6.4. ແຜນງານເສີມກຳລັງແຮງດ້ານການວາງແຜນ ແລະ ການຄຸ້ມຄອງ 49

ພາກຜະໜວກ

I. ສັງລວມໂຄງການຂອງຂະແໜງການສຶກສາສຳລັບໄລຍະແຕ່ 2000-2005 54

II. ສັງລວມໂຄງການຮັບໃຊ້ແຜນງານພັດທະນາການສຶກສາ 2001-2005 67

ຄຳນຳ

ແຜນພັດທະນາການສຶກສາ 5 ປີຄັ້ງທີ V (2001-2005) ແມ່ນສ້າງຂຶ້ນຕາມທິດທາງແຜນຍຸດທະສາດລວມຂອງພັກ ແລະ ຍຸດທະສາດການພັດທະນາເສດຖະກິດ-ສັງຄົມຂອງລັດຖະບານທີ່ວາງອອກສຳລັບແຕ່ນີ້ເຖິງປີ 2010 ແລະ ເຖິງປີ 2020. ໂຄງປະກອບເນື້ອໃນຂອງເອກະສານປະກອບມີ 3 ພາກຄື: -ພາກສະຫລຸບສະພາບການຈັດຕັ້ງແຜນພັດທະນາການສຶກສາ 5 ປີຄັ້ງທີ IV (1996-2000), -ພາກທິດທາງແຜນການ 5 ປີຄັ້ງທີ V (2001-2005), ແລະ -ພາກແຜນດຳເນີນງານຂອງແຜນພັດທະນາການສຶກສາແຕ່ 2001-2005; ຊຶ່ງພໍສັງລວມເນື້ອໃນໄດ້ດັ່ງລຸ່ມນີ້:

ພາກທີໜຶ່ງ: ສະຫລຸບສະພາບການຈັດຕັ້ງແຜນພັດທະນາການສຶກສາ 5 ປີຄັ້ງທີ IV (1996-2000)

ການສະຫລຸບຕີລາຄາສະພາບການພັດທະນາການສຶກສາ 5 ປີຄັ້ງທີ IV ທີ່ຜ່ານມາແມ່ນໄດ້ອີງໃສ່ຜົນສຳເລັດໃນການຈັດຕັ້ງປະຕິບັດຕາມ 5 ແຜນງານທີ່ວາງໄວ້. ໂດຍທົ່ວໄປເຫັນວ່າໃນຊ່ວງຕົ້ນຂອງແຜນການຂະຫຍາຍຕົວຂອງແຕ່ລະຊັ້ນຮຽນໄດ້ມີການເພີ່ມຂຶ້ນເປັນປົກກະຕິ, ແຕ່ໃນໄລຍະທ້າຍຂອງແຜນການສະພາບການເຂົ້າຮຽນຂອງບາງຊັ້ນຮຽນ (ອະນຸບານສຶກສາ, ປະຖົມສຶກສາ ແລະ ອາຊີວະສຶກສາ) ມີທ່າອ່ຽງຂະຫຍາຍຕົວຊ້າ. ສ່ວນຊັ້ນມັດທະຍົມສຶກສາ ແລະ ການສຶກສາຊັ້ນສູງມີການເພີ່ມຂຶ້ນໄວລົ້ນຄາດໝາຍທີ່ວາງໄວ້. ສັງລວມແລ້ວການພັດທະນາການສຶກສາທີ່ຜ່ານມາຍັງບໍ່ທັນຂະຫຍາຍຕົວແບບສະໝ່ຳສະເໝີໃນທຸກຊັ້ນຮຽນ, ແຕ່ໂດຍທົ່ວໄປແລ້ວກໍເຫັນວ່າລະບົບການສຶກສາແມ່ນໄດ້ຮັບການປັບປຸງ ແລະ ຂະຫຍາຍຕົວເປັນປົກກະຕິຊຶ່ງສາມາດຍາດໄດ້ຜົນສຳເລັດຫລາຍດ້ານທີ່ເປັນປັດໄຈພື້ນຖານໃຫ້ແກ່ການສືບຕໍ່ປັບ ປຸງ ແລະ ຂະຫຍາຍໃນຊ່ວງຕໍ່ໄປ. ແຕ່ກໍປົດສະຈາກບໍ່ໄດ້ເຖິງຂໍ້ຄົງຄ້າງ ແລະ ຂໍ້ຈຳກັດຕ່າງໆທີ່ຈະຕ້ອງໄດ້ເອົາໃຈໃສ່ແກ້ໄຂ ເຊັ່ນ: -ການແຕກໂຕນກັນທາງດ້ານພູມສາດ, ທາງດ້ານເພດ ແລະ ເຜົ່າຊົນ. ພ້ອມດຽວກັນການສະໜອງງົບປະມານ ແລະ ການເງິນໃຫ້ທົ່ວຂະແໜງການສຶກສາຍັງບໍ່ທັນພຽງພໍ ແລະ ບໍ່ທັນຮັບປະກັນດ້ເງື່ອນໄຂອັນຈຳເປັນສຳລັບການຄຸ້ມຄອງບໍລິຫານໃນແຕ່ລະຂັ້ນ. ສາຍເຫດຕົ້ນຕໍແມ່ນມາຈາກສະພາບການປັ່ນປ່ວນທາງດ້ານເສດຖະກິດ ແລະ ການເງິນຂອງພາກພື້ນທີ່ສົ່ງຜົນສະທ້ອນໃຫ້ແກ່ຄູສອນບໍ່ຢາກໄປສະບຢູ່ເຂດທີ່ຫຍຸ້ງຍາກຈິ່ງພາໃຫ້ເກີດສະພາບການຂາດຄູມີຢູ່ທົ່ວໄປ.

ພາກທີສອງ: ທິດທາງແຜນພັດທະນາການສຶກສາ 5 ປີຄັ້ງທີ V (2001-2005)

ພາກທີສອງໄດ້ນຳສະເໜີທິດທາງແຜນພັດທະນາການສຶກສາ 5 ປີ ຄັ້ງທີ V ທີ່ເປັນການຜັນຂະຫຍາຍແຜນຍຸດທະສາດການສຶກສາ 2020 ຂອງຂະແໜງສຶກສາ ແລະ ແຜນຍຸດທະສາດການພັດທະນາເສດຖະກິດ-ສັງຄົມຂອງລັດຖະບານທົ່ວໄປອອກ. ແຜນພັດທະນາການສຶກສາໃນ 5 ປີຕໍ່ໜ້າແມ່ນໄດ້ມີການປັບປຸງໂຄງຮ່າງຈາກ 5 ແຜນງານໃຫ້ເປັນ 4 ແຜນງານຕາມວິໄສທັດລວມຂອງການພັດທະນາການສຶກສາ, ຊຶ່ງມີຈຸດເລັ່ງໃສ່ການປັບປຸງການຂະຫຍາຍໂອກາດການເຂົ້າຮຽນໃນທຸກຊັ້ນຮຽນໂດຍສະເພາະແມ່ນການຂະຫຍາຍໂຮງຮຽນ ແລະ ການເອົາໃຈໃສ່ສອນໃຫ້ຄົບທຸກຊັ້ນຮຽນຂອງປະຖົມສຶກສາໃນເຂດຊົນນະບົດຫ່າງໄກ ແລະ ເຂດຊົນເຜົ່າຜູ້ທີ່ຍັງດ້ອຍໂອກາດເພື່ອໃຫ້ເດັກໃນເຂດທີ່ກ່າວໄດ້ມີເງື່ອນໄຂຮຽນສຳເລັດການສຶກສາພາກບັງຄັບຢ່າງທົ່ວເຖິງ. ການຍົກຄຸນນະພາບຂອງການສຶກສາໃຫ້ສູງຂຶ້ນກໍຍັງແມ່ນວຽກງານໃຈກາງຂອງແຜນພັດ

ທະນາການສຶກສາເຊັ່ນກັນ. ໂດຍສະເພາະແມ່ນການເອົາໃຈໃສ່ຕໍ່ວຽກງານກໍ່ສ້າງ ແລະ ບຳລຸງຄູໃຫ້ມີຄວາມ
ສາມາດພຽງພໍໃນການປະຕິບັດຫລັກສູດ ແລະ ວິທີການສິດສອນແບບໃຫມ່ໃຫ້ມີປະສິດທິຜົນ. ການພັດທະ
ນາຫລັກສູດ ແລະ ການສະຫນອງອຸປະກອນຮັບໃຊ້ການສອນ-ການຮຽນເພື່ອຮັບປະກັນໃຫ້ຄູ ແລະ ນັກຮຽນ
ໄດ້ມີເງື່ອນໄຂສິດສອນ ແລະ ຮ່ຳຮຽນໄດ້ເຕັມສ່ວນ ແລະ ຄົບຖ້ວນຕາມໂຄງການຫລັກສູດ. ການປັບປຸງ
ຄວາມສອດຄ່ອງຂອງການສຶກສາໃຫ້ແທດເຫມາະກັບຍຸກສະໄຫມກໍເຫັນວ່າມີຄວາມສຳຄັນເພີ່ມໃຫ້ການບໍລິ
ການການສຶກສາໃຫ້ສະຫນອງໄດ້ຕາມຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມຂອງປະເທດ.
ໃນ 5 ປີຕໍ່ຫນ້າຈະໄດ້ປັບປຸງໂຮງຮຽນເຕັກນິກທີ່ມີຢູ່ໃນແຕ່ລະພາກຂອງປະເທດໃຫ້ໄດ້ມາດ ຖານດ້ານຫລັກ
ສູດ ແລະ ອາຄານສະຖານທີ່ຮັບໃຊ້ການສອນ-ການຮຽນ; ສ້າງໂຮງຮຽນວິຊາຊີບ ແລະ ສູນ(ໂ)ກອົບຮົມວິຊາ
ຊີບຂຶ້ນຕື່ມຈຳນວນຫນຶ່ງໃນທ້ອງຖິ່ນທີ່ບໍ່ທັນມີເພື່ອຮອງຮັບໃຫ້ແກ່ການຂະຫຍາຍການເຂົ້າຮຽນໃນຊັ້ນຮຽນນີ້.
ສຳລັບການສຶກສາຊັ້ນສູງແມ່ນຈະໄດ້ເລັ່ງໃສ່ປັບປຸງສະຖາບັນທີ່ມີຢູ່ໃຫ້ມີຄວາມສາມາດສ້າງໄດ້ ຫລາຍ ແລະ
ມີຄຸນນະພາບດີ. ແຜນງານຍົກລະດັບຄວາມສາມາດດ້ານການວາງແຜນ ແລະ ການຄຸ້ມຄອງການສຶກສາ
ແມ່ນມີຈຸດເລັ່ງໃນການຍົກລະດັບຄວາມສາມາດດ້ານການໃຫ້ການບໍລິການໃນການສ້າງແຜນ ການ ແລະ
ການຄຸ້ມຄອງບໍລິການໃຫ້ເປັນລະບົບແຕ່ສູນກາງລົງເຖິງທ້ອງຖິ່ນຮາກຖານການສຶກສາ (ກະຊວງ, ແຂວງ,
ເມືອງ ແລະ ໂຮງຮຽນ) ຕາມກົນໄກຄຸ້ມຄອງຂອງລັດຖະບານທີ່ກຳນົດອອກ.

ພາກທີສາມ: ແຜນດຳເນີນງານຂອງ ແຜນພັດທະນາການສຶກສາແຕ່ 2001-2005

Programs of Edu-Dev plan 2001-2005

ພາກທີສາມແມ່ນເປັນແຜນດຳເນີນງານຂອງການພັດທະນາການສຶກສາຊຶ່ງໄດ້ກຳນົດໃຫ້ເຫັນນະໂຍ
ບາຍ, ຍຸດທະສາດ, ກິດຈະກຳ ແລະ ຜົນທີ່ຄາດຄະເນຈະໄດ້ຮັບຂອງແຕ່ລະແຜນງານ. ເນື້ອໃນຕົ້ນຕໍຂອງ
ພາກນີ້ຍັງມີລັກສະນະກວມລວມເພາະໂຄງການຮັບໃຊ້ສ່ວນໃຫຍ່ຍັງບໍ່ທັນກຳນົດກິດຈະກຳໄດ້ ໆຄົບຖ້ວນ
ເທື່ອ.

ພາກຜະຫນວກ: ສັງລວມໂຄງການຮັບໃຊ້ແຜນພັດທະນາການສຶກສາແຕ່ 2000-2005

ໃນພາກຜະຫນວກໄດ້ສັງລວມເອົາບັນດາໂຄງການທີ່ກຳລັງຈັດຕັ້ງປະຕິບັດ, ໂຄງການທີ່ກຳລັງຕຽມ
ສ້າງຂຶ້ນໃຫມ່ ແລະ ໂຄງການທີ່ຕ້ອງການສ້າງຂຶ້ນເພື່ອຮອງຮັບໃຫ້ແກ່ການຈັດຕັ້ງປະຕິບັດ 4 ແຜນງານທີ່
ສ້າງໄວ້ໃຫ້ປະສົບຜົນສຳເລັດ. ໂຄງການເຫລົ່ານີ້ຍັງຢູ່ໃນໂຄງຮ່າງລັກສະນະຕົ້ນຕໍ, ຍັງມີຄວາມຕ້ອງ
ການທີ່ຈະຕ້ອງໄດ້ພັດທະນາໃຫ້ເປັນໂຄງການສົມບູນແບບເພື່ອຈະເປັນເອກະສານອ້າງອີງໃນການຍາດ
ແຍ່ງ ແລະ ສະເຫນີຂໍເອົາທຶນມາຈັດຕັ້ງປະຕິບັດ.

ຂ້າພະເຈົ້າຫວັງຢ່າງຍິ່ງວ່າແຜນການພັດທະນາການສຶກສາສະບັບນີ້ຈະເປັນເອກະສານອ້າງອີງສຳ
ລັບກົມກອງ ແລະ ທ້ອງຖິ່ນໃນການສ້າງແຜນການ ແລະ ໂຄງການຂອງພາກສ່ວນຕົນ, ໂດຍສະເພາະແມ່ນ
ການສ້າງແຜນການປະຈຳປີແຕ່ 2001 ຫາ 2005.

๗. ລັດຖະມົນຕີວ່າການກະຊວງສຶກສາທິການ

ພາກທີຫນຶ່ງ

I- ສະຫລຸບການປະຕິບັດແຜນການພັດທະນາການສຶກສາ 5 ປີຄັ້ງທີ IV

(1996-2000)

1.1-ຕີລາຄາລວມສະພາບຂອງການພັດທະນາການສຶກສາ

ກອງປະຊຸມຜູ້ບໍລິຫານການສຶກສາທົ່ວປະເທດປະຈຳປີ 1995 ໄດ້ກຳນົດແຜນພັດທະນາການສຶກສາແຕ່ 1996-2000, ແຜນດັ່ງກ່າວໄດ້ກຳນົດທິດທາງລວມ, ຈຸດໝາຍລວມ ແລະ ລະດັບຄາດໝາຍລວມໄວ້ ຊຶ່ງມີເນື້ອໃນຕົ້ນຕໍທີ່ໄດ້ນຳມາຜັນຂະຫຍາຍຈັດຕັ້ງປະຕິບັດດັ່ງລຸ່ມນີ້:

ກ-ທິດທາງລວມ

ຈາກການຜັນຂະຫຍາຍທັດສະນະ ແລະ ແນວທາງນະໂຍບາຍຂອງພັກ ແລະ ລັດຖະບານຕໍ່ການສຶກສາຊຶ່ງໄດ້ກຳນົດໃນມະຕິຕ່າງໆ ໂດຍສະເພາະແມ່ນໃນມະຕິກອງປະຊຸມໃຫຍ່ຄັ້ງທີ V ຂອງພັກ ແລະ ມະຕິກ່ຽວ ກັບການພັດທະນາຊັບພະຍາກອນມະນຸດໂດຍສັງລວມມີດັ່ງລຸ່ມນີ້:

1-ໃຫ້ປະຕິບັດການສຶກສາແບບບັງຄັບສຳລັບເຍົາວະຊົນຊາວໜຸ່ມໂດຍການນຳໃຊ້ງົບປະມານຂອງລັດເປັນຕົ້ນຕໍ,

2-ຕ້ອງເຮັດສຳເລັດການລົບລ້າງການກຶກໜັງສືໃຫ້ຜູ້ທີ່ກຶກຄືນ ແລະ ກຶກໃໝ່ຢ່າງສົ້ນເຊີງ,

3-ສົ່ງເສີມ ແລະ ຂະຫຍາຍ ການສຶກສາພາກເອກະຊົນ ທັ້ງສາຍສາມັນ ແລະ ອາຊີວະສຶກສາ,

4-ສັບຊ້ອນຕາໜ່າງໂຮງຮຽນມັດທະຍົມຕົ້ນ-ມັດທະຍົມປາຍ ແລະ ອາຊີວະສຶກສາຊັ້ນຕ່າງໆໃຫ້ແທດເໝາະກັບ ຄວາມສາມາດຕົວຈິງຂອງປະເທດເຮົາ, ຂະຫຍາຍໂຮງຮຽນຕາມຮູບຫາດ ແລະ ມີການສອບເສັງໃນທຸກຂັ້ນ,

5-ສ້າງພະນັກງານແມ່ນສ້າງໃຫ້ທຸກພາກສ່ວນເສດຖະກິດ ແລະ ສັງຄົມບໍ່ແມ່ນສ້າງເພື່ອສັງກັດໃນກົງຈັກລັດເທົ່ານັ້ນ,

6-ການພັດທະນາການສຶກສາໃນສະເພາະໜ້າ ແລະ ຍາວນານ ແມ່ນແນໃສ່ ຍົກຄຸນນະພາບຂອງ ການສຶກສາແຫ່ງຊາດຂຶ້ນໃຫ້ທຽບມໍ່ກັບມາດຕະຖານສາກົນເທື່ອລະກ້າວ,

7-ຂະຫຍາຍໂຮງຮຽນ ໃຫ້ໄປເຖິງເຂດພູດອຍຫ່າງໄກ-ສອກຫລີກ, ສ້າງໂຮງຮຽນກິນນອນບາງບ່ອນທີ່ຈຳເປັນ ເພື່ອສ້າງເງື່ອນໄຂໃຫ້ລູກຫລານຂອງບັນດາເຜົ່າໄດ້ເຂົ້າໂຮງຮຽນ,

8-ປັບປຸງການສຶກສາສົງ ໄປຕາມທິດສ້າງຄວາມຮູ້ດ້ານທຳມະ, ພາສາສາດ, ອັນມະຄະດີ ແລະ ວາງນະໂຍ ບາຍກ່ຽວກັບສຶກສາສົງໃຫ້ຈະແຈ້ງ.

ຂ-ຈຸດໝາຍລວມ

ກໍ່ສ້າງຄົນຮຸ້ນໜຸ່ມໃຫ້ມີໂລກະທັດວິທະຍາສາດ, ມີຈິດໃຈຮັກຊາດ, ມີນ້ຳໃຈສາມັກຄີກັບຊົນເຜົ່າ ອື່ນໆ..ພາຍໃນຊາດ ແລະ ສາມັກຄີກັບບັນດາປະເທດເພື່ອນມິດໃນໂລກ, ຮູ້ສຶດຜິນປະ ໂຫຍດ ແລະ ພັນທະ ຂອງພົນລະເມືອງ, ຮູ້ຮັກສາ ແລະ ເສີມຂະຫຍາຍມູນເຊື້ອວັດທະນະທຳອັນດີງາມຂອງຊາດ, ມີສະຕິ ເພິ່ງຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ຮູ້ປະຫຍັດ ມັດທະ ຍັດ ແລະ ຮູ້ສົມທົບລະຫວ່າງ ຜິນປະໂຫຍດສ່ວນຕົວກັບ ຜິນປະໂຫຍດສ່ວນລວມ; ກຳແໜ້ນຄວາມຮູ້ສາມັນ, ຄວາມຮູ້ທາງດ້ານວິຊາ ສະເພາະ, ວິທະຍາສາດເຕັກນິກເປັນຢ່າງດີ, ມີລະບຽບວິໄນ, ມີຄວາມຮັບຜິດຊອບຕໍ່ໜ້າທີ່ການງານ, ມີ ສຸຂະພາບແຂງແຮງ, ມີຫົວຄິດປະດິດສ້າງ, ມີຄວາມສີວິໄລທາງດ້ານຈິດໃຈກຽມພ້ອມປະກອບສ່ວນເຂົ້າ ໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ຄ-ລະດັບຄາດໝາຍລວມ

1-ຂະຫຍາຍ ແລະ ປັບປຸງ ໂຮງລ້ຽງເດັກ-ໂຮງຮຽນອານຸບານຕາມຄວາມສາມາດຂອງແຕ່ລະທ້ອງຖິ່ນ.

2-ຂະຫຍາຍໂຮງຮຽນປະຖົມເພື່ອຮັບເອົາເດັກທີ່ຢູ່ໃນເກນອາຍຸ (6-10)ປີ ໄດ້ເຂົ້າຮຽນເພີ່ມຂຶ້ນຈາກ 63% (1990) ເຖິງ 80% (2000) ພ້ອມນັ້ນກໍຫລຸດຜ່ອນການຄ້າງຫ້ອງ ແລະ ການປະລະການຮຽນລົງ, ເຮັດໃຫ້ອັດຕາສ່ວນລອດເຫລືອຂອງນັກຮຽນທີ່ເຂົ້າ (ป1) ຮອດ (ป5)ໃຫ້ສູງຂຶ້ນຈາກ 27% (1990) ເຖິງ 63% (2000).

3-ຂະຫຍາຍ ແລະ ປັບປຸງໂຮງຮຽນມັດທະຍົມຕອນຕົ້ນ ແລະ ມັດທະຍົມຕອນປາຍ ໃຫ້ສາມາດຮັບເອົານັກ ຮຽນເພີ່ມ ຂຶ້ນຄື: ຊັ້ນມັດທະຍົມຕອນຕົ້ນຈາກ 30% (1990) ຫາ 40% (2000) ແລະ ຊັ້ນມັດທະຍົມ ຕອນປາຍຈາກ 12% (1990) ຫາ 17% (2000).

4-ລົບລ້າງຄວາມບໍ່ຮູ້ໜັງສືໃຫ້ປະຊາຊົນ ຫລື ຜູ້ກຶກຄົນໃນເກນອາຍຸແຕ່ (15-40)ປີ ເພີ່ມຂຶ້ນຈາກ 60% (1990) ຫາ 80% (2000), ບຳລຸງຍົກລະດັບຊັ້ນປະຖົມສຶກສາໃຫ້ໄດ້ 50% ຂອງຈຳນວນຜູ້ທີ່ລົບ ລ້າງແລ້ວພ້ອມທັງເຮັດໃຫ້ປະຊາຊົນໄດ້ຮັບການອົບຮົມວິຊາຊີບຂັ້ນພື້ນຖານທີ່ຈຳເປັນ.

5-ສົ່ງເສີມໃຫ້ເອກະຊົນສ້າງໂຮງຮຽນ ໂດຍສະເພາະແມ່ນໂຮງຮຽນວິຊາຊີບ ພ້ອມກັນນັ້ນກໍເອົາໃຈໃສ່ ຄຸ້ມ ຄອງກວດກາໃຫ້ດີກວ່າເກົ່າ.

6-ກໍ່ສ້າງ ແລະ ບຳລຸງຄູຕອບສະໜອງໃຫ້ໄດ້ຕາມການຂະຫຍາຍຕົວຂອງສາມັນສຶກສາ, ແມໃສ່ສ້າງຄູ ໃຫ້ພຽບພ້ອມດ້ວຍຄຸນສົມບັດ ແລະ ຄຸນນະທຳ, ມີນ້ຳໃຈຮັບຜິດຊອບຕໍ່ໜ້າທີ່, ມີຄວາມອົດທົນ ຜ່ານຜ່າ ຕໍ່ຄວາມຫຍຸ້ງຍາກ ແລະ ມີນ້ຳໃຈຮັກອາຊີບແພງເດັກ); ເພີ່ມອັດຕາສ່ວນນັກຮຽນຕໍ່ຄູ: ຊັ້ນ ປະຖົມຈາກ

28:1 (1990) ຫາ 33:1 (2000), ຊັ້ນມັດທະຍົມຕົ້ນຈາກ 13:1 (1990)ຫາ 25:1 (2000) ແລະ ຊັ້ນມັດທະຍົມປາຍຈາກ 12:1 (1990) ຫາ 25:1 (2000).

7-ຂະຫຍາຍ ແລະ ສັບຊ້ອນຄືນໃຫມ່ບັນດາໂຮງຮຽນວິຊາຊີບ-ສະຖາບັນການສຶກສາຊັ້ນສູງ ເພື່ອໃຫ້ສອດຄ່ອງກັບຄວາມສາມາດຕົວຈິງ, ພ້ອມທັງສ້າງຕັ້ງມະຫາວິທະຍາໄລແຫ່ງຊາດ ແລະ ວິທະ ຍາໄລ ສັບພະວິຊາຂຶ້ນຢູ່ແຕ່ລະພາກຂອງປະເທດເພື່ອ ຕອບສະໜອງກຳລັງແຮງງານ ໃຫ້ແກ່ການ ພັດທະນາເສດຖະກິດ-ສັງຄົມ.

8-ຍົກຄຸນນະພາບຂອງການສຶກສາທຸກປະເພດໃຫ້ດີຂຶ້ນເທື່ອລະກ້າວໂດຍສະເພາະແມ່ນສາຍສາມັນສຶກສາ ທີ່ເປັນພື້ນຖານໃຫ້ແກ່ການສຶກສາແຫ່ງຊາດມ, ຍົກລະດັບການສອນ-ການຮຽນໃນແຕ່ລະຊັ້ນ ແລະ ແຕ່ລະສາຍໃຫ້ໜຍັບມ່ກັບມາດຕະຖານສາກົນເທື່ອລະກ້າວ.

9-ປັບປຸງການຈັດຕັ້ງ, ການບໍລິຫານ ແລະ ການຄຸ້ມຄອງການສຶກສາໃຫ້ເປັນເອກະພາບ ແລະ ມີແບບແຜນ.

ງ-ຜົນສຳເລັດໃນການຈັດຕັ້ງປະຕິບັດແຕ່ລະແຜນງານ

ເພື່ອເຮັດໃຫ້ທິດທາງ, ຈຸດໝາຍ ແລະ ລະດັບຄາດໝາຍທີ່ໄດ້ກ່າວມາຂ້າງເທິງບັນລຸຜົນເປັນຈິງ, ການກຳນົດແຜນພັດທະນາການສຶກສາ ກໍໄດ້ຮັບການປັບປຸງມາໃນແຕ່ລະປີຮຽນ, ໂດຍສະເພາະແມ່ນໃນກອງປະຊຸມສຶກສາທົ່ວປະເທດປະຈຳປີ 1995 ທີ່ ຫຼວງພະບາງ ໄດ້ຮັບຮອງເອົາແຜນພັດທະນາການສຶກສາ ຕາມ 5 ແຜນງານຄື:

1- ແຜນງານສາມັນ ແລະ ອະນຸບານສຶກສາ,
2- ແຜນງານການສຶກສານອກລະບົບໂຮງຮຽນ,
3- ແຜນງານການກໍ່ສ້າງ ແລະ ບຳລຸງຮັກສາ,
4- ແຜນງານອາຊີວະສຶກສາ ແລະ ມະຫາວິທະຍາໄລ,
5- ແຜນງານການບໍລິຫານ ແລະ ຄຸ້ມຄອງການສຶກສາ.

ຜ່ານການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ 5 ປີຄັ້ງທີ IV (1996-2000) ເປັນຕົ້ນມາຂະແໜງການສຶກສາໄດ້ສູ້ຊົນຈັດຕັ້ງປະຕິບັດບັນດາແຜນງານທີ່ກ່າວຂ້າງເທິງນັ້ນໄດ້ຮັບຜົນສຳເລັດເປັນກ້າວໆມາຊຶ່ງພໍສະຫລຸບສັງລວມໄດ້ດັ່ງລຸ່ມນີ້:

ງ.1-<u>ແຜນງານສາມັນ ແລະ ອະນຸບານສຶກສາ</u>

ການປະຕິບັດແຜນງານສາມັນສຶກສາ ແລະ ອະນຸບານສຶກສາເພື່ອໃຫ້ບັນລຸໄດ້ຕາມຄາດໝາຍທີ່ໄດ້ກຳນົດໄວ້ແມ່ນໄດ້ສູ້ຊົນເຮັດສຳເລັດບາງວຽກງານຄື: ໄດ້ພັດທະນາຫຼັກສູດ ແລະ ປຶ້ມ

ແບບຮຽນໃຫມ່, ປຶ້ມຄູ່ມືຄູ ແລະ ອຸປະກອນຮັບໃຊ້ການສອນ-ການຮຽນເພື່ອຮັບໃຊ້ໃນໂຮງຮຽນສາ ມັນນັບແຕ່ຊັ້ນປະຖົມຮອດຊັ້ນມັດທະຍົມຕອນປາຍ, ທັງນີ້ກໍເພື່ອເຮັດໃຫ້ເນື້ອໃນການສຶກສາສອດ ຄ່ອງກັບສະພາບຄວາມເປັນຈິງໃນປະຈຸບັນ. ອີກດ້ານນຶ່ງກໍເພື່ອຍົກລະດັບຄວາມຮູ້ພື້ນຖານຂຶ້ນໃຫ້ ທຽບມໍ່ກັບມາດຖານສາກົນເທື່ອລະກ້າວ. ນັບແຕ່ປີຮຽນ1994-95 ເປັນຕົ້ນມາໄດ້ພິມປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູ ແຕ່ (ປ1) ຫາ (ມ3) ແລະ ປຶ້ມອື່ນໆ..ໄດ້ອີກຈຳນວນຫນຶ່ງຊຶ່ງໄດ້ນຳໄປແຈກຢາຍໃຫ້ ນັກຮຽນໃນທ່ວປະເທດ, ອັນເຮັດໃຫ້ສະພາບຂາດເຂີນປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູທີ່ແກ່ຍາວມາ ຫຼາຍປີນັ້ນໄດ້ຮັບການແກ້ໄຂໂດຍພື້ນຖານ.

ໄປຄຽງຄູ່ກັບການນຳໃຊ້ຫລັກສູດ ແລະ ປຶ້ມແບບຮຽນໃຫມ່ນັ້ນ, ພວກເຮົາຍັງໄດ້ພັດທະນາວິ ທີການສອນ-ການຮຽນແບບໃຫມ່ນຳອີກ, ຊຶ່ງເປັນການສົ່ງເສີມການມີສ່ວນຮ່ວມ ຂອງນັກຮຽນໃນຊົ່ວ ໂມງສອນ, ແລະ ສົ່ງເສີມຫົວຄິດປະດິດສ້າງຂອງເຂົາເຈົ້າ. ພ້ອມກັນນັ້ນບົດບາດຂອງຄູໃນການສົ່ງ ຄວາມຮູ້ກໍມີການປ່ຽນແປງຈາກ ການສົ່ງຄວາມຮູ້ແບບໃຫ້ທ່ອງຂຶ້ນໃຈ ຫຼື ຍັດສະຫມອງ ໄປສູ່ການ ໃຫ້ຄຳແນະນຳແກ່ນັກຮຽນຫຼາຍກ່ວາ. ໃນການພັດທະນາວິທີການສອນ-ການຮຽນນັ້ນ, ກ່ອນອື່ນ ແມ່ນພວກເຮົາໄດ້ຈັດອົບຮົມໃຫ້ຄູປະຖົມ ແຕ່ (ປ1) ຮອດ (ປ5) ຈຳນວນ 31,225 ເທື່ອຄົນ ແລະ ຄູ ມັດທະຍົມຕອນຕົ້ນ ແຕ່ (ມ1) ຮອດ (ມ3) ໄດ້ 4,165 ເທື່ອຄົນ. ພ້ອມກັນນັ້ນ, ພວກເຮົາຍັງໄດ້ສ້າງ ຕັ້ງລະບົບສຶກສານິເທດຂຶ້ນ ແລະ ໄດ້ຈັດອົບຮົມຄູສຶກສານິເທດຊັ້ນປະຖົມ ຈຳນວນ 403 ຄົນ ແລະ ຊັ້ນມັດທະຍົມ ຈຳນວນ 143 ຄົນ ເພື່ອໃຫ້ເຂົາເຈົ້າມີຄວາມສາມາດ ໃນການລົງຕິດຕາມ, ກວດກາ ແລະ ຊ່ວຍເຫຼືອຄູໃນການແຕ່ງບົດສອນ, ເທັກນິກການສອນ, ການປະເມີນຜົນ, ການຜະລິດ ແລະ ນຳໃຊ້ສື່ການຮຽນ-ການສອນ ແລະ ອື່ນໆ. ເພື່ອສົ່ງເສີມໃຫ້ມີການຊ່ວຍເຫລືອເຊິ່ງກັນແລະກັນ ທາງ ດ້ານວິຊາການ ລະຫວ່າງ ໂຮງຮຽນປະຖົມ ແລະ ທັດທະຍົມດ້ວຍກັນນັ້ນ ພວກເຮົາຍັງໄດ້ໃຫ້ສ້າງຕັ້ງ ກຸ່ມໂຮງຮຽນປະຖົມຂຶ້ນ ຊຶ່ງໃນປະຈຸບັນສ້າງໄດ 145 ກຸ່ມ ໃນທ່ວປະເທດ.

ບັນຫາສຳຄັນອີກອັນຫນຶ່ງໃນການພັດທະນາວຽກງານສາມັນ ແລະ ອະນຸບານສຶກສາໃນຊຸມ ປີຜ່ານມາ, ແມ່ນພວກເຮົາໄດ້ເອົາໃຈໃສ່ສູ້ຊົນຂະຫຍາຍວຽກງານດັ່ງກ່າວ ໄປສູ່ເຂດພູດອຍ ຫ່າງໄກ ສອກຫລີກໃຫ້ຫຼາຍ ແລະ ໄວເທົ່າທີ່ຈະເຮັດໄດ້. ພ້ອມກັນນັ້ນກໍໄດ້ສ້າງຕັ້ງໂຮງຮຽນສາມັນກິນນອນ ຊົນເຜົ່າຂຶ້ນຢູ່ໃນບ່ອນທີ່ມີເງື່ອນໄຂ ແລະ ມີຄວາມຈຳເປັນ ຊຶ່ງໃນປັດຈຸບັນມີໂຮງຮຽນກິນ ນອນຊົນ ເຜົ່າ 18 ແຫ່ງ, ມີນັກຮຽນ 9,357 ຄົນ/ຍິງ 2,861 ຄົນ ຊຶ່ງເຮັດໃຫ້ອັດຕາສ່ວນເດັກຊົນເຜົ່າໄດ້ເຂົ້າ ຮຽນນັບມື້ນັບຫຼາຍຂຶ້ນ.

ໄປພ້ອມໆກັບການເອົາໃຈໃສ່ນັກຮຽນຊົນເຜົ່າຄືໄດ້ເວົ້າມາ, ພວກເຮົາຍັງໄດ້ສົ່ງເສີມເດັກທີ່ດ້ອຍໂອກາດ ແລະ ພິການນຳອີກເຊັ່ນ: ໄດ້ສ້າງໂຄງການການສຶກສາຂັ້ນພື້ນຖານເພື່ອເດັກຍິງຊຶ່ງລວມມີການປຸກສ້າງໂຮງຮຽນປະຖົມ, ການກໍ່ສ້າງຄູໃຫ້ເຂດຊົນເຜົ່າ ແລະ ອື່ນໆ... ພ້ອມດຽວກັນນັ້ນກໍໄດ້ດຳເນີນໂຄງການ ການຮຽນຮ່ວມລະຫວ່າງເດັກພິການ ແລະ ເດັກປົກກະຕິ ຢູ່ໃນ 4 ແຂວງ ຊຶ່ງມາເຖິງປີຮຽນ 1999-2000 ນີ້ ມີເດັກພິການເຂົ້າຮຽນຮ່ວມກັບເດັກປົກກະຕິຈຳນວນ 237 ຄົນ, ໃນນີ້ ມີເດັກພິການທາງດ້ານມັນສະໝອງ 153 ຄົນ ແລະ ທາງຮ່າງກາຍ 84 ຄົນ.

ເພື່ອໃຫ້ສອດຄ່ອງກັບລະບົບການສຶກສາຂອງໂລກ ແລະ ເພື່ອຍົກປະສິດທິພາບຂອງການສຶກສາໃຫ້ສູງຂຶ້ນ, ໂດຍສະເພາະແມ່ນການນຳໃຊ້ຄູ, ພວກເຮົາໄດ້ຈັດສັນຕາໜ່ງໂຮງຮຽນປະຖົມຄືນໃໝ່, ເຮັດໃຫ້ອັດຕາສ່ວນນັກຮຽນຕໍ່ຄູໃນຊັ້ນປະຖົມ ເພີ່ມຂຶ້ນຈາກ 28:1 1995-96 ມາເປັນ 30:1 ໃນປີ 2000. ໄດ້ປັບປຸງຕາໜ່ງໂຮງຮຽນມັດທະຍົມ ໂດຍຈັດໃຫ້ມີມັດທະຍົມສົມບູນໃນບ່ອນດຽວກັນ ຫຼື ມັດທະຍົມຕອນຕົ້ນ ແລະ ມັດທະຍົມຕອນປາຍຢູ່ບ່ອນຕ່າງກັນ, ອັນເຮັດໃຫ້ອັດຕາສ່ວນນັກຮຽນຕໍ່ຄູໃນຊັ້ນມັດທະຍົມເພີ່ມຂຶ້ນຈາກ 16:1 (1995-96) ມາເປັນ 22:1 ໃນປີ 2000.

ໃນຊຸມປີຜ່ານມາ, ນອກຈາກໄດ້ພັດທະນາການສຶກສາ ຢູ່ໃນພາກລັດແລ້ວ, ພວກເຮົາຍັງມີນະໂຍບາຍສົ່ງເສີມການສຶກສາພາກເອກະຊົນອີກ ແລະ ຖືການສຶກສາພາກເອກະຊົນເປັນພາກສ່ວນໜຶ່ງຂອງລະບົບການສຶກສາແຫ່ງຊາດ. ເຖິງວ່າຈຳນວນນັກຮຽນ ຂອງການສຶກສາພາກເອກະຊົນຍັງມີໜ້ອຍແຕ່ກໍມີການຂະຫຍາຍຕົວເປັນກ້າວໆມາ, ໂດຍສະເພາະ ໃນຊັ້ນອະນຸບານເຖິງຊັ້ນມັດທະຍົມຕອນຕົ້ນ. ໃນປີຮຽນ 1995-96, ມີນັກຮຽນ 23,482 ຄົນ/ຍິງ 10,568 ຄົນ ມາເຖິງປີຮຽນ 1999-2000 ນີ້ ໄດ້ເພີ່ມຂຶ້ນເຖິງ 25,466 ຄົນ/ຍິງ 11,615 ຄົນ ເພີ່ມຂຶ້ນ 8.4%. ເຖິງຢ່າງໃດກໍດີ ການຂະຫຍາຍໂຮງຮຽນເອກະຊົນ ຍັງຊັກຊ້າ ແລະ ມີແຕ່ຢູ່ໃນຕົວເມືອງເທົ່ານັ້ນ.

ເພື່ອຂະຫຍາຍການສຶກສາໃຫ້ມີລັກສະນະກ້ວາງຂວາງຂຶ້ນຕື່ມ, ຜ່ານມາພວກເຮົາຍັງໄດ້ສົມທົບກັບອົງການ ພ.ສ.ລ. ໃນການປັບປຸງວຽກງານສຶກສາສົງໃຫ້ເປັນລະບົບ ແລະ ເປັນຮູບຮ່າງດີຂຶ້ນເທື່ອລະກ້າວ ພ້ອມທັງໄດ້ສົ່ງເສີມໃຫ້ພະສົງມີຄວາມຮັບຜິດຊອບ ຕໍ່ວຽກງານສຶກສາສົງຫຼາຍຂຶ້ນ. ໃນບໍ່ດົນມານີ້ ໄດ້ມີດຳລັດຫັນໂຮງຮຽນສ້າງຄູສົງຊັ້ນກາງ ເປັນວິທະຍາໄລສົງ ຊຶ່ງເປັນການຍົກຖານະສຶກສາສົງໃຫ້ສູງຂຶ້ນກ່ວາເກົ່າ. ພ້ອມດຽວກັນນີ້ ກໍໄດ້ປັບປຸງລະບົບການສຶກສາສົງ ແລະ ຫລັກສູດສຶກສາສົງຄືນໃໝ່ໂດຍມີການດຸ່ນດ່ຽງປະລິມານຄວາມຮູ້ວິທະຍາສາດ ແລະ ທຳມະວິໄນໃຫ້ເໝາະສົມກ່ວາເກົ່າ.

ໃນໄລຍະຜ່ານມາ, ໂຮງຮຽນສາມັນຊັ້ນຕ່າງໆ ໂດຍສະເພາະໃນບ່ອນທີ່ມີເງື່ອນໄຂ ແລະ ມີ ຄູທີ່ຮັບຜິດຊອບ ກໍໄດ້ຈັດໃຫ້ມີການເຄື່ອນໄຫວວຽກງານພະລະສຶກສາ ແລະ ສິລະປະສຶກສາຕາມ ໂຄງການຫລັກສູດທີ່ໄດ້ວາງໄວ້, ທັງໄດ້ຈັດໃຫ້ມີການແຂ່ງຂັນກິລາ, ການເຝິກແອບສິລະປະວັນນະ ຄະດີ ເພື່ອນໍາໄປສະແດງໃນວັນບຸນ ຫຼື ວັນສໍາຄັນຕ່າງໆຂອງຊາດ. ພ້ອມດຽວກັນນັ້ນ ກໍໄດ້ຈັດໃຫ້ມີ ການແຂ່ງຂັນແຕ້ມຮູບຊຶ່ງຜ່ານມາກໍໄດ້ສົ່ງຮູບແຕ້ມດັ່ງກ່າວໄປແຂ່ງຂັນທີ່ຕ່າງປະເທດຊຶ່ງຈໍານວນນຶ່ງ ກໍໄດ້ຮັບລາງວັນ ຢູ່ໃນລະດັບດີສົມຄວນ.

ເພື່ອສົ່ງເສີມນັກຮຽນດີ, ຮຽນເກັ່ງ, ໄລຍະຜ່ານມາທົ່ວຂະແໜງສຶກສາກໍໄດ້ຈັດຕັ້ງໃຫ້ມີການ ສອບເສັງນັກຮຽນເກ່ງ ທາງດ້ານວັນນະຄະດີ ແລະ ຄະນິດສາດ. ການສອບເສັງດັ່ງກ່າວໄດ້ກາຍ ເປັນການສົ່ງເສີມພອນສະຫວັນຂອງນັກຮຽນ ແລະ ເປັນການປຸກລະດົມຂະບວນການສອນ-ການ ຮຽນໃຫ້ດີຂຶ້ນເທື່ອລະກ້າວ ແລະ ໄດ້ອະນຸມັດຮັບເອົານັກຮຽນຜູ້ທີ່ຊະນະເລີດໃຫ້ມີສິດເຂົ້າຮຽນຕໍ່ ພາຍໃນ ຫລື ກຽມໄປຮຽນຕໍ່ຕ່າງປະເທດຕາມພອນສະຫວັນ ແລະ ເງື່ອນໄຂຂອງແຕ່ລະຄົນ.

ຈາກການດໍາເນີນວຽກງານຕ່າງໆທີ່ກ່າວມາຂ້າງເທິງ ໄດ້ເຮັດໃຫ້ວຽກງານສາມັນ ແລະ ອະນຸ ບານສຶກສາຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ. ໃນປີຮຽນ 1999-2000 ໄດ້ມີ:

- ໂຮງລ້ຽງເດັກ ແລະ ໂຮງຮຽນອະນຸບານ 741 ແຫ່ງທຽບໃສ່ສົກຮຽນ 1995-96 ມີ 744 ແຫ່ງ ຫລຸດລົງ 3 ແຫ່ງ, ມີເດັກ ແລະ ນັກຮຽນອະນຸບານ 37,786 ຄົນ/ຍິງ 19,477 ເພີ່ມຂຶ້ນ 7.8% ແລະ ໂດຍສະເລ່ຍແລ້ວຈໍານວນນັກຮຽນໄດ້ເພີ່ມຂຶ້ນ 1.6%/ປີ ແລະ ມີນາງລ້ຽງເດັກ-ຄູອະນຸ ບານ 2,205 ຄົນ ເພີ່ມຂຶ້ນ 10%.
- ໂຮງຮຽນປະຖົມ 8,161 ແຫ່ງ ທຽບໃສ່ປີຮຽນ 1995-96 ມີ 7,789 ແຫ່ງ ເພີ່ມຂຶ້ນ 4.8%, ມີນັກ ຮຽນ 831,521 ຄົນ ເພີ່ມຂຶ້ນຈາກ 757,508 ຄົນ ໃນສົກຮຽນ (1995-96) ເພີ່ມຂຶ້ນ 9.8% (ໂດຍສະເລ່ຍເປັນ 2.0%/ປີ) ແລະ ມີຄູປະຖົມເພີ່ມຂຶ້ນຈາກ 24,793 ຄົນ ເປັນ 27,592 ຄົນ ເພີ່ມຂຶ້ນ 11.3%.
- ອັດຕາສ່ວນເຂົ້າຮຽນສຸດທິຂອງເດັກ ໃນເກນອາຍຸແຕ່ 6-10 ປີ ໄດ້ເພີ່ມຂຶ້ນຈາກ 62% ໃນປີ 1995-96 ເປັນ 77.3% ໃນປີ 1999-2000 ຄາດໝາຍທົ່ວໆໄວ້ສໍາລັບປີ 2000 ແມ່ນ 80%, ອັດຕາສ່ວນເຂົ້າຮຽນລວມ ໄດ້ຫລຸດຈາກ 113% ເປັນ 109%. ນັກຮຽນທີ່ຮຽນຈົບປະຖົມ ໃນປີຮຽນ 1999-2000 ມີ 79,657 ຄົນ, ຖ້າທຽບໃສ່ປີຮຽນ 1995-96 ເພີ່ມຂຶ້ນ 27.7%. ໃນ 5 ປີຜ່ານມາມີນັກຮຽນທີ່ຮຽນຈົບປະຖົມທັງໝົດ 389,334 ຄົນ.
- ອັດຕາການລອດເຫລືອຂອງນັກຮຽນທີ່ເຂົ້າ (ປ1) ຮອດ (ປ5) ໄດ້ເພີ່ມຈາກ 27% ໃນປີຮຽນ 1995-96 ເປັນ 53% ໃນປີຮຽນ1999-2000 ຄາດໝາຍທົ່ວໆສໍາລັບປີ 2000 ແມ່ນ 63%.

- ໂຮງຮຽນມັດທະຍົມຕອນຕົ້ນມີ 589 ແຫ່ງ, ທຽບໃສ່ປີຮຽນ 1995-96 ມີ 713 ແຫ່ງ ຫລຸດລົງ 21% ມີນັກຮຽນ 183,588 ຄົນ ໄດ້ເພີ່ມຂຶ້ນຈາກ 119,771 ຄົນ ເປັນ 61.7% ໂດຍສະເລ່ຍ ເປັນ 12.3%/ປີ ແລະ ມີຄູສອນຊັ້ນມັດທະຍົມເພີ່ມຂຶ້ນຈາກ 9,969 ຄົນ ເປັນ 12,875 ຄົນ ເປັນ 29.2%, · ສັງລວມແລ້ວການຂະຫຍາຍຕົວຂອງຊັ້ນມັດທະຍົມໄດ້ເພີ່ມຂຶ້ນໄວເກີນຄາດຫມາຍທີ່ວາງໄວ້ບາງເລັກນ້ອຍ.
- ນັກຮຽນທີ່ຮຽນຈົບມັດທະຍົມຕອນຕົ້ນ ໃນປີຮຽນ 1999-2000 ມີ 30,772 ຄົນ, ຖ້າທຽບໃສ່ປີຮຽນ 1995-96 ເພີ່ມຂຶ້ນ 71.61%, ໃນ 5 ປີຜ່ານມາມີນັກຮຽນທີ່ຮຽນຈົບມັດທະຍົມຕອນຕົ້ນ ທັງຫມົດ 155,666 ຄົນ.
- ໃນປີຮຽນ 1999-2000 ມີນັກຮຽນທີ່ຮຽນຈົບມັດທະຍົມຕອນປາຍ 12,093 ຄົນ, ຖ້າທຽບໃສ່ປີຮຽນ 1995-96 ເພີ່ມຂຶ້ນ 88.84%, ໃນ 5 ປີຜ່ານມາມີນັກຮຽນທີ່ຮຽນຈົບມັດທະຍົມຕອນປາຍ ທັງຫມົດ 61,626 ຄົນ.

ສັງລວມແລ້ວວຽກງານສາມັນ ແລະ ອະນຸບານສຶກສາ ໃນຊ່ວງ 5 ປີຜ່ານມາ ນັບທັງດ້ານປະລິມານ ແລະ ຄຸນນະພາບ ໄດ້ມີການຂະຫຍາຍຕົວດີສົມຄວນ. ການສອນ-ການຮຽນໄດ້ປ່ຽນແປງໄປຕາມວິທີການແບບໃຫມ່, ຜົນຂອງການສອບເສັງເລື່ອນຊັ້ນ ແລະ ຈົບຊັ້ນກໍຄ່ອຍໆດີຂຶ້ນ. ນັກຮຽນສາມັນສ່ວນຫຼາຍມີກິລິຍາມາລະຍາດດີ, ສາມາດອ່ານອອກຂຽນໄດ້, ຄິດເປັນ, ເຮັດເປັນສົມຄູ່ກັບລະດັບຊັ້ນຮຽນຂອງເຂົາເຈົ້າດີລົ້ນກ່ວາແຕ່ກ່ອນ.

ເຖິງຢ່າງໃດກໍດີວຽກງານສາມັນ ແລະ ອະນຸບານສຶກສາ ກໍຍັງມີຂໍ້ຄົງຄ້າງບາງປະການ ເຊັ່ນ: -ການຂະຫຍາຍການສຶກສາໄປສູ່ເຂດຊົນນະບົດ, ພູດອຍຍັງຊັກຊ້າ, ຍັງມີລັກສະນະແຕກໂຕນກັນຫຼາຍລະຫວ່າງຕົວເມືອງ-ພູດອຍ ແລະ ລະຫວ່າງແຂວງຕໍ່ແຂວງ ແລະ ເມືອງຕໍ່ເມືອງ ເຊັ່ນຢູ່ກຳແພງນະຄອນວຽງຈັນອັດຕາສ່ວນເຂົ້າຮຽນສຸດທິ ມີເຖິງ 98.5% (1999-2000), ແຕ່ໃນຂະນະດຽວກັນນີ້ຢູ່ແຂວງຜົ້ງສາລີ, ເຂດພິເສດໄຊສົມບູນ ແລະ ເຊກອງ ມີພຽງແຕ່ 44%, 46% ແລະ 37% ຕາມລຳດັບ ແລະ ກໍມີເຖິງ 9 ແຂວງໃນຈຳນວນ 18 ແຂວງ, ຊຶ່ງອັດຕາສ້ວນເຂົ້າຮຽນສຸດທິບໍ່ທັນເຖິງ 70% ແລະ ໃນຊ່ວງ 2 ສົກຮຽນຫລັງນີ້ການເຂົ້າຮຽນຂອງຊັ້ນປະຖົມມີທ່າອ່ຽງຫລຸດລົງ. ອັດຕາສ່ວນນັກຮຽນຍິງໃນເຂດຫ່າງໄກ-ສອກຫລີກທຽບໃສ່ຈຳນວນນັກຮຽນລວມກໍເຫັນວ່າຍັງຕ່ຳ, ອັດຕາສ່ວນເຂົ້າຮຽນຂອງນັກຮຽນຊົນເຜົ່າກໍຍັງມີຫນ້ອຍ. ຄຸນນະພາບຂອງສາມັນສຶກສາເຖິງວ່າມີທ່າອ່ຽງດີຂຶ້ນ, ແຕ່ຖ້າທຽບໃສ່ຄວາມຮຽກຮ້ອງຕ້ອງການແລ້ວ ກໍເຫັນວ່າຍັງຕ່ຳຢູ່ ຍັງມີນັກຮຽນປະຖົມປະມານ 20% ຄ້າງຫ້ອງ ແລະ ປະມານ 10% ປະລະການຮຽນ. ຈຸດຫນັກແມ່ນຢູ່ຊັ້ນ (ป1) ແລະ (ป2) ຊຶ່ງມີອັດຕາຄ້າງຫ້ອງສູງເຖິງ 38% ແລະ 21% ແລະ ອັດຕາປະລະການຮຽນສູງເຖິງ 13% ແລະ 8% ຕາມ

ລຳດັບ. ຈາກນັ້ນສະແດງໃຫ້ເຫັນວ່າປະສິດທິພາບພາຍໃນຍັງຕ່ຳ, ຜ່ານການປະເມີນຜົນການຮຽນຂອງເດັກໃນບາງແຂວງເຫັນວ່ານັກຮຽນສ່ວນຫລາຍຍັງອ່ອນດ້ານຄະນິດສາດ ແລະ ພາສາລາວ ເຊິ່ງຍັງບໍ່ທັນໄດ້ຕາມຄາດໝາຍຂອງຫລັກສູດທີ່ວາງໄວ້. ນອກຈາກນັ້ນ ກໍຍັງເຫັນວ່າການສະໜອງຄູກໍຍັງບໍ່ພຽງພໍ, ໂດຍສະເພາະແມ່ນຄູສອນຢູ່ເຂດຊົນນະບົດຫ່າງໄກ ແລະ ເຂດຊົນເຜົ່າ ແລະ ຄູສອນໃນບາງວິຊາຄື: ຄະນິດສາດ, ວັນນະຄະດີ, ພາສາຕ່າງປະເທດ, ພະລະສຶກສາ, ສິລະປະສຶກສາ ແລະ ເທັກໂນໂລຢີ, ຈຶ່ງເຮັດໃຫ້ການສຶກສາຍັງບໍ່ທັນຄົບຊຸດ ແລະ ຮອບດ້ານ. ການສະໜອງວັດຖຸອຸປະກອນ, ປຶ້ມແບບຮຽນ ໃຫ້ແກ່ໂຮງຮຽນໃນທ້ອງຖິ່ນຕ່າງໆ ຍັງຊັກຊ້າ ແລະ ບໍ່ທັນພຽງພໍຕາມຄວາມຕ້ອງການ. ນັກຮຽນຈຳນວນໜຶ່ງຖືເບົາຕໍ່ການຮ່ຳຮຽນ, ແລະ ການເຝິກຝົນແນວຄິດຄຸນສົມບັດ, ຝ່າຝືນລະບຽບວິໄນ ໂດຍສະເພາະແມ່ນນັກຮຽນຢູ່ໃນຕົວເມືອງ.

1.2-<u>ແຜນງານການສຶກສານອກລະບົບໂຮງຮຽນ</u>

ການປະຕິບັດແຜນງານການສຶກສານອກລະບົບໂຮງຮຽນແມ່ນເລັ່ງໃສ່ການລົບລ້າງຄວາມບໍ່ຮູ້ໜັງສື ແລະ ບຳລຸງຍົກລະດັບການສຶກສາ ໃຫ້ແກ່ພະນັກງານ ແລະ ປະຊາຊົນບັນດາເຜົ່າ. ນັບແຕ່ປີຮຽນ 1991-92 ເຖິງ 1994-95 ເຫັນໄດ້ວ່າ ການລົບລ້າງຄວາມບໍ່ຮູ້ໜັງສື ແລະ ບຳລຸງຍົກລະດັບການສຶກສາ ໄດ້ມີລັກສະນະຊຸດໂຊມ. ຈຳນວນຜູ້ຮຽນຫລຸດລົງ, ໂຮງຮຽນບຳລຸງຫຼາຍແຫ່ງໄດ້ຢຸດຕິການສອນ, ທັງນີ້ ກໍຍ້ອນວ່າສິ່ງແວດລ້ອມທາງສັງຄົມມີການປ່ຽນແປງ, ເນື້ອໃນ, ຮູບແບບ ແລະ ວິທີການຈັດຕັ້ງການຮຽນ-ການສອນ ບໍ່ສອດຄ່ອງກັບສະພາບຄວາມເປັນຈິງ ແລະ ຄວາມຮຽກຮ້ອງຕ້ອງການຂອງຜູ້ຮຽນ.

ເພື່ອແກ້ໄຂສະພາບການດັ່ງກ່າວ, ນັບແຕ່ປີຮຽນ 1995-96 ເປັນຕົ້ນມາ ໄດ້ມີການປັບປຸງວິທີການຈັດຕັ້ງຄຸ້ມຄອງ, ເນື້ອໃນຫຼັກສູດ ແລະ ຮູບແບບການຮຽນ-ການສອນ ໃນການລົບລ້າງຄວາມບໍ່ຮູ້ໜັງສື ແລະ ບຳລຸງຍົກລະດັບການສຶກສາຄົນໃຫມ່ ໂດຍເອົາການຮຽນໜັງສື ຄວບຄູ່ກັບການອົບຮົມວິຊາຊີບ, ເຮັດໃຫ້ການຮຽນຕິດພັນກັບຜົນປະໂຫຍດ , ແລະ ການຍົກລະດັບຄຸນນະພາບຊີວິດຂອງຜູ້ຮຽນໃຫ້ດີຂຶ້ນ. ພ້ອມກັນນັ້ນ ກໍມີນະໂຍບາຍຕໍ່ວຽກງານສຶກສານອກລະບົບໂຮງຮຽນເໝາະສົມກວ່າເກົ່າ, ໂດຍສະເພາະແມ່ນນະໂຍບາຍຕໍ່ຜູ້ສອນເຊິ່ງດຳເນີນດ້ວຍ 2 ຮູບການ ຄື: ຮູບການມອບເໝົາ ແລະ ຮູບການເບີກຈ່າຍເປັນເງິນເດືອນ, ຈາກນັ້ນເຮັດໃຫ້ການລະດົມຄູໄປສອນ ກໍມີຄວາມສະດວກກ່ວາເກົ່າ ແລະ ເຮັດໃຫ້ການຮຽນລົບລ້າງຄວາມບໍ່ຮູ້ໜັງສື ແລະ ບຳລຸງຍົກລະດັບການສຶກສາ ກໍ່ຄ່ອຍໆດີຂຶ້ນເທື່ອລະກ້າວ. ຊຶ່ງສະແດງອອກໃນຜົນໄດ້ຮັບດັ່ງລຸ່ມນີ້ :

ນັບແຕ່ປີຮຽນ 1995-96 ເຖິງ 1999-2000 ສາມາດລົບລ້າງຄວາມບໍ່ຮູ້ໜັງສືໃຫ້ປະຊາຊົນບັນດາເຜົ່າ ໃນເກນອາຍຸ 15-40 ປີໄດ້ 191,205 ຄົນ/ຍິງ 109,139 ຄົນ.- ອັນໄດ້ເຮັດໃຫ້ອັດຕາສ່ວນຜູ້ຮູ້ໜັງສື ເພີ່ມຂຶ້ນຈາກ 60% ໃນປີຮຽນ 1995-96 ເປັນ 77.5% ໃນປີຮຽນ 1999-2000, ຄາດໝາຍທີ່ວາງໄວ້ສຳລັບປີ 2000 ແມ່ນ 80%.

ປະຊາຊົນ ແລະ ພະນັກງານຈົບບຳລຸງຊັ້ນປະຖົມມີ 64,306 ຄົນ/ຍິງ 30,169 ຄົນ, ບັນລຸໄດ້ 33.6% ຂອງຜູ້ທີ່ລົບລ້າງແລ້ວ, ຄາດໝາຍທີ່ວາງໄວ້ສຳລັບປີ 2000 ແມ່ນ 50% ຂອງຈຳນວນຜູ້ທີ່ລົບລ້າງແລ້ວ; ຈົບມັດທະຍົມຕອນຕົ້ນມີ 4,011 ຄົນ/ຍິງ 606 ຄົນ, ຈົບມັດທະຍົມຕອນປາຍ ມີ 5,860 ຄົນ/ຍິງ 1,338 ຄົນ.

ໄປຄຽງຄູ່ກັບການລົບລ້າງຄວາມບໍ່ຮູ້ໜັງສື ແລະ ບຳລຸງຍົກລະດັບການສຶກສາທີ່ໄດ້ເວົ້າມາ ພວກເຮົາຍັງໄດ້ຈັດຕັ້ງການເຝິກອົບຮົມວິຊາຊີບຕ່າງໆເຊັ່ນ: ຕຳໜູກ, ຕັດຫຍິບ, ປຸງແຕ່ງອາຫານ, ກໍ່ສ້າງ, ຊ່າງໄມ້, ລ້ຽງໄກ່, ລ້ຽງປາ, ປູກຜັກ, ປູກຕົ້ນໄມ້ກິນໝາກໃຫ້ປະຊາຊົນຈຳນວນ 6,610 ຄົນ/ຍິງ 4,450 ຄົນ, ອັນໄດ້ເຮັດໃຫ້ຊີວິດການເປັນຢູ່ຂອງເຂົາເຈົ້າດີຂຶ້ນຕົວຢ່າງ: ບ້ານໜອງເປັດ (ແຂວງຊຽງຂວາງ), ບ້ານນາຊາຍທອງ (ແຂວງອຸດົມໄຊ) ແລະ ບ້ານແກ້ວກູ່ (ແຂວງວຽງຈັນ). ນອກນັ້ນຍັງໄດ້ປັບປຸງບູລະນະໂຮງຮຽນບຳລຸງຂັ້ນແຂວງ 14 ແຫ່ງ, ຂັ້ນເມືອງ 33 ແຫ່ງ, ໂຮງຮຽນບຳລຸງຂອງກະຊວງປ້ອງກັນຊາດ 2 ແຫ່ງ (ທີ່ຈີ່ນາຍໄມ້ ແລະ ປາກເຊ), ກະຊວງພາຍໃນ 1 ແຫ່ງ ຫຼັກ 62 (ແຂວງວຽງຈັນ). ສ້າງຕັ້ງສູນການສຶກສານອກລະບົບໂຮງຮຽນຂັ້ນພາກ 3 ແຫ່ງ ແລະ ສູນກາງ 1 ແຫ່ງ, ສູນການສຶກສາທາງໄກ 3 ແຫ່ງ, ສູນວິຊາຊີບ 4 ແຫ່ງ, ສູນສຶກສາຊຸມຊົນ ແລະ ເຝິກອົບຮົມວິຊາຊີບ 168 ແຫ່ງ, ພິເສດໄດ້ຈັດຕັ້ງຫ້ອງບຳລຸງໃຫ້ພະນັກງານອ້ອມຂ້າງສູນກາງຊຸດທຳອິດຈຳນວນ 40 ຄົນ ແລະ ໄດ້ຈັດຕັ້ງບຳລຸງພາສາອັງກິດໃຫ້ພະນັກງານ ຊຶ່ງມີຜູ້ເຂົ້າຮຽນຈຳນວນ 332 ຄົນ/ ຍິງ 56 ຄົນ.

ເພື່ອຮັບໃຊ້ໃຫ້ແກ່ວຽກງານການລົບລ້າງຄວາມບໍ່ຮູ້ໜັງສືກໍຄືການຍົກລະດັບການສຶກສານັ້ນ, ພວກເຮົາໄດ້ສຳເລັດການສ້າງຫຼັກສູດ, ປຶ້ມແບບຮຽນຂັ້ນລົບລ້າງ ແລະ ຊັ້ນປະຖົມ, ຫຼັກສູດທົດລອງຊັ້ນມັດທະຍົມຕອນຕົ້ນ ແລະ ມັດທະຍົມຕອນປາຍ, ປຶ້ມແບບຮຽນວິຊາຊີບ 14 ວິຊາ, ປຶ້ມອ່ານເສີມ ແລະ ໜັງສືພິມຊາວໜ້ານຈຳນວນໜຶ່ງ.

ສັງລວມແລ້ວ, ເຫັນວ່າໃນວຽກງານລົບລ້າງຄວາມບໍ່ຮູ້ໜັງສື ແລະ ບຳລຸງຍົກລະດັບການສຶກສາເປັນວຽກງານໜຶ່ງທີ່ຫຍຸ້ງຍາກສັບສົນທີ່ສຸດ, ແຕ່ພວກເຮົາກໍໄດ້ເອົາໃຈໃສ່ຊອກທຸກວິທີເພື່ອເຮັດໃຫ້ຂະບວນການຮຽນ-ການສອນດີຂຶ້ນ. ອັນເດັ່ນກ່ວາໝູ່ແມ່ນພວກເຮົາໄດ້ເອົາການລົບລ້າງຄວາມ

ບໍ່ຮູ້ຫນັງສືຄວບຄູ່ກັບການຝຶກອົບຮົມວິຊາຊີບຂັ້ນພື້ນຖານ ເພື່ອແນໃສ່ຍົກລະດັບຄວາມຮູ້ ແລະ ຄຸນ ນະພາບຊີວິດຂອງຜູ້ຮຽນໃຫ້ດີຂຶ້ນ. ພ້ອມກັນນັ້ນ ກໍໄດ້ມີນະໂຍບາຍກະຕຸກຊຸກຍູ້ແກ່ຜູ້ສອນພ້ອມ ທັງມີຫຼັກສູດ ແລະ ປຶ້ມຮຽນລຶບລ້າງທີ່ໄດ້ຮັບການປັບປຸງໃຫມ່, ອັນເຮັດໃຫ້ຂະບວນການດັ່ງກ່າວ ພາຍໃນ 5 ປີຜ່ານມານີ້ ມີຂະບວນດີກວ່າຊ່ວງໄລຍະ 5 ປີກ່ອນ (1991-95).

ຄຽງຄູ່ກັບຈຸດດີທີ່ກ່າວມາຂ້າງເທິງນັ້ນອົງການການສຶກສານອກລະບົບໂຮງຮຽນກໍມີຂໍ້ຄົງ ຄ້າງບາງປະການ ດັ່ງນີ້ :

ການລຶບລ້າງຄວາມບໍ່ຮູ້ໜັງສື ແລະ ບຳລຸງຍົກລະດັບການສຶກສາ ຍັງບໍ່ທັນເປັນຂະບວນ ກວ້າງຂວາງ; ບຸກຄະລາກອນຮັບຜິດຊອບການສຶກສານອກລະບົບໂຮງຮຽນຢູ່ຂັ້ນພື້ນຖານຍັງຂາດ ທາງດ້ານປະລິມານ ແລະ ຄຸນະພາບ. ຜູ້ສອນລຶບລ້າງຄວາມບໍ່ຮູ້ໜັງສືສ່ວນຫຼາຍແມ່ນຄູອາສາສະ ມັກຊາວບ້ານ ຊຶ່ງຄວາມຮູ້-ຄວາມສາມາດຍັງຈຳກັດ, ຈຳນວນຫນຶ່ງຍັງບໍ່ທັນໄດ້ຮັບການເຝິກອົບຮົມ ກ່ຽວກັບການນຳໃຊ້ປຶ້ມລຶບລ້າງ ແລະ ວິທີສອນຜູ້ໃຫຍ່; ການສອນບໍ່ໄປຕາມຫຼັກສູດທີ່ວາງໄວ້, ເຮັດ ໃຫ້ຜົນຂອງການຮ່ຳຮຽນບໍ່ທັນຮັບປະກັນ, ເບິ່ງລວມແລ້ວ, ຄຸນະພາບຂອງການລຶບລ້າງຍັງຕ່ຳ. ພາຍ ຫຼັງລຶບລ້າງແລ້ວ ພັດບໍ່ໄດ້ສືບຕໍ່ຮຽນຢ່າງຕໍ່ເນື່ອງ ຈຶ່ງເຮັດໃຫ້ມີການກັບຄືນ; ອີກດ້ານຫນຶ່ງ ນັກຮຽນ ປະຖົມທີ່ປະລະການຮຽນ ໄດ້ສົ່ງຜົນໃຫ້ມີການກັບໜັງສືໃຫມ່ເກີດຂຶ້ນ, ສົ່ການຮຽນ-ການສອນ, ອຸປະ ກອນຮັບໃຊ້ບໍ່ພຽງພໍກັບຄວາມຮຽກຮ້ອງຕ້ອງການຂອງກຸ່ມເປົ້າຫມາຍ. ນອກນັ້ນກໍຍັງເຫັນວ່າລະ ບຽບຫຼັກການໃນການຄຸ້ມຄອງ, ລະບົບຂ່າວສານຂໍ້ມູນຍັງບໍ່ທັນສົມບູນຮັບປະກັນຄວາມຊັດເຈນ; ການຕິດຕາມຊຸກຍູ້ ແລະ ກວດກາຍັງບໍ່ເປັນປົກກະຕິ, ຈາກນັ້ນ ຈຳນວນຜູ້ບໍ່ຮູ້ຫນັງສືຈຶ່ງຍັງມີຫຼາຍ.

1.3-<u>ແຜນງານການກໍ່ສ້າງ ແລະ ບຳລຸງຄູ</u>

ຄູ ແມ່ນຂອດສຳຄັນ ແລະ ມີລັກສະນະຕັດສິນກວ່າໝູ່ໃນການປັບປຸງຄຸນນະພາບຂອງການ ສຶກສາ. ເຖິງຈະມີຫຼັກສູດ ແລະ ປຶ້ມແບບຮຽນໃຫມ່, ມີພື້ນຖານວັດຖຸອຸປະກອນພຽງພໍ ແລະ ທັນສະ ໄຫມປານໃດກໍຕາມ, ຖ້າຄູຫາກບໍ່ມີຄຸນນະພາບແລ້ວກໍຍາກທີ່ຈະຍົກຄຸນນະພາບຂອງການສຶກສາ ຂຶ້ນໄດ້. ໂດຍເຫັນໄດ້ຄວາມສຳຄັນຂອງຄູ ຄືໄດ້ເວົ້າມາ ພວກເຮົາຈຶ່ງໄດ້ຖືແຜນພັທະນາຄູເປັນພາກ ສ່ວນນຶ່ງທີ່ສຳຄັນຂອງແຜນພັດທະນາການສຶກສາແຫ່ງຊາດ. ແຜນງານດັ່ງກ່າວແນໃສ່ເຮັດໃຫ້ຄູມີລະ ດັບຄວາມຮູ້, ຄວາມສາມາດມີທັດສະນະຫຼັກທມັ້ນແນວຄິດການເມືອງດີ, ມີຄວາມຮັບຜິດຊອບ ແລະ ມີຄຸນນະທຳ.

ການປະຕິບັດແຜນງານການກໍ່ສ້າງ ແລະ ບຳລຸງຄູກ່ອນແມ່ນໄດ້ເລີ່ມຈາກການປັບປຸງຕາ ໜ່ວຍໂຮງຮຽນສ້າງຄູຄືໜຸດຈຳນວນໂຮງຮຽນສ້າງຄູລົງຈາກ 45 ແຫ່ງ ໃນປີຮຽນ-1991-92 ໃຫ້ເຫຼືອ ແຕ່ 9 ແຫ່ງໃນປີຮຽນ 1999-2000, ນັບທັງຄະນະສຶກສາສາດຂອງມະຫາວິທະຍາໄລແຫ່ງຊາດ ທັງ ນີ້ກໍເພື່ອໃຫ້ສອດຄ່ອງກັບຄວາມສາມາດຕົວຈິງ, ໂດຍສະເພາະແມ່ນຄວາມສາມາດດ້ານການເງິນ ແລະ ການຄຸ້ມຄອງຂອງພວກເຮົາ, ອີກດ້ານຫນຶ່ງກໍເພື່ອເຮັດໃຫ້ການກໍ່ສ້າງຄູມີຄຸນນະພາບຢ່າງແທ້ ຈິງ.

ໄປພ້ອມໆກັບການຈັດສັນຕາໜ່ວຍໂຮງຮຽນສ້າງຄູນັ້ນພວກເຮົາຍັງໄດ້ປັບປຸງລະບົບການກໍ່ ສ້າງຄູໃຫ້ເຫມາະສົມກວ່າເກົ່າ ແລະ ໄດ້ຈັດໃຫ້ມີການກໍ່ສ້າງຄູປະຖົມໄປຕາມລະບົບ 8+3 ແລະ 11+1 ຊຶ່ງແນໃສ່ກໍ່ສ້າງຄູປະຖົມໃຫ້ສອນໄດ້ທຸກວິຊາຮຽນໃນຊັ້ນປະຖົມ ແລະ ກໍ່ສ້າງຄູມັດທະຍົມໄປ ຕາມລະບົບ 11+3 ຊຶ່ງປະກອບດ້ວຍ 3 ສາຍ ຄື: ສາຍວິທະຍາສາດທຳມະຊາດ, ສາຍວິທະຍາສາດ ສັງຄົມ ແລະ ສາຍພາສາຕ່າງປະເທດ. ຄາດຫມາຍຂອງການກໍ່ສ້າງຄູມັດທະຍົມແມ່ນນອກຈາກໃຫ້ ສອນໄດ້ວິຊາໃນສາຍຂອງຕົນຮຽນແລ້ວຍັງຕ້ອງສອນໃຫ້ໄດ້ 1 ໃນ 4 ວິຊາເລືອກຄື : ພະລະສຶກສາ, ເຕັກໂນໂລຊີ, ສິລະປະແຕ້ມ ແລະ ສິລະປະດົນຕີອີກ.

ອັນສຳຄັນອີກອັນນຶ່ງໃນການພັດທະນາຄູ ແມ່ນພວກເຮົາໄດ້ສຸມໃສ່ພັດທະນາທັກສູດ, ປຶ້ມ ແບບຮຽນ ແລະ ສື່ການຮຽນ-ການສອນໃນທຸກຊັ້ນ ແລະ ທຸກວິຊາແນ່ໃສ່ເຮັດໃຫ້ທັກສູດປຶ້ມແບບ ຮຽນເປັນເອກະພາບ ແລະ ຍົກສະມັດຖະພາບຂອງການສ້າງຄູໃຫ້ສູງຂຶ້ນ, ຫມາຍຄວາມວ່າສ້າງຄູ ໃຫ້ສົມກັບຜູ້ເປັນຄູຢ່າງແທ້ຈິງ ຊຶ່ງທັກສູດປຶ້ມແບບຮຽນດັ່ງກ່າວໄດ້ເລີ່ມເອົາເຂົ້າສອນໃນໂຮງຮຽນ ສ້າງຄູແຫ່ງຕ່າງໆນັບແຕ່ປີຮຽນ 1994-95 ເປັນຕົ້ນມາ.

ໄປຄຽງຄູ່ກັບການພັດທະນາທັກສູດ ແລະ ປຶ້ມແບບຮຽນນັ້ນ ພວກເຮົາຍັງໄດ້ປັບປຸງວິທີການ ສອນ-ການຮຽນໃນໂຮງຮຽນສ້າງຄູໃຫ້ດີຂຶ້ນ, ພ້ອມທັງໄດ້ເຝິກອົບຮົມວິທີນຳໃຊ້ທັກສູດ ແລະ ປຶ້ມ ແບບຮຽນດັ່ງກ່າວໃຫ້ຄູ-ອາຈານ ເປັນຈຳນວນ 420 ເທື່ອຄົນ. ນອກຈາກນັ້ນ, ພວກເຮົາຍັງໄດ້ສຸມ ທຶນຮອນໃສ່ການປັບປຸງ ແລະ ກໍ່ສ້າງພື້ນຖານວັດຖຸຂອງໂຮງຮຽນສ້າງຄູ ແລະ ວິທະຍາໄລຄູທີ່ຢູ່ໃນ ເປົ້າຫມາຍຈະຮັກສາໄວ້ໃນນັ້ນມີ: ຫໍພັກ, ຫ້ອງຮຽນ, ຫ້ອງທົດລອງ, ຫ້ອງສະໝຸດ, ສະໂມສອນ, ເຮືອນຄົວ, ພ້ອມທັງໄດ້ປະກອບວັດຖຸອຸປະກອນຮັບໃຊ້ໃຫ້ການສອນ-ການຮຽນ, ອັນໄດ້ເຮັດໃຫ້ ພາບພົດຂອງໂຮງຮຽນສ້າງຄູນັບມື້ນັບດີຂຶ້ນ, ສົມກັບເປັນສະຖາບັນການສຶກສາລະດັບສູງກວ່າຫມູ່ຢູ່ ໃນທ້ອງຖິ່ນນັ້ນ. ມາຮອດປະຈຸບັນວຽກງານດັ່ງກ່າວໄດ້ເຮັດສຳເລັດແລ້ວປະມານ 100% ຂອງກິດ ຈະການທັງຫມົດຕາມແຜນການຂອງໂຄງການພັດທະນາຄຸນນະພາບການສຶກສາໄລຍະທີ I ໃນການ ຮ່ວມມືກັບທະນາຄານພັດທະນາອາຊີ.

ໄປຄຽງຄູ່ກັບການປະຕິບັດວຽກງານສ້າງຄູ ທີ່ໄດ້ດຳເນີນມາ, ພວກເຮົາຍັງໄດ້ເອົາໃຈໃສ່ວຽກ ງານບຳລຸງຄູ ຊຶ່ງໃນສົກຮຽນ 1995-96 ມີຄູປະຖົມທີ່ບໍ່ໄດ້ຜ່ານໂຮງຮຽນສ້າງຄູປະມານ 8,460 ຄົນ ຫຼື ປະມານ 38% ຂອງຈຳນວນຄູປະຖົມທັງຫມົດ, ໃນວຽກງານບຳລຸງຄູນີ້ພວກເຮົາໄດ້ດຳເນີນດ້ວຍ ຫຼາຍຮູບການ, ໂດຍສະເພາະແມ່ນດຳເນີນຢູ່ໃນສູນບຳລຸງຄູ ເຊິ່ງໃນປະຈຸບັນມີຢູ່ 19 ສູນ ໃນ 17 ແຂວງ ແລະ 1 ເຂດພິເສດ, ມີຄູເຂົ້າບຳລຸງ 5,056 ຄົນ/ຍິງ 1,718 ຄົນ ແລະ ມີຜູ້ຈົບໄປແລ້ວ 4,021 ຄົນ/ຍິງ 1,416 ຄົນ, ອັນໄດ້ເຮັດໃຫ້ຄູທີ່ບໍ່ໄດ້ຜ່ານໂຮງຮຽນສ້າງຄູນັ້ນຫຼຸດລົງ, ຍັງເຫຼືອແຕ່ 5,657 ຄົນ ຫຼື ປະມານ 20.34 %. ຜົນການເຝິກອົບຮົມທີ່ໄດ້ເວົ້າມາໄດ້ຊ່ວຍໃຫ້ຄູສາມາດສອນໄດ້ ດີຂຶ້ນ, ຊຶ່ງສະແດງອອກໃນໂຮງຮຽນບ່ອນມີໂຄງການລະດັບການຮຽນຂອງນັກຮຽນກໍດີຂຶ້ນ, ອັດຕາ ສ່ວນຄ້າງຫ້ອງ ແລະ ປະລະການຮຽນກໍ່ຫຼຸດລົງ.

ນອກຈາກບຳລຸງຄູຢູ່ໃນສູນທີ່ໄດ້ເວົ້າມາແລ້ວ ພວກເຮົາຍັງໄດ້ຈັດຕັ້ງບຳລຸງຄູດ້ວຍຮູບການ ອື່ນໆອີກເຊັ່ນ : ບຳລຸງຄູສອນໃນວິຊາຄະນິດສາດ, ຊີວະສາດ, ພູມສາດ, ພາສາຝລັ່ງ, ພາສາອັງກິດ, ພະລະສຶກສາ ແລະ ບຳລຸງຄູສອນຫ້ອງຄວບ. ປະຈຸບັນມີຄູສອນຫ້ອງຄວບ 4,500 ຄົນ ຫຼື ປະມານ 16% ຂອງຄູປະຖົມທັງຫມົດ ຊຶ່ງສ່ວນຫຼາຍແມ່ນສິດສອນຢູ່ໃນເຂດຫຍຸ້ງຍາກ, ຫ່າງໄກສອກຫຼີກ. ໃນ ມໍ່ໆມານີ້ ພວກເຮົາໄດ້ດຳເນີນໂຄງການທົດລອງພັດທະນາວິທີສອນຫ້ອງຄວບຢູ່ໃນ 2 ເມືອງ ຄື: ເມືອງຄຳເກີດ ແຂວງ ບໍລິຄຳໄຊ ແລະ ເມືອງເຊບັ້ງໄຟ ແຂວງຄຳມ່ວນ, ພ້ອມທັງໄດ້ເຝິກອົບຮົມວິທີ ສອນຫ້ອງຄວບໃຫ້ແກ່ຄູສອນໂຮງຮຽນສ້າງຄູແຫ່ງຕ່າງໆອີກ.

ສັງລວມແລ້ວ, ແມ່ນພວກເຮົາໄດ້ດຳເນີນທັງການກໍ່ສ້າງ ແລະ ບຳລຸງຄູໄປພ້ອມໆກັນ. ອັນ ເຮັດໃຫ້ຄູທີ່ສ້າງອອກມາມີຄຸນນະພາບດີຂຶ້ນ ແລະ ເຮັດໃຫ້ຈຳນວນຄູທີ່ບໍ່ໄດ້ຜ່ານໂຮງຮຽນສ້າງຄູຫຼຸດ ລົງ. ຄຸນນະພາບຂອງການຮຽນ-ການສອນທັງສາຍສ້າງຄູ ແລະ ສາຍສາມັນກໍ່ດີຂຶ້ນກວ່າເກົ່າ.

ໃນວຽກງານພັດທະນາຄູ ເຖິງວ່າຈະໄດ້ມີຄວາມພະຍາຍາມປັບປຸງຄຸນນະພາບຂອງຄູ ໃຫ້ດີ ຂຶ້ນແຕ່ກໍມີຂໍ້ຄົງຄ້າງບາງປະການຄື: ຄູຍັງບໍ່ທັນພຽງພໍກັບຄວາມຮຽກຮ້ອງຕ້ອງການຍ້ອນວ່າໃນໄລ ຍະທັນປ່ຽນໃຫມ່ໄດ້ມີການລະດົມຄູອອກເປັນຈຳນວນຫຼວງຫຼາຍ, ຕໍ່ຈາກນັ້ນຊ້ຳພັດບໍ່ມີໂຄຕາຮັບ ເອົາຄູເຂົ້າໃຫມ່ຕາມຈຳນວນທີ່ຕ້ອງການເປັນເວລາ 3 ປີຮຽນ ຕິດຕໍ່ກັນ ນັບແຕ່ປີຮຽນ 1993-94 ເຖິງ 1995-96. ການຂາດເຂີນຄູຫຼາຍກວ່າຫມູ່ແມ່ນຢູ່ເຂດຫ່າງໄກສອກຫຼີກ ຊຶ່ງໃນໄລຍະຜ່ານມາ ເຖິງວ່າໄດ້ປຸກລະດົມຊຸກຍູ້, ແຕ່ເນື່ອງຈາກຂາດນະໂຍບາຍທີ່ເຫມາະສົມຈຶ່ງບໍ່ມີຄູໄປສອນໃນເຂດ ດັ່ງກ່າວ. ອີກດ້ານຫນຶ່ງການກໍ່ສ້າງຄູກໍ່ຍັງບໍ່ທັນຕອບສະຫນອງກັບຄວາມຮຽກຮ້ອງຕ້ອງການຕົວຈິງ, ໂດຍສະເພາະແມ່ນການກໍ່ສ້າງຄູຊົນເຜົ່າ, ຄູພະລະສຶກສາ ແລະ ສິລະປະສຶກສາຍັງມີຫນ້ອຍ. ເພື່ອ

ແກ້ໄຂສະພາບຂາດຄູນັ້ນຫຼາຍທ້ອງຖິ່ນໄດ້ລະດົມນັກຮຽນສາມັນທີ່ເສັງຈົບຊັ້ນ ມ3 ຫຼື ມ6 ເຂົ້າເປັນຄູ, ຈາກນັ້ນເຮັດໃຫ້ຈຳນວນຄູທີ່ບໍ່ໄດ້ຜ່ານໂຮງຮຽນສ້າງຄູກໍຍັງມີຫຼາຍສົມຄວນ.. ຄຸນນະພາບຂອງຄູເວົ້າລວມແມ່ນຍັງຕ່ຳ, ເຖິງວ່າໄດ້ຮັບການເຝິກອົບຮົມກ່ຽວກັບວິທີການສອນແບບໃຫມ່ມາແລ້ວກໍຕາມ, ແຕ່ຄູຈຳນວນຫນຶ່ງກໍຍັງບໍ່ທັນຕັ້ງຫນ້າປ່ຽນແປງພຶດຕິກຳການສອນຂອງຕົນໃຫ້ດີຂຶ້ນແຕ່ຢ່າງໃດ. ນຳ້ໃຈຮັບຜິດຊອບຕໍ່ຫນ້າທີ່ວຽກງານ ແລະ ການຊອກຮູ້ຮ່ຳຮຽນດ້ວຍຕົນເອງຂອງຄູຈຳນວນຫນຶ່ງຍັງບໍ່ທັນສູງເທົ່າທີ່ຄວນ. ອັນສຳຄັນອີກອັນຫນຶ່ງໃນການກໍ່ສ້າງຄູຍັງບໍ່ທັນມີວິທີການທີ່ດີເພື່ອຊຸກຍູ້ສົ່ງເສີມນັກຮຽນດີນັກຮຽນເກັ່ງເຂົ້າຮຽນຄູ, ໃນຕົວຈິງແລ້ວ, ການສະຫມັກໃຈຂອງນັກຮຽນສາມັນເຂົ້າຮຽນຄູແມ່ນມີຫນ້ອຍທີ່ສຸດ ແລະ ຜູ້ເປັນຄູແລ້ວ ກໍຍັງບໍ່ທັນຮັກອາຊີບຂອງຕົນຢ່າງແທ້ຈິງເທື່ອ.

1.4- <u>ແຜນງານອາຊີວະສຶກສາ ແລະ ມະຫາວິທະຍາໄລ</u>

ການປະຕິບັດແຜນງານອາຊີວະສຶກສາ ແລະ ມະຫາວິທະຍາໄລແມ່ນມີເປົ້າຫມາຍກໍ່ສ້າງກຳມະກອນ, ນາຍຊ່າງ ແລະ ນັກວິຊາການຊັ້ນສູງ ເພື່ອຮັບໃຊ້ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມຂອງປະເທດໃນແຕ່ລະໄລຍະ. ໂດຍເຫັນໄດ້ຄວາມສຳຄັນ ແລະ ຈຳເປັນຂອງວຽກງານດັ່ງກ່າວ, ໃນຊ່ວງ 5 ປີທີ່ຜ່ານມາຈຶ່ງໄດ້ເອົາໃຈໃສ່ຂະຫຍາຍ ແລະ ປັບປຸງວຽກງານອາຊີວະສຶກສາ ແລະ ການສຶກສາຊັ້ນສູງ. ໃນນັ້ນໄດ້ມີການປັບປຸງການຈັດຕັ້ງຄຸ້ມຄອງໂຮງຮຽນອາຊີວະສຶກສາ ແລະ ມະຫາວິທະຍາໄລ, ໂດຍສະເພາະແມ່ນການເຕົ້າໂຮມສະຖາບັນການສຶກສາຊັ້ນສູງ 10 ແຫ່ງ ຊຶ່ງເມື່ອກ່ອນໄດ້ຂຶ້ນກັບການຄຸ້ມຄອງຂອງກະຊວງຕ່າງໆ ເຂົ້າເປັນມະຫາວິທະຍາໄລແຫ່ງຊາດ, ທັງນີ້ ກໍເພື່ອໃຫ້ສອດຄ່ອງກັບທ່າອ່ຽງລວມຂອງໂລກ ແລະ ເງື່ອນໄຂຕົວຈິງຂອງປະເທດເຮົາ, ທັງເຮັດໃຫ້ການຈັດຕັ້ງຄຸ້ມຄອງເປັນເອກະພາບ ແລະ ເຮັດໃຫ້ການນຳໃຊ້ພື້ນຖານວັດຖຸ ແລະ ສື່ການຮຽນ-ການສອນ ມີປະສິດທິພາບດີຂຶ້ນກ່ວາເກົ່າ. ການເຕົ້າໂຮມໂຮງຮຽນດັ່ງກ່າວ ໃນເບື້ອງຕົ້ນເຫັນວ່າມີບາງອັນຫຍຸ້ງຍາກ, ແຕ່ໃນປະຈຸບັນກໍໄດ້ຮັບການແກ້ໄຂ ແລະ ກ້າວເຂົ້າສູ່ຄວາມເປັນລະບຽບດີຂຶ້ນ ຊຶ່ງໄດ້ເປີດເປັນທາງການ ໂດຍມີການເຂົ້າຮ່ວມເປັນກຽດຈາກປະທານປະເທດແຫ່ງ ສ.ປ.ປ.ລາວ ໃນວັນທີ 5/11/96. ອັນສຳຄັນໃນການສ້າງຕັ້ງມະຫາວິທະຍາໄລແຫ່ງຊາດນັ້ນ ແມ່ນພວກເຮົາໄດ້ສ້າງຫຼັກສູດໃໝ່ ຊຶ່ງມາເຖິງປະຈຸບັນໄດ້ສຳເລັດຫຼັກສູດ ປີທີ່ 1, ປີທີ່ 2 ແລະ ໄດ້ເລີ່ມນຳໃຊ້ແຕ່ປີຮຽນ 1996-97 ເປັນຕົ້ນມາ. ສ່ວນຫຼັກສູດປີທີ່ 3, ປີທີ່ 4, ທີ່ 5 ນັ້ນ ຫາກໍສຳເລັດ ແລະ ໄດ້ນຳໃຊ້ແຕ່ປີຮຽນ 1998-99 ເປັນຕົ້ນມາ. ສຳລັບສາຍອາຊີວະສຶກສາພວກເຮົາ ກໍໄດ້ສຳເລັດການຄົ້ນຄ້ວາປັບປຸງຫຼັກສູດຈາກລະບົບ 8+2 ເປັນ 8+3 ແລະ ໄດ້ດຳເນີນການນຳໃຊ້ຫຼັກສູດດັ່ງກ່າວ. ປະຈຸບັນພວມຄົ້ນຄ້ວາປັບປຸງຫຼັກສູດລະບົບ 11+3 ໃຫ້ເປັນລະບົບ 11+2 ' ເພື່ອໃຫ້ແທດເຫມາະກັບສະພາບຕົວຈິງຂອງຕະຫຼາດແຮງງານພາຍໃນປະເທດເຮົາ.

ໃນການພັດທະນາອາຊີວະສຶກສາ ແລະ ມະຫາວິທະຍາໄລ ແມ່ນໄດ້ເອົາໃຈໃສ່ປັບປຸງພື້ນຖານວັດຖຸອາຄານສະຖານທີ່ພ້ອມທັງໄດ້ປະກອບວັດຖຸອຸປະກອນອັນທັນສະໄໝມຈຳນວນຫນຶ່ງເພື່ອກໍ່ສ້າງນາຍຊ່າງ, ກຳມະກອນ ແລະ ນັກວິຊາການນັບມື້ນັບດີຂຶ້ນ, ເປັນຕົ້ນແມ່ນຢູ່ອະດີດ ມ.ສ.2 ທັນວາ, ໂຮງຮຽນເອເລັກໂຕນິກຊັ້ນສູງ, ໂຮງຮຽນປ່າໄມ້ຊັ້ນສູງ, ໂຮງຮຽນກະເສດນາບົງ ແລະ ອື່ນໆ, ຊຶ່ງໃນປະຈຸບັນໄດ້ກາຍເປັນຄະນະວິຊາຕ່າງໆຂອງມະຫາວິທະຍາໄລແຫ່ງຊາດ.

ເພື່ອຕອບສະຫນອງພະນັກງານວິຊາການໃຫ້ພຽງພໍຕາມຄວາມຮຽກຮ້ອງຕ້ອງການ ຂອງສັງຄົມນັ້ນຜ່ານມາ ພວກເຮົາໄດ້ເອົາໃຈໃສ່ກໍ່ສ້າງພະນັກງານດັ່ງກ່າວທັງຢູ່ພາຍໃນ ແລະ ຕ່າງປະເທດ, ທັງພາກລັດ ແລະ ເອກະຊົນ. ສະເພາະການກໍ່ສ້າງຢູ່ພາຍໃນປະເທດ ໃນຊຸມປີຜ່ານມາເຫັນວ່າ : ນັກສຶກສາໃນໂຮງຮຽນຊັ້ນສູງ ແລະ ມະຫາວິທະຍາໄລ (ລວມທັງພາກລັດ ແລະ ພາກເອກະຊົນ) ໄດ້ເພີ່ມຂຶ້ນຈາກ 6,004 ຄົນ ໃນປີຮຽນ 1995-96 ເປັນ 12,296 ຄົນ ໃນປີຮຽນ 1999-2000, ເທົ່າກັບ 104%. ນັກສຶກສາເຂົ້າໃຫມ່ໃນສາຍຊັ້ນສູງ ແລະ ມະຫາວິທະຍາໄລ ສົກຮຽນ 1995-96 ມີ 1,367 ຄົນ ເພີ່ມຂຶ້ນເປັນ 4,305 ຄົນ ໃນປີ 1999-2000 ເທົ່າກັບ 215%. ອັດຕາສ່ວນນັກສຶກສາເຂົ້າໃຫມ່ທຽບໃສ່ນັກສຶກສາຈົບມັດທະຍົມຕອນປາຍໄດ້ເພີ່ມຂຶ້ນຈາກ 21% ໃນປີຮຽນ 1995-96 ເປັນ 39% ໃນປີ 1999-2000. (ອັດຕາສ່ວນດັ່ງກ່າວເຫັນວ່າຍັງຕ່ຳ ຖ້າທຽບໃສ່ບັນດາປະເທດ ໃນພາກພື້ນ). ຈຳນວນນັກສຶກສາຊັ້ນສູງ ແລະ ມະຫາວິທະຍາໄລ ທີ່ເສັງຈົບຊັ້ນ ເພີ່ມຂຶ້ນຈາກ 1,021 ຄົນໃນປີຮຽນ 1995-96 ເປັນ 2,159 ຄົນ ໃນ 1999-2000. ສັງລວມແລ້ວໃນ 5 ປີຜ່ານມາພວກເຮົາໄດ້ກໍ່ສ້າງພະນັກງານໃນລະດັບຊັ້ນສູງ ແລະ ປະລິຍາຕິຢູ່ພາຍໃນປະເທດໄດ້ທັງຫມົດ 9,476 ຄົນ.

ສ່ວນຈຳນວນນັກຮຽນຊັ້ນຕົ້ນແມ່ນເພີ່ມຂຶ້ນຈາກ 1,483 ຄົນ ໃນປີຮຽນ 1995-96 ເປັນ 2,681 ຄົນ ໃນປີຮຽນ 1999-2000 ເທົ່າກັບ 81%. ນັກຮຽນຊັ້ນກາງໄດ້ເພີ່ມຂຶ້ນຈາກ 4,397 ຄົນ ໃນປີຮຽນ 1995-96 ເປັນ 6,340 ຄົນ ໃນ 1999-2000 ເທົ່າກັບ 44%.

ຈຳນວນນັກຮຽນຊັ້ນຕົ້ນທີ່ເສັງຈົບຊັ້ນຫຼຸດລົງຈາກ 1,297 ຄົນ ໃນປີຮຽນ 1995-96 ເປັນ 659 ຄົນໃນປີຮຽນ 1999-2000, ຈຳນວນນັກຮຽນຊັ້ນກາງທີ່ເສັງຈົບຊັ້ນ ຫຼຸດລົງຈາກ 2,804 ຄົນ ໃນປີຮຽນ 1995-96 ເປັນ 2,687 ຄົນໃນປີຮຽນ1999-2000. ໃນ 5 ປີ ຜ່ານມາພວກເຮົາໄດ້ກໍ່ສ້າງພະນັກງານອາຊີວະສຶກສາຊັ້ນຕົ້ນໄດ້ 5,843 ຄົນ ແລະ ພະນັກງານອາຊີວະສຶກສາຊັ້ນກາງໄດ້ 15,524 ຄົນ.

ນອກຈາກການກໍ່ສ້າງຢູ່ພາຍໃນປະເທດແລ້ວ, ນັບແຕ່ປີຮຽນ 1995-96 ເປັນຕົ້ນມາພວກເຮົາຍັງໄດ້ສົ່ງພະນັກງານ ແລະ ນັກສຶກສາໄປຮຽນຢູ່ຕ່າງປະເທດອີກ, ໃນນັ້ນລະດັບຊັ້ນສູງຂຶ້ນໄປມີ

1,242 ຄົນ ຢູ່ໃນ 21 ປະເທດໃນໂລກ ເຊັ່ນ : ຫວຽດນາມ, ຈີນ, ໄທ, ອິດສະຕຼາລີ, ໂປໂລຍ, ຍີ່ປຸ່ນ, ມາເລເຊຍ ແລະ ສິງກະໂປເປັນຕົ້ນ. ທຶນໄປຮຽນຕ່າງປະເທດໃນລະດັບຊັ້ນສູງຂຶ້ນເມື່ອມີທ່າອ່ຽງເພີ່ມຂຶ້ນຈາກ 81 ຄົນ ໃນປີຮຽນ 1995-96 ມາເປັນ 232 ຄົນ ໃນປີ 1999-2000 ແລະ ໂດຍສະເລ່ຍແລ້ວປະມານ 250 ຄົນ/ຕໍ່ປີ. ໃນ 5 ປີ ຜ່ານມາ ນັກສຶກສາຮຽນຈົບມາຈາກຕ່າງປະເທດລະດັບຊັ້ນສູງຂຶ້ນເມື່ອ ມີ 1,321 ຄົນ, ໃນນັ້ນລະດັບປະລິນຍາໂທມີ 126 ຄົນ ແລະ ລະດັບປະລິນຍາເອກ ມີ 37 ຄົນ. ສ່ວນທຶນໄປຮຽນໃນລະດັບວິຊາຊີບຊັ້ນຕົ້ນ ແລະ ຊັ້ນກາງຫຼຸດລົງຈາກ 22 ຄົນ ໃນປີຮຽນ 1995-96 ມາເປັນ 13 ຄົນ ໃນປີ 1999-2000, ຈຳນວນພະນັກງານທີ່ສົ່ງໄປເຝິກງານໄລຍະຍາວຢູ່ຕ່າງປະເທດໄດ້ເພີ່ມຂຶ້ນຈາກ 8 ຄົນ ໃນປີຮຽນ 1995-96 ເປັນ 64 ຄົນໃນປີ 1999-2000.

ສັງລວມແລ້ວ, ໃນຊຸມປີຜ່ານມາວຽກງານອາຊີວະສຶກສາ ແລະ ມະຫາວິທະຍາໄລໄດ້ມີການປັບປຸງໄປຕາມທ່າອ່ຽງລວມຂອງສາກົນ ແລະ ຄວາມຕ້ອງການຂອງຕະຫຼາດແຮງງານພາຍໃນປະເທດເຮົາ. ທາງດ້ານປະລິມານການກໍ່ສ້າງກໍມີການເພີ່ມຂຶ້ນ ແລະ ດ້ານຄຸນນະພາບກໍມີທ່າອ່ຽງດີຂຶ້ນເປັນລຳດັບ. .

ເຖິງຢ່າງໃດກໍດີ, ວຽກງານອາຊີວະສຶກສາ ແລະ ມະຫາວິທະຍາໄລ ກໍຍັງມີຂໍ້ຫຍຸ້ງຍາກ ແລະ ຂໍ້ຄົງຄ້າງບາງປະການຄື : ການຄຸ້ມຄອງມະຫາພາກຂອງວຽກງານດັ່ງກ່າວຍັງບໍທັນໄດ້ດີ. ຂະແໜງຮຽນໃນໂຮງຮຽນອາຊີວະສຶກສາຂັ້ນທ້ອງຖິ່ນຍັງມີໜ້ອຍ ແລະ ການຮັບນັກຮຽນເຂົ້າຮຽນໃນບາງຂະແໜງຍັງບໍ່ໄດ້ຕາມຄາດໝາຍ. ນັກຮຽນກໍຍັງບໍ່ທັນມີຄວາມສະໜອມພໍຕໍ່ວິຊາຊີບ. ນອກນັ້ນວັດຖຸອຸປະກອນຮັບໃຊ້ໃຫ້ແກ່ວຽກງານວິຊາການເຖິງວ່າມີບາງອັນເພີ່ມຂຶ້ນ, ແຕ່ກໍມີຫຼາຍອັນຍັງຂາດເຂີນ, ເຮັດໃຫ້ພາກປະຕິບັດຕົວຈິງຍັງມີໜ້ອຍ ແລະ ການເຝິກທັກສະດ້ານຕ່າງໆຍັງບໍ່ທັນໄດ້ດີເທົ່າທີ່ຄວນ, ນະໂຍບາຍຊຸກຍູ້ໂຮງຮຽນວິຊາສະເພາະຊັ້ນຕ່າງໆ ເພື່ອນຳໃຊ້ຄວາມສາມາດບົ່ມຊ້ອນຂອງຕົນ ໃນການສ້າງລາຍຮັບວິຊາການ, ຍັງບໍ່ທັນເໝາະສົມ. ການກໍ່ສ້າງເຖິງວ່າມີການຂະຫຍາຍຕົວ, ແຕ່ກໍ່ບໍ່ທັນຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມ ໃນໄລຍະໃໝ່ ແລະ ກໍຍັງບໍ່ທັນໄປຕາມລະບົບຮູບຫາດ, ຈຳນວນນັກຮຽນອາຊີວະສຶກສາຊັ້ນຕົ້ນ, ຊັ້ນກາງ ທຽບໃສ່ຊັ້ນສູງຍັງມີໜ້ອຍເກີນໄປ.

1.5- <u>ແຜນງານການບໍລິຫານ ແລະ ຄຸ້ມຄອງການສຶກສາ</u>

ຜົນສຳເລັດຂອງການປະຕິຮູບການສຶກສາ ນອກຈາກຄູມີລັກສະນະຕັດສິນກ່ວາໝູ່ແລ້ວ, ຜູ້ບໍລິຫານ ແລະ ຄຸ້ມຄອງການສຶກສາກໍມີສ່ວນສຳຄັນ ໃນການຮັບປະກັນຄວາມຍືນຍົງຄົງຕົວຂອງຜົນສຳເລັດດັ່ງກ່າວ. ດັ່ງນັ້ນວຽກງານບໍລິຫານ ແລະ ຄຸ້ມຄອງການສຶກສາ ຈຶ່ງເປັນແຜນງານໜຶ່ງທີ່ສຳຄັນໃນແຜນງານພັດທະນາການສຶກສາແຫ່ງຊາດຂອງພວກເຮົາ.

ໃນການພັດທະນາການບໍລິຫານ ແລະ ຄຸ້ມຄອງການສຶກສາ ກ່ອນອື່ນພວກເຮົາໄດ້ເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງນັບແຕ່ຂັ້ນກະຊວງລົງເຖິງຂັ້ນສຶກສາແຂວງ, ສຶກສາເມືອງ ແລະ ໂຮງຮຽນໃຫ້ເປັນເອກະພາບ ແລະ ແທດເໝາະກັບຄວາມຮຽກຮ້ອງຕ້ອງການຕົວຈິງ. ຈາກນັ້ນກໍໄດ້ກຳນົດສິດໜ້າທີ່ຂອງແຕ່ລະຂັ້ນຢ່າງຈະແຈ້ງ, ພ້ອມທັງໄດ້ປະກອບພະນັກງານເຂົ້າໃນຕຳແໜ່ງງານຕ່າງໆຢ່າງຄົບຖ້ວນພໍສົມຄວນ.

ໄປຄຽງຄູ່ກັບການປັບປຸງກົງຈັກການຈັດຕັ້ງ ແລະ ບັນຈຸພະນັກງານນັ້ນພວກເຮົາຍັງໄດ້ສ້າງ ແລະ ປັບປຸງຂໍ້ກຳນົດກົດລະບຽບຕ່າງໆ ເຊັ່ນ : ລະບຽບລັດຖະກອນສຶກສາ, ຂໍ້ກຳນົດວ່າດ້ວຍການຍ້ອງຍໍ, ການປະຕິບັດວິໄນ, ລະບຽບການຄຸ້ມຄອງໂຮງຮຽນ, ລະບຽບການຈັດຕັ້ງສອບເສັງ, ການກຳນົດວັນຄູແຫ່ງຊາດ, ກຳນົດເຄື່ອງໝາຍສຶກສາ, ເຄື່ອງແບບຂອງຄູ ແລະ ອື່ນໆ. ປະຈຸບັນໄດ້ຮ່າງກົດໝາຍການສຶສກາສຳລເດ ແລະ ໄດ້ສະເໜີຜ່ານກະຊວງຍຸດຕິທຳແລ້ວ.ທັງໝົດເຫຼ່ານັ້ນລ້ວນແຕ່ເປັນພື້ນຖານໃຫ້ແກ່ການບໍລິຫານ ແລະ ຄຸ້ມຄອງການສຶກສາໃຫ້ເປັນເອກະພາບ ແລະ ມີລະບຽບແບບແຜນດີຂຶ້ນກວ່າເກົ່າ.

ໂດຍຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງການສຶກສາ, ພວກເຮົາໄດ້ພະຍາຍາມປັບປຸງອັດຕາສ່ວນຂອງຄູ-ອາຈານ ໃຫ້ສົມດູ່ກັບຈຳນວນນັກຮຽນ ຊຶ່ງໃນປະຈຸບັນມີພະນັກງານສຶກສາທັງໝົດ 46,092 ຄົນ, ພວມປະຈຳການ 45,012 ຄົນ, ພວມໄປຮຽນຍົກລະດັບຢູ່ພາຍໃນ 976 ຄົນ ແລະ ຕ່າງປະເທດ 104 ຄົນ. ໃນນັ້ນຄູສອນຕົວຈິງມີປະມານ 92%. ພ້ອມດຽວກັນນີ້ຫຼາຍແຂວງກໍໄດ້ພະຍາຍາມ ສັບຊ້ອນດຸ່ນດ່ຽງຄູພາຍໃນແຂວງຂອງຕົນໃຫ້ເໝາະສົມກວ່າເກົ່າ, ພ້ອມທັງມີນະໂຍບາຍສະເພາະເພື່ອປຸກລະດົມເອົາຄູຈາກທົ່ງພຽງໄປປະຈຳການຢູ່ເຂດພູດອຍຫ່າງໄກສອກຫຼີກ. ໃນບ່ອນທີ່ຈຳເປັນກໍໄດ້ຮັບເອົາຄູສັນຍາຈ້າງ ຫຼື ຄູປະຊາຊົນລ້ຽງ ຊຶ່ງປະຈຸບັນມີທັງໝົດ 1,241 ຄົນ.

ເພື່ອເຮັດໃຫ້ການບໍລິຫານ ແລະ ຄຸ້ມຄອງການສຶກສາດີຂຶ້ນນັ້ນໃນ 5 ປີຜ່ານມາພວກເຮົາຍັງໄດ້ເອົາໃຈໃສ່ເຝິກອົບຮົມຜູ້ບໍລິຫານການສຶກສາຂັ້ນແຂວງໄດ້ 47 ຄົນ, ຂັ້ນເມືອງໄດ້ 408 ຄົນ ແລະ ເຝິກອົບຮົມຜູ້ອຳນວຍການໂຮງຮຽນໄດ້ 3,596 ຄົນ. ຜ່ານການປະເມີນຜົນການເຝິກອົບຮົມນັ້ນໄດ້ຊີ້ໃຫ້ເຫັນວ່າບຸກຄະລິກລັກສະນະ ແລະ ຄວາມສາມາດຂອງຜູ້ບໍລິຫານໃນການບໍລິຫານການສຶກສາໄດ້ມີການປ່ຽນແປງດີຂຶ້ນ, ຊຶ່ງໄດ້ສົ່ງຜົນສະທ້ອນອັນດີຕໍ່ການຍົກຄຸນນະພາບຂອງການສຶກສາ.

ໄປຄຽງຄູ່ກັບວຽກງານຕ່າງໆທີ່ກ່າວມາຂ້າງເທິງພວກເຮົາຍັງໄດ້ເອົາໃຈໃສ່ຄົ້ນຄວ້າ ແລະ ປະຕິບັດນະໂຍບາຍຕໍ່ພະນັກງານຄູ ອາຈານ ເຊັ່ນວ່າ : ການປະຕິບັດນະໂຍບາຍ 194, ນະໂຍບາຍການຍ້ອງຍໍ, ນະໂຍບາຍຕໍ່ຜູ້ເຈັບເປັນ, ຕໍ່ຜູ້ເສັງຊີວິດ, ຕໍ່ຜູ້ອອກເບ້ຍບຳນານ (ຈຳນວນ 285 ຄົນ)

ແລະ ຕໍ່ຜູ້ອອກສ້າງເສດຖະກິດຄອບຄົວ (ຈຳນວນ 1,554 ຄົນ). ອັນເດັ່ນກວ່າໝູ່ແມ່ນໃນ 2-3 ປີ ມານີ້ ກະຊວງສຶກສາທິການ ແລະ ສຶກສາແຂວງກໍໄດ້ສົ່ງຄູດີເດັ່ນຈຳນວນໜຶ່ງມາທັດສະນະສຶກສາຢູ່ ກຳແພງນະຄອນວຽງຈັນ.

ໃນການບໍລິຫານ ແລະ ຄຸ້ມຄອງການສຶກສາ, ບັນຫາສຳຄັນອີກອັນໜຶ່ງແມ່ນພວກເຮົາໄດ້ ເອົາໃຈໃສ່ສຶກສາອົບຮົມແນວຄິດໃຫ້ແກ່ພະນັກງານ ຄູ-ອາຈານ, ນັກຮຽນ-ນັກສຶກສາດ້ວຍຫຼາຍຮູບ ການເຊັ່ນ: ໄດ້ຈັດຕັ້ງຮ່ຳຮຽນມະຕິຕ່າງໆຂອງພັກ, ປະຖະກະຖາ, ເລົ່າມູນເຊື້ອ, ໂຕ້ວາທີ, ສຶກສາອົບ ຮົມແນວຄິດຜ່ານການຈັດຕັ້ງສະເຫຼີມສະຫຼອງວັນສຳຄັນຂອງຊາດ, ຜ່ານການສຳຫຼວດກວດກາ, ຜ່ານການສິດສອນ ແລະ ອື່ນໆ. ຈາກນັ້ນເຖິງວ່າສະພາບການຢູ່ພາຍໃນ ແລະ ຕ່າງປະເທດຈະມີ ການປ່ຽນແປງຢ່າງໄວວາ ແລະ ສັບສົນ, ພ້ອມດຽວກັນນັ້ນຄົນບໍ່ດີກໍມີການປັ່ນປ່ວນຍຸແຍ່ດ້ວຍຫຼາຍ ຮູບການ, ແຕ່ສະພາບແນວຄິດຂອງພະນັກງານຄູ-ອາຈານ ແລະ ນັກຮຽນ-ນັກສຶກສາເວົ້າລວມແມ່ນ ມີຄວາມສະຫງົບ, ອຸ່ນອ່ຽນ, ມີຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານ, ມີຄວາມເປັນເອກະພາບກັບ ແນວທາງນະໂຍບາຍຂອງພັກ, ມີຄວາມອົດທົນຜ່ານຜ່າຄວາມຫຍຸ້ງຍາກຕ່າງໆໄດ້.

ເພື່ອເຮັດໃຫ້ການບໍລິຫານ ແລະ ຄຸ້ມຄອງການສຶກສາ ໄດ້ຮັບຜົນດີພວກເຮົາຍັງໄດ້ເອົາໃຈ ໃສ່ເກັບກຳ ແລະ ວິໄຈຂໍ້ມູນກ່ຽວກັບສະຖິຕິຕ່າງໆ ແລະ ໄດ້ສ້າງແຜນທີ່ການສຶກສາ ຊຶ່ງທັງໝົດນັ້ນ ໄດ້ເປັນພື້ນຖານອັນສຳຄັນໃຫ້ແກ່ການສະຫຼຸບຕີລາຄາສະພາບການສຶກສາໃນໄລຍະທີ່ຜ່ານມາ ແລະ ການວາງແຜນພັດທະນາການສຶກສາໃນສະເພາະໜ້າ ແລະ ຍາວນານ. ວຽກງານທີ່ໄດ້ນຳໃຊ້ ເຂົ້າໃນການບໍລິຫານ ແລະ ຄຸ້ມຄອງການສຶກສາໄລຍະຜ່ານມາແມ່ນ ໄດ້ໃຫ້ຄວາມສຳຄັນກ່ຽວ ກັບວຽກງານກວດກາ ແລະ ໄດ້ສ້າງຕັ້ງຄະນະກວດກາການສຶກສາແຕ່ລະຂັ້ນຂຶ້ນ ພ້ອມທັງໄດ້ກຳນົດ ສິດໜ້າທີ່ຂອງຄະນະກວດກາດັ່ງກ່າວຢ່າງຈະແຈ້ງ. ຄະນະດັ່ງກ່າວກໍໄດ້ລົງກວດກາຕາມພາລະບົດ ບາດຂອງຕົນ ເພື່ອຊຸກຍູ້ການເຄື່ອນໄຫວປະຕິບັດວຽກງານດ້ານຕ່າງໆໃຫ້ມີປະສິດທິຜົນດີຂຶ້ນ. ນອກ ນັ້ນຄະນະນຳການສຶກສາ ແລະ ວິຊາການແຕ່ລະຂັ້ນກໍໄດ້ເອົາໃຈໃສ່ທັນທິດລົງຮາກຖານ ເພື່ອຕິດ ຕາມຊຸກຍູ້ວຽກງານການສຶກສາ ໃຫ້ມີບາດກ້າວດີຂຶ້ນ.

ໃນຊຸມປີຜ່ານມາ, ພັກ-ລັດກໍໄດ້ຕັດສິນໃຈກູ້ຢືມທຶນຈາກທະນາຄານໂລກ ແລະ ທະນາຄານ ພັດທະນາອາຊີ ເພື່ອມາພັດທະນາການສຶກສາ, ນອກນັ້ນຍັງໄດ້ຂໍນຂວາຍທຶນຮອນໃນຮູບການຊ່ວຍ ເຫຼືອລ້າຈາກອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ, ການພົວພັນຮ່ວມມື 2 ຝ່າຍ. ໂດຍສະເພາະແມ່ນກັບປະເທດເພື່ອນມິດ ແລະ ຈາກພາກສ່ວນບຸຄົນເອກະຊົນຕ່າງໆ. ງົບປະ ມານຂອງຂະແໜງການສຶກສາ ຖ້າທຽບໃສ່ຍອດຜະລິດພັນພາຍໃນ ຫຼື ທຽບໃສ່ງົບປະມານທັງໝົດ

ຂອງລັດຖະບານແລ້ວແມ່ນໄດ້ເພີ່ມຂຶ້ນ. ການລົງທຶນໃສ່ການກໍ່ສ້າງພື້ນຖານການສຶກສາກໍໄດ້ເພີ່ມຂຶ້ນເຊັ່ນດຽວກັນອັນເຮັດໃຫ້ພື້ນຖານການສຶກສາເຊັ່ນ : ໂຮງຮຽນ, ຫ້ອງຮຽນ, ຫໍພັກ, ດີຂຶ້ນກ່ວາເກົ່າ. ໄປຄຽງຄູ່ກັບການລົງທຶນກໍ່ສ້າງພື້ນຖານນັ້ນ, ພວກເຮົາຍັງໄດ້ເອົາໃຈໃສ່ສະໜອງເຄື່ອງຮັບໃຊ້ຫ້ອງການ, ເຄື່ອງທົດລອງ, ສໍຂາວ, ພາຫະນະຮັບໃຊ້, ປຶ້ມແບບຮຽນ, ປຶ້ມຄູ່ມືຄູ, ປຶ້ມແຕ່ງບົດສອນ ແລະ ສິ່ງອຳນວຍຄວາມສະດວກອື່ນໆ ເພື່ອແຈກຢາຍໃຫ້ແຕ່ລະທ້ອງຖິ່ນໄດ້ຊົມໃຊ້ຫຼາຍພໍສົມຄວນ.

ສັງລວມແລ້ວ, ວຽກງານບໍລິຫານ ແລະ ຄຸ້ມຄອງການສຶກສາ ແມ່ນໄດ້ຮັບການປັບປຸງໃຫ້ຫນັກແຫນ້ນ ແລະ ແທດເໝາະກວ່າເກົ່າ. ພະນັກງານບໍລິຫານການສຶກສາຂັ້ນຕ່າງໆໄດ້ຮັບການອົບຮົມເກືອບທົ່ວເຖິງເຮັດໃຫ້ການບໍລິຫານການສຶກສາມີປະສິດທິພາບສູງຂຶ້ນເທື່ອລະກ້າວ.

ເຖິງຢ່າງໃດກໍດີ, ວຽກງານບໍລິຫານ ແລະ ຄຸ້ມຄອງການສຶກສາກໍ່ຍັງມີຈຸດອ່ອນບາງຢ່າງເຊັ່ນ : ກົງຈັກການຈັດຕັ້ງໃນເບື້ອງຕົ້ນຫຼາຍບ່ອນບໍ່ທັນສອດຄ່ອງ, ນະໂຍບາຍ ແລະ ລະບຽບການບາງດ້ານກໍຍັງບໍ່ທັນເໝາະສົມ, ບຸກຄະລາກອນທາງການສຶກສາ ເຖິງວ່າໄດ້ມີການພັດທະນາດີຂຶ້ນ, ແຕ່ຈຳນວນຫນຶ່ງຄວາມຮູ້ຄວາມສາມາດຍັງຈຳກັດ, ຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານກໍຍັງບໍ່ທັນສູງເທົ່າທີ່ຄວນ. ການສັບຊ້ອນຄູ-ອາຈານ ກໍຍັງບໍ່ທັນດີ, ຍັງມີບ່ອນເຫຼືອບ່ອນບໍ່ພໍ, ການສຶກສາອົບຮົມແນວຄິດ ເຖິງວ່າໄດ້ເອົາໃຈໃສ່, ແຕ່ກໍຍັງບໍ່ທັນດີ, ຍັງມີບໍ່ທັນເຮັດຢ່າງເນື່ອງນິດລຽນຕິດ ແລະ ຍັງຫນັກໄປໃນດ້ານວິຊາສະເພາະຫຼາຍກວ່າ. ດ້ານງົບປະມານ ເຖິງວ່າມີຕົວເລກຄ່ອຍໆເພີ່ມຂຶ້ນ, ແຕ່ການນຳໃຊ້ກໍຍັງພົບຄວາມຫຍຸ້ງຍາກ. ອີກດ້ານຫນຶ່ງ ເງິນມີຫນ້ອຍຢູ່ແລ້ວແຕ່ການໃຊ້ຈ່າຍເຂົ້າໃນວຽກງານຕ່າງກໍຍັງບໍ່ທັນມີປະສິດທິຜົນສູງ, ການເບີກຈ່າຍເງິນເດືອນນາຍຄູໃນຫລາຍທ້ອງຖິ່ນບໍ່ທັນເປັນປົກກະຕິ. ການປະສານງານລະຫວ່າງສາຍຕັ້ງ-ສາຍຂວາງ ແລະ ພົວພັນພາຍໃນຂະແໜງການສຶກສາເອງກໍຍັງບໍ່ທັນໄດ້ດີ, ການເກັບກຳຂໍ້ມູນຂ່າວສານກໍຍັງຊັກຊ້າ ແລະ ບໍ່ຊັດເຈນ, ແບບແຜນວິທີເຮັດວຽກກໍຍັງບໍ່ທັນດີເທົ່າທີ່ຄວນ.

1.2- <u>ສັງເກດຕີລາຄາລວມ</u>

ໃນ 5 ປີຜ່ານມາ ພວກເຮົາໄດ້ສຸມໃສ່ພັດທະນາປັດໃຈພື້ນຖານໃນການຕັດສິນຄຸນນະພາບຂອງການສຶກສາ ເຊັ່ນວ່າ : ໄດ້ພັດທະນາຄູໃຫ້ມີຄວາມຮູ້ຄວາມສາມາດດີຂຶ້ນ; ໄດ້ພັດທະນາຫຼັກສູດ ປຶ້ມແບບຮຽນ, ປຶ້ມຄູ່ມືຄູ, ສື່ການຮຽນ-ການສອນໃນທຸກສາຍ, ທຸກຊັ້ນຮຽນໃຫ້ມີມາດຖານຄວາມຮູ້ສູງຂຶ້ນ ແລະ ສອດຄ່ອງກັບຍຸກສະໄຫມ. ໄດ້ເພີ່ມທຶນຮອນເຂົ້າໃສ່ການສຶກສາ, ໄດ້ປັບປຸງການບໍລິຫານ ແລະ ຄຸ້ມຄອງການສຶກສາແຕ່ລະຂັ້ນ ຊຶ່ງໃນນັ້ນໄດ້ກຳນົດໂຄງປະກອບການຈັດຕັ້ງ, ສ້າງລະບຽບການ ແລະ ບຳລຸງສ້າງພະນັກງານ, ອັນເຮັດໃຫ້ການຈັດຕັ້ງເປັນເອກະພາບ ແລະ ມີລະບຽບແບບແຜນດີຂຶ້ນເທື່ອລະກ້າວ. ສັງຄົມກໍມີຄວາມຕື່ນຕົວປະກອບສ່ວນເຂົ້າໃນການພັດທະນາການສຶກສາຫຼາຍຂຶ້ນ. ຈາກນັ້ນເຮັດໃຫ້ວຽກງານການສຶກສານັບທັງປະລິມານ ແລະ ຄຸນນະພາບມີທ່າອ່ຽງດີຂຶ້ນກ່

ວາເກົ່າ. ສິ່ງສຳຄັນອີກອັນໜຶ່ງແມ່ນພວກເຮົາໄດ້ປັບປຸງການບໍລິຫານ ແລະ ຄຸ້ມຄອງການສຶກສາແຕ່ລະຂັ້ນຊຶ່ງໃນນັ້ນໄດ້ສ້າງກົດໝາຍການສຶກສາ, ກຳນົດໂຄງປະກອບການຈັດຕັ້ງ, ສ້າງລະບຽບການ ແລະ ບຳລຸງສ້າງພະນັກງານ, ອັນເຮັດໃຫ້ການຈັດຕັ້ງເປັນເອກະພາບ ແລະ ມີລະບຽບແບບແຜນດີຂຶ້ນເທື່ອລະກ້າວ. ສັງຄົມກໍມີຄວາມຕື່ນຕົວປະກອບສ່ວນເຂົ້າໃນການພັດທະນາການສຶກສາຫຼາຍຂຶ້ນ. ຈາກນັ້ນເຮັດໃຫ້ວຽກງານການສຶກສາ ນັບທັງປະລິມານ ແລະ ຄຸນະພາບມີທ່າອ່ຽງດີຂຶ້ນກວ່າເກົ່າ.

ສັງລວມແລ້ວນັບແຕ່ສົກຮຽນ 1995-96 ເປັນຕົ້ນມາວຽກງານສາມັນສຶກສາໂດຍສະເພາະແມ່ນຊັ້ນປະຖົມສຶກສາແມ່ນມີການຂະຫຍາຍຕົວຢ່າງສະໝ່ຳສະເໝີ, ສ່ວນຊັ້ນມັດທະຍົມສຶກສາ ແມ່ນມີການ ຂະຫຍາຍຕົວທາງດ້ານປະລິມານໄວສົມຄວນ. ຈາກການນຳໃຊ້ຫລັກສູດໃໝ່, ປຶ້ມແບບຮຽນໃໝ່ ແລະ ວິທີສິດສອນແບບໃໝ່ໄດ້ເຮັດໃຫ້ຄຸນນະພາບຂອງການສອນ-ການຮຽນ ມີທ່າກ້າວດີຂຶ້ນ. ຄຽງຄູ່ກັນນັ້ນກໍໄດ້ມີການປະຕິຮູບຫລັກສູດສາຍສ້າງຄູ ແລະ ອາຊີວະສຶກສາໄປພ້ອມ, ທັງໝົດນີ້ແມ່ນມີຈຸດປະສົງ ຢາກຍົກຄຸນ ນະພາບຂອງການສຶກສາໃຫ້ສູງຂຶ້ນເປັນລະບຽບຕໍ່ເນື່ອງກັນໄປ. ການລຶບລ້າງຄວາມບໍ່ຮູ້ໜັງສືກໍໄດ້ມີການປັບປຸງຮູບແບບ ແລະ ວິທີການໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງຜູ້ຮຽນໄດ້ດີກວ່າເກົ່າໂດຍໃຫ້ການຮຽນລຶບລ້າງຄວາມບໍ່ຮູ້ໜັງສືມີການຕິດພັນກັບການອົບຮົມອາຊີບ ແລະ ຍົກຄຸນນະພາບຊີວິດ ຂອງປະຊາຊົນໄປພ້ອມ. ການກໍ່ສ້າງກຳມະກອນ, ນາຍຊ່າງ ແລະ ວິສາວະກອນກໍໄດ້ນຳໃຊ້ທ່າແຮງ ແລະ ຄວາມອາດສາມາດຂອງພາກສ່ວນລັດ ແລະ ພາກສ່ວນເອກະຊົນແນໃສ່ປະຕິບັດນະໂຍບາຍການກໍ່ສ້າງແມ່ນເພື່ອຮັບໃຊ້ໃຫ້ທຸກພາກສ່ວນຕາມຄວາມຕ້ອງການຂອງຕະຫລາດແຮງງານ. ໃນຊ່ວງດຽວກັນນີ້ບັນດາຄູ ແລະ ຜູ້ບໍລິຫານການສຶກສາໃນທຸກລະດັບແມ່ນໄດ້ຮັບການຝຶກອົບຮົມດ້ານເຕັກນິກການສອນ ແລະ ການຄຸ້ມຄອງເປັນສ່ວນຫລາຍ. ການຕອບສະໜອງປຶ້ມແບບຮຽນໃນສາຍສາມັນສຶກສາແມ່ນມີຮັບໃຊ້ຢ່າງທົ່ວເຖິງ, ການປຸກສ້າງສ້ອມແປງອາຄານໂຮງຮຽນແມ່ນມີຈຳນວນນັບມື້ເພີ່ມຂຶ້ນ ແລະ ມີອາຄານໂຮງຮຽນ ໄດ້ມາດຕະຖານກໍມີຈຳນວນເພີ່ມຂຶ້ນ, ການຕອບສະໜອງອຸປະກອນຮັບໃຊ້ການສອນ-ການຮຽນ ແລະ ການສະໜອງທຶນໃຫ້ແກ່ຂະແໜງການສຶກສາກໍມີທ່າເພີ່ມຂຶ້ນ.

1.3-ບັນຫາ ແລະ ຂໍ້ຄົງຄ້າງຕ່າງໆ

ຜ່ານຈາກການຈັດຕັ້ງປະຕິບັດແຜນການ, ແຜນງານ ແລະ ໂຄງການຂອງຂະແໜງການໃນຊ່ວງ ທີ່ຜ່ານມາພວກເຮົາກໍ່ບໍ່ປາດສະຈາກສິ່ງຄົງຄ້າງທີ່ເປັນພື້ນຖານບາງດ້ານເປັນຕົ້ນ: ການຂະຫຍາຍຕົວ ດ້ານການ ສຶກສາແມ່ນເປັນຂະບວນດີແຕ່ໃນເຂດຕົວເມືອງໃຫຍ່ ຫຼື ເຂດທີ່ເສດຖະກິດທີ່ໄດ້ຮັບການ ພັດທະນາແດ່ແລ້ວຈຶ່ງເຮັດໃຫ້ມີການແຕກໂຕນກັນທາງດ້ານທີ່ຕັ້ງພູມສາດ (ລະຫວ່າງເຂດຕົວເມືອງ ແລະ ຊົນນະບົດ), ລະຫວ່າງເຜົ່າຊົນໂດຍສະເພາະໃນເຂດຊົນນະບົດຫ່າງໄກ ແລະ

ເຂດຊົນເຜົ່າການສຶກສາຍັງ ຂະຫຍາຍຕົວຊ້າ. ອີກປະການໜຶ່ງປະສິດທິພາບພາຍໃນຂອງລະບົບ ການສຶກສາຍັງບໍ່ທັນສູງ, ຕົ້ນສົກຮຽນມີເດັກເຂົ້າຮຽນຫຼາຍສົມຄວນແຕ່ໃນທ້າຍສົກຮຽນຍັງມີຜູ້ປະລະ ການຮຽນຫຼາຍສົມຄວນຈຶ່ງເປັນ ຜົນສະທ້ອນໃຫ້ມີການຄ້າງຫ້ອງ ຫຼື ຮຽນຄືນຊັ້ນຮຽນເກົ່າຫຼາຍໃນສົກ ຮຽນຕໍ່ໄປ. ຄູສອນສ່ວນຫຼວງຫຼາຍ ແມ່ນໄດ້ຮັບການກໍ່ສ້າງຕາມລະບົບທີ່ຍັງບໍ່ທັນໄດ້ມາດຕະຖານ ພຽງພໍ ຫຼື ບໍ່ໄດ້ຜ່ານການກໍ່ສ້າງຈາກໂຮງ ຮຽນສ້າງຄູ ທັງມີຄວາມຊົນເຄີຍໃນການສິດສອນແບບເກົ່າ, ຈຶ່ງມີຄວາມຈຳເປັນທີ່ຈະຕ້ອງໄດ້ບຳລຸງຍົກລະດັບ ໃຫ້ບັນດາຄູປະຈຳ ການທີ່ມີຢູ່ໃນປະຈຸບັນໃຫ້ມີ ຄວາມສາມາດໃນ ການສອນແບບໃໝ່ ແລະ ຮູ້ນຳໃຊ້ຫຼັກສູດ ແລະ ປຶ້ມແບບຮຽນໃໝ່. ການລົບລ້າງ ຄວາມບໍ່ຮູ້ໜັງສືທີ່ ໄດ້ປະກາດໄປແຕ່ສົກຮຽນ 1985-86 ແຕ່ຂາດຄວາມ ເອົາໃຈໃສ່ໃນການສືບຕໍ່ ຍົກລະດັບ ແລະ ສ້າງ ເງື່ອນໄຂໃຫ້ໄດ້ຮຽນຢ່າງຕໍ່ເນື່ອງຈຶ່ງພາໃຫ້ຜູ້ທີ່ລົບລ້າງແລ້ວກັບກັບໜັງສືຄືນໃໝ່ ກໍມີຫຼາຍຈຶ່ງເປັນສາຍ ເຫດໃຫ້ອັດຕາຜູ້ຮູ້ໜັງສືໃນຂອບເຂດທົ່ວປະເທດຍັງຕ່ຳ, ອັດຕາສ່ວນຄົນບໍ່ຮູ້ ໜັງສືຍັງບໍ່ທັນມີທ່າ ຈະຫຼຸດລົງເທື່ອ. ການສະໜອງຄູສອນໃນແຕ່ລະທ້ອງຖິ່ນຍັງມີຄວາມ ແຕກໂຕນ ກັນບາງແຂວງອັດຕາສ່ວນຄູທີ່ບໍ່ທັນໄດ້ມາດຖານກໍ່ສ້າງຍັງມີເປີເຊັນສູງຢູ່ ແລະ ການບຳລຸງສ້າງຄູ ປະເພດນີ້ກໍຍັງຊັກຊ້າ. ລະບົບການປະສານງານແຕ່ສູນກາງລົງເຖິງທ້ອງຖິ່ນຮາກຖານ (ແຂວງ, ເມືອງ ແລະ ໂຮງຮຽນ) ຍັງບໍ່ທັນ ເປັນ ລະບົບດີເທື່ອ.ພວກເຮົາຍັງມີຄວາມຈຳເປັນທີ່ຈະຕ້ອງໄດ້ສືບຕໍ່ ປັບປຸງແກ້ໄຂຫຼາຍວຽກງານຕື່ມ ອີກເປັນຕົ້ນ:

1- ການຂະຫຍາຍການສຶກສາໄປສູ່ເຂດຊົນເຜົ່າ ແລະ ເຂດຊົນນະບົດຫ່າງໄກສອກຫຼີກຍັງຊັກຊ້າ, ຈຶ່ງເຮັດໃຫ້ການພັດທະນາການສຶກສາຍັງມີການແຕກໂຕນກັນລະຫວ່າງເຂດ-ແຂວງ, ລະຫວ່າງ ເພດ ແລະ ເຜົ່າຊົນ,
2- ການເອົາໃຈໃສ່ຕໍ່ກັບວຽກງານການສຶກສາຂອງທຸກພາກຂອງສັງຄົມບໍ່ທັນສູງຈຶ່ງພາໃຫ້ໃຫ້ອັດຕາ ການຄ້າງຫ້ອງ ແລະ ປະລະ ການຮຽນໂດຍສະເພາະຊັ້ນປະຖົມຍັງສູງ,
3- ການລົບລ້າງຄວາມບໍ່ຮູ້ໜັງສືຍັງບໍ່ທັນທົ່ວເຖິງ ແລະ ຈຳນວນຄົນບໍ່ຮູ້ໜັງສືຍັງມີຫຼາຍ,
4- ການສ້າງຄູຍັງບໍ່ທັນຄົບຊຸດ ແລະ ການບຳລຸງຄູໃຫ້ໄດ້ມາດຕະຖານກໍ່ສ້າງຍັງຊັກຊ້າ ແລະ ອັດ ຕາສ່ວນນັກຮຽນຕໍ່ຄູໃນຫຼາຍຊັ້ນຮຽນຍັງຕ່ຳ,
5- ການກໍ່ສ້າງກຳມະກອນ ແລະ ນາຍຊ່າງຍັງບໍ່ທັນໄປຕາມຮູບທາດ ແລະ ບໍ່ທັນຕອບສະໜອງໄດ້ ຕາມຄວາມຕ້ອງການຂອງຕະຫຼາດແຮງງານ,
6- ລະບົບການຄຸ້ມຄອງ ແລະ ຕິດຕາມກວດກາການສຶກສາຍັງບໍ່ທັນເປັນລະບົບປົກກະຕິ,
7- ຄຸນະພາບການສຶກສາຍັງບໍ່ທັນສູງ.

ບັນຫາ ແລະ ຂໍ້ຄົງຄ້າງຕ່າງໆໃນການຈັດຕັ້ງປະຕິບັດແຜນການພັດທະນາການສຶກສາໃນຊ່ວງທີ່ ຜ່ານມາແມ່ນເກີດມາຈາກສາຍເຫດຕົ້ນຕໍດັ່ງລຸ່ມນີ້:

1.4-ສາຍເຫດທີ່ພາ ໃຫ້ມີຜົນສຳເລັດ ແລະ ມີຈຸດອ່ອນຂໍ້ຄົງຄ້າງຕ່າງໆ

1.4ກ-ສາຍເຫດທີ່ພາ ໃຫ້ມີຜົນສຳເລັດ

1. ຍ້ອນມີແນວທາງນະໂຍບາຍອັນຖືກຕ້ອງ, ໂດຍສະເພາະແມ່ນແນວທາງປ່ຽນແປງໃຫມ່ຢ່າງ ຮອບດ້ານຂອງພັກ.
2. ຍ້ອນຄວາມເອົາໃຈໃສ່ຂອງຄະນະພັກ, ອຳນາດການປົກຄອງ ແລະ ການປະກອບສ່ວນຂອງພໍ່ ແມ່ປະຊາຊົນບັນດາເຜົ່າ.
3. ຍ້ອນມີການລົງທຶນໃນລະດັບອັນແນ່ນອນໃສ່ການສຶກສາ, ນັບທັງທຶນພາຍໃນ ແລະ ຕ່າງປະ ເທດ.
4. ອັນສຳຄັນແມ່ນຍ້ອນຄວາມຕັດສິນໃຈຜ່ານຄວາມຫຍຸ້ງຍາກຂອງພະນັກງານ, ຄູ-ອາຈານ ແລະ ນັກຮຽນ-ນັກສຶກສາ ທີ່ໄດ້ບຸກບືນສູ້ຊົນເຮັດລ້ອນໜ້າທີ່ຂອງຕົນ.

1.4ຂ-ສາຍເຫດທີ່ພາ ໃຫ້ມີຈຸດອ່ອນ ແລະ ຂໍ້ຄົງຄ້າງຕ່າງໆ

1. ຍ້ອນເສດຖະກິດຊີວິດການເປັນຢູ່ ຂອງພະນັກງານ ແລະ ປະຊາຊົນເຮົາຝືດເຄືອງ ໂດຍສະ ເພາະແມ່ນຜູ້ສອນ ແລະ ຜູ້ຮຽນ.
2. ຍ້ອນທີ່ຕັ້ງພູມລຳເນົາຂອງປະຊາຊົນ ໂດຍສະເພາະຢູ່ເຂດຊົນນະບົດ ຍັງບໍ່ທັນໜັ້ນຄົງ ແລະ ຢູ່ ກະແຈກກະຈາຍ.
3. ຍ້ອນການລົງທຶນຍັງບໍ່ພຽງພໍຕາມຄວາມຮຽກຮ້ອງຕ້ອງການ, ແລະ ການນຳໃຊ້ທຶນຍັງມີຄວາມ ຫຍຸ້ງຍາກ.
4. ຍ້ອນລະບຽບການ ແລະ ນະໂຍບາຍຈຳນວນໜຶ່ງ ຍັງບໍ່ທັນເໝາະສົມ.
5. ຍ້ອນການສົມທົບການສຶກສາໃນໂຮງຮຽນ ກັບການສຶກສາໃນຄອບຄົວ ແລະ ສັງຄົມຍັງບໍ່ທັນ ເຮັດໄດ້ດີເທົ່າທີ່ຄວນ,
6. ອັນສຳຄັນແມ່ນຍ້ອນ ຄວາມຮູ້ຄວາມສາມາດຂອງພະນັກງານສຶກສາ ແລະ ຄູ-ອາຈານ ຈຳນວນ ໜຶ່ງຍັງຈຳກັດ, ຄວາມຮັບຜິດຊອບຍັງບໍ່ທັນສູງ, ແບບແຜນວິທີເຮັດວຽກ ລວມທັງວິທີສິ່ງຄວາມ ຮູ້ ຍັງໄປຕາມຄວາມຊິນເຄີຍເກົ່າ.

1.5- ຖອດຖອນບົດຮຽນ

ຜ່ານພຶດຕິກຳໃນການພັດທະນາການສຶກສາໃນຊຸມປີຜ່ານມາ, ພວກເຮົາສາມາດຖອດຖອນບົດຮຽນໄດ້ດັ່ງນີ້:

1-ໃນເງື່ອນໄຂຄືກັນບ່ອນໃດຄະນະພັກ ອຳນາດການປົກຄອງມີຄວາມຮັບຮູ້ອັນຖືກຕ້ອງກ່ຽວກັບຄວາມສຳຄັນ ແລະ ຄຸນປະໂຫຍດຂອງການສຶກສາ ທີ່ມີຕໍ່ພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ, ທັງມີຄວາມຮັບຜິດຊອບຢ່າງແທ້ຈິງໃນການຊີ້ນຳຊຸກຍູ້ ແລະ ສ້າງເງື່ອນໄຂສະດວກໃຫ້ແກ່ການພັດທະນາການສຶກສາໃນຂອບເຂດຕົນຮັບຜິດຊອບ. ບ່ອນນັ້ນການສຶກສາກໍ່ຂະຫຍາຍຕົວດີ.

2-ການພັດທະນາການສຶກສາ ຄວນເຮັດຢ່າງຮອບດ້ານ, ທັງປັນຍາສຶກສາ, ຄຸນສົມບັດສຶກສາ, ການສຶກສາອອກແຮງງານ, ພະລະສຶກສາ ແລະ ສິລະປະສຶກສາ ຊຶ່ງບໍ່ອາດຈະຖືເບົາດ້ານໃດດ້ານຫນຶ່ງໄດ້.

3-ຄວນມີນະໂຍບາຍ ແລະ ມີການລົງທຶນອັນເຫມາະສົມ ໃຫ້ແກ່ການສຶກສາ, ເປັນຕົ້ນແມ່ນນະໂຍບາຍຕໍ່ຄູ ໄປສອນຢູ່ເຂດຫ່າງໄກສອກຫຼີກ, ຄູສອນຫ້ອງຄວບ, ຄູສອນຫ້ອງ 2 ພາສາ ແລະ ຄູສອນຫ້ອງຮຽນຮ່ວມລະຫວ່າງເດັກພິການກັບເດັກປົກກະຕິຈຶ່ງຈະເຮັດໃຫ້ການສຶກສາຂະຫຍາຍຕົວໄວ ແລະ ທົ່ວເຖິງໄດ້.

4-ໃນການພັດທະນາການສຶກສາ, ຂອດສຳຄັນ ແລະ ມີລັກສະນະຕັດສິນກ່ວາຫມູ່ ກໍຍັງແມ່ນຄູ. ດັ່ງນັ້ນ ຄວນສຶກສາອົບຮົມຄູ ໃຫ້ເປັນຄົນດີມີຄຸນນະທຳ ສ້າງເງື່ອນໄຂເຮັດໃຫ້ຄູມີຄວາມຮູ້ຄວາມສາມາດ ແລະ ຮັກອາຊີບຂອງຕົນຢ່າງແທ້ຈິງ.

5-ຄວນໃຫ້ຄວາມສຳຄັນຕໍ່ກັບການບໍລິຫານ ແລະ ຄຸ້ມຄອງການສຶກສາ, ໃນນີ້ຄວນເອົາໃຈໃສ່ສ້າງຂໍ້ກຳນົດ ແລະ ລະບຽບການຕ່າງໆໃຫ້ຈະແຈ້ງ, ມີການແບ່ງຂັ້ນຄຸ້ມຄອງ ແລະ ແບ່ງງານຢ່າງລະອຽດ, ມີວິທີເຮັດວຽກອັນຖືກຕ້ອງ, ມີການກວດກາຊຸກຍູ້ ແລະ ແກ້ໄຂບັນຫາຢ່າງທັນການ, ບັນຈຸພະນັກງານທີ່ມີຄວາມຮູ້ຄວາມສາມາດ ສົມຄູ່ກັບວຽກງານທີ່ເຂົາເຈົ້າຮັບຜິດຊອບ, ໂດຍສະເພາະແມ່ນຄວນເອົາໃຈໃສ່ເລືອກຕັ້ງ ແລະ ສັບຊ້ອນຜູ້ຈະເປັນຫົວຫນ້າໂຮງຮຽນ.

6-ຄວນປະສານສົມທົບແທ້ນົນລະຫວ່າງການສຶກສາໃນໂຮງຮຽນ, ກັບການສຶກສາໃນຄອບຄົວ ແລະ ສັງຄົມ ເຮັດໃຫ້ການສຶກສາກາຍເປັນພາລະກິດຂອງຫມົດທຸກຄົນ, ພ້ອມກັນນັ້ນກໍຄວນສ້າງສິ່ງແວດລ້ອມທາງສັງຄົມ ໃຫ້ນັບມື້ນັບດີຂຶ້ນ ເພື່ອສົ່ງຜົນກະທົບອັນດີຕໍ່ການສຶກສາອົບຮົມຄົນຮຸ່ນຫນຸ່ມ.

7- ເອົາໃຈໃສ່ການສຶກສາອົບຮົມແນວຄິດຢ່າງເປັນປະຈຳໄປຄຽງຄູ່ກັບການປະຕິບັດນະໂຍບາຍ ແລະ ການສ້າງເງື່ອນໄຂຄວາມສະດວກໃຫ້ຜູ້ສອນ ແລະ ຜູ້ຮຽນໄດ້ຮັບການພັດທະນາຕົນເອງໃຫ້ດີຂຶ້ນ.

ພາກທີ່ສອງ

II. ທິດທາງແຜນການພັດທະນາການສຶກສາ 5 ປີຄັ້ງທີ V (2001-2005)

2.1-ບ່ອນອີງ ໃນການສ້າງແຜນພັດທະນາການສຶກສາ

ການສ້າງແຜນພັດທະນາການສຶກສາໃນຊ່ວງ 5 ປີຕໍ່ໜ້າແມ່ນໄດ້ອີງໃສ່ທ່າອ່ຽງລວມຂອງສາກົນໂດຍມີການປະຕິຮູບໂຄງສ້າງຂອງແຜນການດ້ວຍການປະຕິຮູບຈາກ 5 ແຜນງານທີ່ເຄີຍຈັດຕັ້ງປະຕິບັດຜ່ານມາເປັນ 4 ແຜນງານ ແລະ ອີງໃສ່ຜົນສຳເລັດໃນແຕ່ລະດ້ານພໍສັງລວມໄດ້ຕໍ່ໄປນີ້:

2.1.1-ດ້ານການຂະຫຍາຍໂອກາດ ແລະ ໃຫ້ຄວາມເປັນທຳ

ໃນຊ່ວງແຕ່ປີ 1996 ຫາ 2000, ການສຶກສາໄດ້ຂະຫຍາຍຕົວໄວສົມຄວນ, ປະລິມານນັກຮຽນນັກສຶກສາໃນທຸກລະດັບໄດ້ເພີ່ມຂຶ້ນຢ່າງໄວວາ, ອັດຕາສ່ວນເຂົ້າຮຽນແຕ່ລະຊັ້ນໄດ້ເພີ່ມຂຶ້ນ, ແຕ່ເບິ່ງເລິກເຂົ້າໄປແລ້ວເຫັນວ່າ ການສຶກສາຂະຫຍາຍຕົວຍັງບໍ່ທົ່ວເຖິງ, ບໍ່ໜັກແໜ້ນ, ຮູບການຈັດຕັ້ງສິດສອນແລະ ຮ່ຳຮຽນຍັງບໍ່ທັນແທດເໝາະ. ເດັກນ້ອຍໄວອະນຸບານສ່ວນຫຼາຍບໍ່ມີໂອກາດເຂົ້າຮຽນ. ສົມທຽບ ສົກຮຽນ 1999/2000 ໃສ່ ສົກຮຽນ 1995/96 ແລ້ວເຫັນວ່າ ໃນຊັ້ນປະຖົມອັດຕາສ່ວນເຂົ້າຮຽນສຸດທິສະເລ່ຍທົ່ວປະເທດ ເພີ່ມຈາກ 69 % ເປັນ 77.3 % ແຕ່ຍັງມີການແຕກໂຕນກັນລະຫວ່າງເພດ (ຊາຍ 80% ຍິງ 74%) ແລະ ລະຫວ່າງແຂວງ (ແຂວງຕ່ຳສຸດ 51% ແລະ ແຂວງສູງສຸດ 94%) ນອກນັ້ນການປະລະການຮຽນກໍ່ຍັງສູງ ຊຶ່ງມີສາຍເຫດຕົ້ນຕໍແມ່ນປະລະໄປຕາມລະດູການຜະລິດ, ອອກແຮງງານຊ່ວຍພໍ່ແມ່ລ້ຽງນ້ອງ ແລະ ຍ້ອນສະຖານທີ່ຕັ້ງໂຮງຮຽນບໍ່ເໝາະສົມ. ໃນຊັ້ນມັດທະຍົມສຶກສາອັດຕາສ່ວນເຂົ້າຮຽນລວມຕອນຕົ້ນໄດ້ເພີ່ມຈາກ 33% ມາເປັນ 45.8% ແລະ ຕອນປາຍຈາກ 13.6% ເປັນ 22.6% ແຕ່ຍັງມີການແຕກໂຕນກັນລະຫວ່າງເພດ (ຊັ້ນມັດທະຍົມຕົ້ນ ເພດຊາຍ 52% ຍິງ 39% ແລະ ຊັ້ນມັດທະຍົມປາຍ ເພດຊາຍ 27% ຍິງ 18%) ແລະ ລະຫວ່າງແຂວງ (ຊັ້ນມັດທະຍົມຕົ້ນ ແຂວງຕ່ຳສຸດ 19% ແລະ ແຂວງສູງສຸດ 85% ແລະ ຊັ້ນມັດທະຍົມປາຍ ແຂວງຕ່ຳສຸດ 9% ແລະ ແຂວງສູງສຸດ 54%), ຍັງມີການປະລະການຮຽນໃນຕອນຕົ້ນ 14.6% ແລະ ຕອນປາຍ 10.8% ບໍ່ທັນມີວິທີການສ້າງເງື່ອນໄຂໃຫ້ເດັກນ້ອຍເຂດສອກຫຼີກ ແລະ ເດັກຍິງເພື່ອເຂົ້າຮຽນຈົນຈົບຊັ້ນຮຽນ. ເວົ້າລວມ ທາງດ້ານພູມສາດ, ເສດຖະກິດ, ວັດທະນະທຳ, ສັງຄົມ ຍັງມີ 2 ເຂດການສຶກສາຈະແຈ້ງສົມຄວນ ອັດຕາສ່ວນເຂົ້າຮຽນມີການຫຼຸດໂຕນກັນ:-ເຂດຕົວເມືອງທີ່ງພຽງຄວາມຕ້ອງການຮຽນສູງຂຶ້ນ, ມີສະພາບນັກຮຽນລົ້ນຫ້ອງ. ໂຮງຮຽນເອກະຊົນ ແລະ ການຮຽນເພີ່ມ-ຮຽນພິເສດ ກາຍເປັນແນວຄວາມຄິດທີ່ພໍ່ແມ່ຜູ້ປົກຄອງສ່ວນຫຼາຍຮັບເອົາໄດ້; ສ່ວນເຂດພູດອຍ : ຂາດຄວາມກະຕືລືລົ້ນຕໍ່ການຮຽນ, ຮີດຄອງປະເພນີບາງແຫ່ງກີດໜ່ວງການໄປຮຽນຂອງເດັກ

ເພດຍິງ, ພາສາລາວບໍ່ແມ່ນພາສາແມ່ການສິດສອນຈຶ່ງຫຍຸ້ງຍາກ, ບໍ່ມີໂຮງຮຽນ, ບໍ່ມີຄູ, ບາງບ່ອນມີໂຮງຮຽນມີຄູແລ້ວກໍ່ບໍ່ມີນັກຮຽນ. ອາຊີວະສຶກສາ ແລະ ການສຶກສາຊັ້ນສູງ : ມີທ່າຂະຫຍາຍຕົວດີ ແຕ່ຍັງມີຂີດຈຳກັດໃນການລົງທຶນເພື່ອເພີ່ມຄວາມສາມາດຮັບນັກຮຽນນັກສຶກສາ, ຂະຫຍາຍວິຊາ ຮຽນ, ລົງທຶນເພື່ອປ່ຽນຖ່າຍ ສິ້ນເປືອງພື້ນຖານວັດຖຸອຸປະກອນ ເພື່ອໃຫ້ສອດຄ່ອງກັບຄວາມຕ້ອງ ການຂອງສັງຄົມ, ຍ້ອນບໍ່ມີບ່ອນຮຽນ, ນັກຮຽນຈົບຊັ້ນມັດທະຍົມຕອນຕົ້ນ 40 ພັນກວ່າຄົນ,ຈົບຊັ້ນ ມັດທະຍົມຕອນປາຍ 18 ພັນກວ່າຄົນ, ຈຳນວນນັກຮຽນທີ່ຈົບສາມັນສຶກສາບໍ່ມີໂອກາດເຂົ້າຮຽນຕໍ່ລະ ດັບຊັ້ນກາງ,ຊັ້ນສູງ ນັບມື້ນັບຫຼາຍ, ແຕ່ລະປີມີຜູ້ສອບເສັງເຂົ້າຮຽນອາຊີວະສຶກສາ ແລະ ການສຶກສາ ຊັ້ນສູງປະມານ 10,000 ຄົນ ລວມທັງພາກລັດ ແລະ ພາກເອກະຊົນສາມາດຮັບໄດ້ປະມານ 6,000 ຄົນ. ນັກຮຽນເພດຍິງໃນອາຊີວະສຶກສາກວມພຽງ 37% ແລະໃນການສຶກສາຊັ້ນສູງ 34% ປະເທດ ເຮົາ ມີນັກສຶກສາ 341 ຄົນ ຕໍ່ພົນລະເມືອງ 100,000ຄົນ, ເປັນອັດຕາສ່ວນທີ່ຫຼຸດໂຕນກັບປະເທດໃກ້ ຄຽງຫຼາຍ. ການສຶກສາພາກເອກະຊົນ ກໍ່ຕົວຂຶ້ນແລ້ວ ຍັງພໍແຕ່ເປັນໜໍ່ແໜງ, ສ່ວນໃຫຍ່ຈະເປັນຊັ້ນ ອະນຸບານ, ປະຖົມສາມັນ, ອົບຮົມວິຊາຊີບ ແລະ ອາຊີວະສຶກສາ. ການດຶງເອົາແຮງບີ່ມຊ້ອນຂອງ ພາກເອກະຊົນ ແລະ ການຈັດຕັ້ງສັງຄົມປະກອບສ່ວນເຂົ້າໃນພາລະກິດການສຶກສາໃນທຸກລະດັບ ກໍ ຍັງບໍ່ທັນໄດ້ເຮັດຢ່າງຕັ້ງໜ້າເທື່ອ, ການຄຸ້ມຄອງຍັງບໍ່ຮັດກຸມ, ນະໂຍບາຍສົ່ງເສີມກໍ່ບໍ່ທັນເປັນຮູບປະ ທຳ. ໃນປະຊາຊົນທົ່ວໄປ ຄົນກຶກໜັງສືຍັງມີຫຼາຍ ໃນປີ 2000 ອັດຕາສ່ວນຄົນ 15 ປີ ຂຶ້ນໄປ ກຶກໜັງ ສື ຍັງມີເຖິງ 26%.

2.1.2- ດ້ານຄຸນນະພາບ

ໃນຊຸມປີທີ່ຜ່ານມາໄດ້ມີການສ້າງປັດໄຈພື້ນຖານບາງຢ່າງທີ່ເອື້ອອຳນວຍໃຫ້ແກ່ການຍົກຄຸ ນະພາບຂອງການສຶກສາ ເຊັ່ນ: ໄດ້ ພັດທະນາຫຼັກສູດ ແລະ ປຶ້ມແບບຮຽນໃໝ່ ທັ້ງສາຍສາມັນ ແລະສາຍສ້າງຄູ ; ຄູຊັ້ນປະຖົມ ແລະ ມັດທະຍົມຕອນຕົ້ນ. ຄູໃນໂຮງຮຽນສ້າງຄູ ແລະ ວິທະຍາໄລ ຄູກໍ່ໄດ້ຮັບການອົບຮົມກ່ຽວກັບການນຳໃຊ້ຫຼັກສູດ ແລະ ປຶ້ມແບບຮຽນໃໝ່. ບັນຫາພື້ນຖານດ້ານຄຸນ ນະພາບຂອງການສຶກສາແມ່ນ: 1)- ຄຸນະພາບຂອງຄູເວົ້າທົ່ວໄປແມ່ນຍັງຕ່ຳ ແລະ ການນຳໃຊ້ຄູ, ການແຈກຢາຍຄູ ຍັງບໍ່ທັນທົ່ວເຖິງ; 2)- ຫຼັກສູດ ແລະ ປຶ້ມແບບຮຽນໃໝ່ໃນສາຍສາມັນໂດຍສະ ເພາະຊັ້ນປະຖົມກໍ່ຍັງມີຫຼາຍຫົວຂໍ້ ທີ່ເຂົ້າໃຈຍາກສຳລັບນັກ ຮຽນ ແລະ ຄູ ແລະ ໂຮງຮຽນປະ ຖົມຫຼາຍແຫ່ງຍັງຂາດຫຼັກສູດ ແລະ ປຶ້ມແບບຮຽນ; 3)- ອາຄານຮຽນ, ຫ້ອງຮຽນສາມັນ ສ່ວນ ໃຫຍ່ປະມານ 60% ຂອງໂຮງຮຽນປະຖົມ ແມ່ນມີລັກສະນະຊົ່ວຄາວ, ໂຕະ-ຕັ່ງກໍ່ບໍ່ພຽງພໍ, ຫຼາຍ ຫ້ອງຮຽນຍັງແອອັດເກີນໄປ, ສ້າງຄວາມຫຍຸ້ງຍາກໃນການຈັດການຮຽນ-ການສອນ.

2.1.3-ດ້ານຄວາມສອດຄ່ອງ

ໂດຍທົ່ວໄປແລ້ວ ນັບແຕ່ສ້າງຕັ້ງລະບອບໃຫມ່ມາ ພວກເຮົາໄດ້ເອົາໃຈໃສ່ສ້າງກຳມະກອນ ຊຳນານງານ, ພະນັກງານເຕັກນິກ, ວິສະວະກອນ ແລະ ນັກວິຊາການຊັ້ນສູງ ຮັບໃຊ້ຕາມຄວາມຕ້ອງ ການຂອງສັງຄົມ ໄດ້ດີສົມຄວນ. ນັກຮຽນນັກສຶກສາທີ່ຈົບຈາກສະຖາບັນຕ່າງໆ ໄດ້ເຂົ້າສູ່ຕະຫລາດ ແຮງງານ ແລະ ເປັນກຳລັງອັນສຳຄັນໃນການປະຕິບັດຫນ້າທີ່ປົກປັກຮັກສາແລະສ້າງສາປະເທດ ຊາດໃຫ້ຈະເລີນກ້າວຫນ້າ. ການຄຸ້ມຄ້ອງກ່ຽວກັບຄວາມສອດຄ່ອງຂອງການສຶກສາໃນແຕ່ລະລະດັບ ແມ່ນເກືອບບໍ່ໄດ້ເຮັດ. ພວກເຮົາໄດ້ເອົາໃຈໃສ່ແຕ່ການກໍ່ສ້າງ ແຕ່ວ່າການນຳໃຊ້ຜົນຜະລິດຂອງ ພວກເຮົາແມ່ນບໍ່ໄດ້ເອົາໃຈໃສ່ເລີຍ. ເມື່ອເວລາໃດມີໂຄງການຊ່ວຍເຫລືອຈາກຕ່າງປະເທດ ກໍດຳ ເນີນການສຶກສາວິໄຈກ່ຽວກັບການນຳໃຊ້ຜົນຜະລິດຂອງສະຖາບັນການສຶກສາ. ຜົນຜະລິດຂອງການ ສຶກສາໄດ້ຊີ້ໃຫ້ເຫັນວ່າ**ຄຸນະພາບຂອງການສຶກສາຍັງຕ່ຳແລະວິຊາສະເພາະທີ່ຮຽນກໍບໍ່ຕອບສະ** ຫນອງກັບຄວາມຕ້ອງການໃນການຂະຫຍາຍຕົວໄວຂອງເສດຖະກິດ. ນອກຈາກນັ້ນ ຍັງຂາດລະບົບ ແນະແນວວິຊາຊີບ ສຳລັບໂຮງຮຽນອາຊີວະສຶກສາ ແລະ ການສຶກສາຊັ້ນສູງ ເພື່ອໃຫ້ຄຳແນະນຳນັກ ສຶກສາໃນການຊອກວຽກເຮັດງານທຳ. ການພົວພັນລະຫວ່າງຂະແຫນງສຶກສາ ແລະ ຂະແຫນງການ ອື່ນໆເພື່ອເກັບກຳຂໍ້ມູນກ່ຽວກັບຄວາມຕ້ອງການແຮງງານ ແມ່ນເຮັດບໍ່ທັນໄດ້ດີ. **ສຳລັບໂຮງຮຽນ ສ້າງຄູໃນທຸກລະດັບກໍສັງເກດເຫັນວ່າມີການຂາດເຂີນຄູທີ່ໄດ້ມາດຖານ|ເຊິ່ງຄາດວ່າຈະມີເຖິງ 2000** ຄົນໃນປີ 2001-2002. ການສ້າງຄູມັດທະຍົມຍັງບໍ່ຕອບສະຫນອງກັບຄວາມຕ້ອງການ ທາງຫ້ານ ປະລິມານກໍຄືຄຸນພາບ. ໂດຍທົ່ວໄປການຈັດການສຶກສາຍັງບໍ່ທັນຄົບຊຸດ ແລະ ບໍ່ມີລັກສະນະເປັນ ຮູບທາດ ຍ້ອນເຮົາບໍ່ທັນໄດ້ເອົາໃຈໃສ່ເທົ່າທີ່ຄວນກ່ຽວກັບບັນຫາຄວາມສອດຄ່ອງຂອງການສຶກສາ.

2.1.4-ດ້ານການຄຸ້ມຄອງ

ລະບົບການບໍລິຫານການສຶກສາປະກອບດ້ວຍກະຊວງສຶກສາທິການ, ພະແນກສຶກສາປະ ຈຳແຂວງ ແລະ ຫ້ອງການສຶກສາປະຈຳເມືອງຊຶ່ງເຮັດຫນ້າທີ່ບໍລິຫານການສຶກສາຕາມສາຍຂະ ແຫນງການ; ແຕ່ເມື່ອເວົ້າເຖິງຄວາມສາມາດໃນການບໍລິຫານແລ້ວເຫັນວ່າ ອົງການບໍລິຫານ ແລະ ຄຸ້ມຄອງການສຶກສາຍັງບໍ່ຫນັກແຫນ້ນເຂັ້ມແຂງຢ່າງພຽງພໍເພື່ອຮັບປະກັນໃຫ້ແກ່ການວາງແຜນການ , ການຈັດຕັ້ງປະຕິບັດ, ການກວດກາ,ການຕິດຕາມ ແລະ ການປະເມີນຜົນການສຶກສາ. ລະບົບ ຂ່າວສານການສຶກສາໄດ້ເລີ່ມຕົ້ນເຂົ້າສູ່ລະບົບເທື່ອລະກ້າວນັບແຕ່ປີ 1992 ແຕ່ຍັງມີຄວາມຈຳເປັນ ຕ້ອງໄດ້ສືບຕໍ່ປັບປຸງ ແລະ ພັດທະນາໃຫ້ມີການຮັບປະກັນດີຍິ່ງຂຶ້ນເລີ່ມຈາກການສ້າງໃຫ້ເປັນລະ ບົບເຄືອຂ່າຍຄຸ້ມຄອງຂ່າວສານແຕ່ສູນກາງຫາທ້ອງຖິ່ນ (ກະຊວງ, ແຂວງ, ເມືອງ ແລະ ໂຮງຮຽນ) ແມ່ນເປັນຄວາມຮຽກຮ້ອງຕ້ອງການອັນຮີບດ່ວນຂອງຂະແໜງການເພື່ອໃຫ້ການພົວພັນຫມົດລະ ບົບການສຶກສາຮັບປະກັນດີຂຶ້ນ.

ການກຳນົດແຜນຍຸດທະສາດ, ແຜນພັດທະນາໄລຍະ 5 ປີ ແລະ ແຜນຈັດຕັ້ງປະຕິບັດປະຈຳປີລ້ວນແຕ່ມີບົດບາດສຳຄັນຕໍ່ກັບການແກ້ໄຂ ວຽກງານບູລິມະສິດຂອງກົນໄກຄຸ້ມຄອງລັດ-ຄຸ້ມຄອງສັງຄົມໃນແຕ່ລະໄລຍະ. ກົນໄກການສ້າງ ແລະ ການຈັດຕັ້ງປະຕິບັດແຜນພັດທະນາການສຶກສາຍັງບໍ່ທັນເປັນລະບົບຄົບຊຸດ,ປະສິດທິພາບຂອງການຈັດຕັ້ງປະຕິບັດແຜນການ, ແຜນງານ ແລະ ໂຄງການບໍ່ທັນສູງຍ້ອນຂາດການຕິດຕາມປະເມີນຜົນ. ດ້ານພະນັກງານຂອງຂະແໜງສຶກສາກໍ່ໄດ້ກໍ່ສ້າງນັກວິຊາການສະເພາະແຕ່ລະຕຳແໜ່ງໄດ້ຈຳນວນໜຶ່ງແຕ່ການນຳໃຊ້ເຂົາເຈົ້າຍັງບໍ່ທັນຖືກກັບວິຊາການທີ່ເຂົາເຈົ້າອົບຮົມມາຈຶ່ງເຮັດໃຫ້ການນຳໃຊ້ບໍ່ມີປະສິດທິຜົນເທົ່າທີ່ຄວນ. ການບໍລິຫານ ແລະ ຄຸ້ມຄອງການສຶກສາຈຶ່ງເຮັດໃຫ້ການນຳພາວຽກງານຢູ່ອົງການຈັດຕັ້ງລະດັບຕ່າງໆ ໂດຍສະເພາະຢູ່ລະດັບໂຮງຮຽນບໍ່ມີປະສິດທິຜົນເທົ່າທີ່ຄວນ. ການກວດກາການສຶກສາຍັງບໍ່ທັນມີບົດບາດສູງຢູ່ໃນລະບົບການປົກຄອງ ແລະ ຄຸ້ມຄອງລັດ. ການສະໜອງງົບປະມານໃສ່ການສຶກສາບໍ່ໄດ້ເພີ່ມຂຶ້ນສົມຄູ່ກັບການຂະຫຍາຍຕົວຂອງຈຳນວນນັກຮຽນ-ນັກສຶກສາ, ການໃຊ້ຈ່າຍ ແຕ່ລະຂັ້ນ-ແຕ່ລະຂອດຍັງຄຸມເຄືອແກ່ຍາວເວລາ ແລະ ບໍ່ທັນຮັບປະກັນດ້ານ ປະສິດທິຜົນ. ແຫຼ່ງລົງທຶນສ່ວນໃຫຍ່ແມ່ນໄດ້ມາຈາກການກູ້ຢືມ ແລະ ຊ່ວຍເຫຼືອລ້າຈາກຕ່າງປະເທດ ແລະ ຄວາມຕ້ອງການຂອງການລົງທຶນຂອງຂະແໜງການຍັງສູງຍ້ອນອາຄານໂຮງຮຽນທີ່ຢູ່ໃນສະພາບຊຳມຊາຊົ່ວຄາວຍັງກວມອັດຕາສ່ວນສູງ ແລະ ອຸປະກອນຮັບໃຊ້ການສອນການຮຽນຍັງຂາດເຂີນຫລາຍ. ຄວາມຈຳເປັນໃນສະເພາະໜ້າແມ່ນຄວາມຕ້ອງການດ້ານການໃຊ້ຈ່າຍໃນຮ່ວງບໍລິຫານໃຫ້ສາມາດອຸ້ມຊູການລົງທຶນໄດ້, ຍັງມີຄວາມຈຳເປັນຕ້ອງໄດ້ເພີ່ມທຶນສົມທົບຂອງລັດ ແລະ ຂອງຊຸມຊົນປະກອບສ່ວນດ້ານງົບປະມານໃຫ້ແກ່ການສຶກສາຫຼາຍຂຶ້ນ.

2.1.5-ດ້ານການລົງທຶນ ແລະ ການໃຊ້ຈ່າຍຕ່າງໆ

ອີງຕາມການສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນການພັດທະນາເສດຖະກິດ-ສັງຄົມ ຂອງປີ 1995-96 ແລະ 1999-2000 ຜ່ານມາເຫັນປະເທດເຮົາໄດ້ພົບຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຫຼາຍປະການ, ໂດຍສະເພາະແມ່ນວິກິດການທາງດ້ານເສດຖະກິດ-ການເງິນຂອງພາກພື້ນຂອງພາກພື້ນທີ່ຜັນປ່ຽນໄປໃນທາງລົບສຳລັບການພັດທະນາ ແລະ ຍັງບໍ່ທັນມີທ່ວງທ່າທີ່ຈະຟື້ນຕົວຂຶ້ນໃນອະນາຄົດອັນໃກ້ນີ້ໄດ້ເທື່ອ. ສະພາບການດັ່ງກ່າວໄດ້ມີຜົນກະທົບຕໍ່ລະບົບການເງິນຂອງປະເທດເຮົາພົບຄວາມຫຍຸ້ງຍາກ, ງົບປະມານຂາດດຸນຢູ່ໃນລະດັບສູງ, ສ້າງໃຫ້ມີໜີ້ສິນຄຸມເຄືອ ແລະ ລາຄາສິນຄ້າມີການເໜັງຕີງແຮງ. ໄປຄຽງຄູ່ກັນນັ້ນໄພເງິນເຟີ້ ແລະ ອັດຕາແລກປ່ຽນມີການເພີ່ມຂຶ້ນສູງ ຊຶ່ງບໍ່ສາມາດຄວບຄຸມໃຫ້ຢູ່ໃນລະດັບຄາດໝາຍທີ່ກຳນົດໄວ້ຄື: ອັດຕາເງິນເຟີ້ໄດ້ເພີ່ມຂຶ້ນໂດຍສະເລ່ຍ 37.4% ໃນປີ 1998 ແລະ ອັດຕາແລກປ່ຽນໄດ້ເພີ່ມຂຶ້ນໄວຈາກ 4,225 ກີບ/ໂດລາ ໃນເດືອນ 12/1998 ເປັນ 9,420 ກີບ/ໂດລາໃນເດືອນ 6/1999. ໃນຊ່ວງດຽວກັນນີ້ ການຜະລິດ

ຂອງທຸກຂະແໜງເສດຖະກິດມີຈັງຫວະຊ້າລົງ, ເຮັດໃຫ້ອັດຕາຂະຫຍາຍຂອງລວມຍອດຜະລິດຕະພັນພາຍໃນຫຼຸດຈາກ 7.2% ໃນປີ 1997 ເປັນພຽງແຕ່ 5 % ໃນປີ 1999/2000.

ສະພາບການໃຊ້ຈ່າຍເຂົ້າໃສ່ແຜນພັດທະນາການສຶກສາແຕ່ 1996-2000 ແມ່ນມີຂໍ້ຈຳກັດແຕ່ຄວາມຮຽກຮ້ອງຕ້ອງການຂອງສັງຄົມຕໍ່ກັບການສຶກສາເພື່ອສ້າງຄົນໃຫ້ຕອບສະໜອງໄດ້ຕາມຄວາມຕ້ອງການທາງດ້ານເສດຖະກິດການຕະຫຼາດທີ່ຫາກໍ່ສ້າງຕັ້ງຂຶ້ນໃໝ່ທີ່ຍັງຕົກຢູ່ໃນໄລຍະຂ້າມຜ່ານ. ໃນຊ່ວງທີ່ຜ່ານມາການແບ່ງປັນງົບປະມານຮ່ວງບໍລິຫານປົກກະຕິຮັບໃຊ້ຂະແໜງການສຶກສາໃນແຕ່ລະລະດັບການຄຸ້ມຄອງມີການແຕກຕ່າງກັນຄື: -ປະມານ 75% ຮັບໃຊ້ສາຍສາມັນສຶກສາໂດຍສະເພາະແມ່ນຮັບໃຊ້ຊັ້ນປະຖົມສຶກສາ, 4% ສຳລັບຊັ້ນອະນຸບານ, 11% ສຳລັບອາຊີວະສຶກສາ-ການສ້າງຄູ ແລະ ການສຶກສາຊັ້ນສູງ ແລະ 9% ສຳລັບການບໍລິຫານ ແລະ ຄຸ້ມຄອງການສຶກສາໃນທຸກລະດັບ. ຖ້າສົມທຽບການໃຊ້ຈ່າຍຕາມມູນຄ່າຫົວໜ່ວຍຕໍ່ນັກຮຽນ ແລະ ນັກສຶກສາແລ້ວເຫັນວ່າມູນຄ່າຫົວໜ່ວຍຂອງນັກສຶກສາຊັ້ນສູງແມ່ນຕົກເກືອບ 9 ເທື່ອຂອງມູນຄ່າຫົວໜ່ວຍຂອງສາຍສາມັນ; ຈາກຂໍ້ມູນຂອງປີງົບປະມານ 1996-97, ມູນຄ່າຫົວໜ່ວຍຂອງສາຍສາມັນລວມແມ່ນ 26,353 ກີບ/ຄົນ (ຊັ້ນອະນຸບານ 44,800 ກີບ, ຊັ້ນປະຖົມ 24,524 ກີບ, ມັດທະຍົມຕົ້ນ 46,129 ກີບ ແລະ ມັດທະຍົມປາຍ 55,282 ກີບ); ສ່ວນສາຍອາຊີວະສຶກສາ ແລະ ການສຶກສາຊັ້ນສູງແມ່ນ (196,991 ກີບ/ຄົນ) (ອາຊີວະສຶກສາ 252,528 ກີບ, ສ້າງຄູ 237,192 ກີບ ແລະ ຊັ້ນສູງ 182,508 ກີບ). ອັດຕາສ່ວນແບ່ງງົບປະມານໃສ່ການສຶກສາໃນປີ (1996-97) ແມ່ນກວມເອົາ 3.1% ຂອງຍອດຜະລິດຕະພັນພາຍໃນ ແລະ ເທົ່າກັບ 13.0% ຂອງງົບປະມານຂອງລັດທັງໝົດ (ຮ່ວງບໍລິຫານກວມ 55.2% ແລະ ຮ່ວງລົງທຶນ 44.8%). ຖ້າສົມທຽບການແບ່ງປັນງົບປະມານກັບບັນດາປະເທດໃກ້ຄຽງເຫັນວ່າອັດຕາສ່ວນແບ່ງການລົງທຶນ ຂອງການສຶກສາລາວແມ່ນສູງແຕ່ອັດຕາສ່ວນແບ່ງຂອງຮ່ວງບໍລິຫານປົກກະຕິແມ່ນຕ່ຳຫລາຍຈຶ່ງພາໃຫ້ວຽກງານບໍລິຫານ ແລະ ຄຸ້ມຄອງທົ່ວຂະແໜງການສຶກສາພົບຄວາມຫຍຸ້ງຍາກ. ການແບ່ງປັນລາຍຈ່າຍຂອງຂະແໜງສຶກສາຢູ່ ສ.ປ.ປ.ລາວໃນສົກຮຽນດຽວກັນນີ້ມີຄື: 83% ເປັນເງິນເດືອນຄູສອນ, 6% ເປັນເງິນເດືອນຜູ້ບໍລິຫານ, 8% ເປັນເງິນບໍລິຫານ ແລະ 3% ເປັນເງິນສະໜັບສະໜຸນການຂອງນັກສຶກສາອາຊີວະສຶກສາ ແລະ ການສຶກສາຊັ້ນສູງ. ແຫຼ່ງລາຍໄດ້ເພື່ອໃຊ້ຈ່າຍໃນລະດັບໂຮງຮຽນພາລະຮັບຜິດຊອບຂອງລັດຍັງສູງ (ລັດ 86%, ອົງການເອກະຊົນ 5%, ຊຸມຊົນ 5%, ອົງການໃຫ້ທຶນ 4% ແລະ ໂຮງຮຽນກຸ້ມຕົນເອງ 1%), ໃນບ້ວງງົບປະມານຂອງລັດນັ້ນ 63% ແມ່ນມາຈາກແຫຼ່ງທຶນພາຍໃນ ແລະ 37% ມາຈາກແຫຼ່ງທຶນຕ່າງປະເທດທີ່ເປັນທຶນຊ່ວຍເຫຼືອລ້າ ຫລື ກູ້ຢືມ; ຕັ້ງແຕ່ສົກຮຽນ 2000-2005 ການສະໜອງແຫຼ່ງທຶນໃສ່ບັນດາໂຄງການພັດທະນາການສຶກສາມີທັງໝົດປະມານ 284.68 ລ້ານໂດລາ (ທຶນກູ້ຢືມ 119.42 ລ້ານໂດລາເທົ່າກັບ 41.9%, ທຶນຊ່ວຍເຫຼືອລ້າ 144.10 ລ້ານໂດລາ ເທົ່າກັບ 50.6%, ທຶນສົມທົບຂອງລັດຖະບານ 20.36 ລ້ານໂດລາເທົ່າກັບ 10.2% ແລະ ທຶນປະກອບສ່ວນຂອງປະ

ຊາຊິນ 0.8 ລ້ານໂດລາເທົ່າກັບ 0.3%). ຂະແໜງສຶກສາໄດ້ມີການເພີ່ມການລົງທຶນໃຫ້ແກ່ການພັດທະນາຄູເປັນບູລິມະສິດແຕ່ຍັງບໍ່ທັນສາມາດແກ້ໄຂບັນຫາວຸງການການກໍ່ສ້ຳ ແລະ ບຳລຸງຄູໄດ້ໃຫ້ຫຼຸດລົງໄດ້ເທື່ອຍ້ອນວ່ານັກຮຽນ-ນັກສຶກສາບໍ່ຢາກຮຽນເປັນຄູ, ຜູ້ທີ່ຮຽນຈົບສ້ຳງຄູແລ້ວກໍບໍ່ຢາກໄປສອນຢູ່ບ່ອນທີ່ມີຄວາມຕ້ອງການໄປພ້ອມດຽວກັນຄູເກົ່ຳທີ່ສິດສອນຢູ່ກໍຍັງປະລະໜ້ຳທີ່ຢູ່ເປັນປະຈຳ; ຊຶ່ງມີຜົນກະທົບໃຫ້ແກ່ການລົງທຶນໃສ່ການກໍ່ສ້ຳງ ແລະ ບຳລຸງຄູບໍ່ໄດ້ຮັບປະສິດທິຜົນສູງ (ລາຍລະອຽດເບິ່ງພາກພະໜວກ 1).

ສ້ຳງລວມແລ້ວນັບແຕ່ສົ້ນທຮວມ 1995-96 ເປັນຕົ້ນມາວຽກງານສ້ຳມັນສຶກສາໂດຍສະເພາະແມ່ນຊັ້ນປະຖົມສຶກສາແມ່ນມີການຂະຫຍາຍຕົວຢ່ຳງສະໜ່ຳສະເໜີ, ສ່ວນຊັ້ນມັດທະຍົມສຶກສາ ແມ່ນມີການ ຂະຫຍາຍຕົວທຳງດ້ານປະລິມານແຮງສົມຄວນ. ຈາກການນຳໃຊ້ຫລັກສູດໃໝ່, ປຶ້ມແບບຮຽນໃໝ່ ແລະ ວິທີສິດສອນແບບໃໝ່ໄດ້ເຮັດໃຫ້ຄຸນນະພາບຂອງການສອນ-ການຮຽນ ມີທ່ຳກ້ຳວດີຂຶ້ນ. ຄຽງຄູ່ກັນນັ້ນກໍໄດ້ມີການປະຕິຮູບຫລັກສູດສ້ຳງຄູ ແລະ ອຳຊີວະສຶກສາໄປພ້ອມ, ທັ້ງໝົດນີ້ແມ່ນມີຈຸດປະສົງ ຢຳຍົກຄຸນ ນະພາບຂອງການສຶກສາໃຫ້ສູງຂຶ້ນເປັນລະບົບຕໍ່ເນື່ອງກັນໄປ. ການລຶບລ້ຳງຄວາມບໍ່ຮູ້ໜັງສືກໍໄດ້ມີການປັບປຸງຮູບແບບ ແລະ ວິທີການໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງຜູ້ຮຽນໄດ້ດີກວ່ຳເກົ່ຳໂດຍໃຫ້ການຮຽນລຶບລ້ຳງຄວາມບໍ່ຮູ້ໜັງສືມີການຕິດພັນກັບການອົບຮົມວິຊຳຊີບ ແລະ ຍົກຄຸນນະພາບຊີວິດ ຂອງປະຊຳຊົນໄປພ້ອມ. ການກໍ່ສ້ຳງກຳມະກອນ, ນາຍຊ່ຳງ ແລະ ວິສຳວະກອນກໍໄດ້ນຳໃຊ້ທ່ຳແຮງ ແລະ ຄວາມອຳດສາມາດຂອງພາກສ່ວນລັດ ແລະ ພາກສ່ວນເອກະຊົນແນໃສ່ປະຕິບັດນະໂຍບາຍການກໍ່ສ້ຳງແມ່ນເພື່ອຮັບໃຊ້ໃຫ້ທຸກພາກສ່ວນຕາມຄວາມຕ້ອງການຂອງຕະຫລາດແຮງງານ. ໃນຊ່ວງດຽວກັນນີ້ ບັນດາຄູ ແລະ ຜູ້ບໍລິຫານການສຶກສາໃນທຸກລະດັບແມ່ນໄດ້ຮັບການຝຶກອົບຮົມດ້ານເຕັກນິກການສອນ ແລະ ການຄຸ້ມຄອງເປັນສ່ວນຫລາຍ. ການຕອບສະໜອງປຶ້ມແບບຮຽນໃນສາຍສ້ຳມັນສຶກສາແມ່ນມີຮັບໃຊ້ຢ່ຳງທົ່ວເຖິງ, ການປຸກສ້ຳງສ້ອມແປງອາຄານໂຮງຮຽນແມ່ນມີຈຳນວນນັບມື້ເພີ່ມຂຶ້ນ ແລະ ມີອາຄານໂຮງຮຽນ ໄດ້ມຳດຕະຖານກໍມີຈຳນວນເພີ່ມຂຶ້ນ, ການຕອບສະໜອງອຸປະກອນຮັບໃຊ້ການສອນ-ການຮຽນ ແລະ ການສະໜອງທຶນໃຫ້ແກ່ຂະແໜງການສຶກສາກໍມີທ່ຳເພີ່ມຂຶ້ນ.

ເພື່ອຈັດຕັ້ງປະຕິບັດແຜນຍຸດທະສຳດການສຶກສາແຫ່ງຊຳດແຕ່ 2001 ຮອດ 2020 ແລະ ຜັນຂະຫຍ້ຳຍແຜນຍຸດທະສຳດພັດທະນາເສດຖະກິດ ແລະ ສ້ຳງຄົມແຫ່ງ ສ.ປ.ປ.ລາວຮອດປີ 2020 ໃຫ້ມີຜົນສຳເລັດເປັນແຕ່ລະໄລຍະ, ກະຊວງສຶກສາທິການໄດ້ກຳນົດແຜນພັດທະນາການສຶກສາໃນຊ່ວງ 5 ປີ ແຕ່ 2001-2005 ດັ່ງມີເນື້ອໃນ ລຸ່ມນີ້.

2.2- ສະພາວະຄວາມເປັນຈິງ ໃນປະຈຸບັນ ແລະ ທ່ຳອ່ຽງ ໃນສະເພາະໜ້ຳ

ຈາກທ່າອ່ຽງດ້ານຕັ້ງໜ້າຂອງໂລກ ແລະ ພາກພື້ນທີ່ກ່າວມາແມ່ນຈະເປັນຜົນດີໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມຂອງບັນດາປະເທດທີ່ກຳລັງພັດທະນາ, ແຕ່ຕົກມາຊ່ວງທ້າຍຂອງຊຸມປີ 90 ໄດ້ມີສະພາບການຫຍໍ້ທໍ້ທາງດ້ານເສດຖະກິດ-ການເງິນເກີດຂຶ້ນແບບແຜ່ລາມກວ້າງຂວາງ.. ປັດຈຸບັນນີ້ຫຼາຍປະເທດໃນຂົງເຂດອາຊີໄດ້ຮັບຜົນກະທົບຢ່າງໜັກໜ່ວງພາໃຫ້ການຂະຫຍາຍຕົວທາງເສດຖະກິດຂອງແຕ່ລະປະເທດຢູ່ໃນຈັງຫວະຊ້າລົງໂດຍບໍ່ທັນຮູ້ກຳນົດເວລາທີ່ຈະມີການຟື້ນຕົວຄືນໄດ້. ຈາກສະພາບການດັ່ງກ່າວ ນັ້ນແມ່ນເປັນສິ່ງທ້າທາຍອັນໃຫຍ່ຫຼວງຕໍ່ກັບບັນດາ ປະເທດທີ່ກຳລັງພັດທະນາໃນການກຳນົດແຜນຍຸດທະສາດເພື່ອການພັດທະນາເສດຖະກິດ-ສັງຄົມຂອງແຕ່ປະເທດ ໃຫ້ບັນລຸໄດ້ຕາມຈຸດໝາຍ ແລະ ລະດັບຄາດໝາຍທີ່ວາງໄວ້ໃນແຕ່ລະໄລຍະ.

2.2.1- *ທ່າອ່ຽງໃນສະເພາະໜ້າຂອງສາກົນ*

ສະຕະວັດທີ XXI ແມ່ນຊ່ວງໄລຍະທີ່ມວນມະນຸດຈະກ້າວຈາກສັງຄົມອຸດສາຫະກຳໄປສູ່ສັງຄົມ "ຂໍ້ມູນຂ່າວສານ" ຊຶ່ງຈະເປັນສັງຄົມທີ່ມີການນຳໃຊ້ວິທະຍາສາດເຕັກໂນໂລຊີລະດັບສູງເຂົ້າໃນການຜະລິດເຊັ່ນ: -ເຕັກໂນໂລຊີຂ່າວສານ, -ຊີວະພາບ, -ພະລັງງານໃໝ່, -ການຜະລິດວັດສະດຸປ່ຽນແທນຊະນິດໃໝ່ ແລະ ອື່ນໆ, ຈະເຮັດໃຫ້ໂລກນີ້ໄຮ້ພົມແດນເຮັດໃຫ້ການພົວພັນສື່ສານລະຫວ່າງຄົນ, ຄອບຄົວ ແລະ ການຈັດຕັ້ງຕ່າງໆມີຄວາມສະດວກຂຶ້ນຫຼາຍເທົ່າ. ການພັດທະນາທາງວິທະຍາສາດ ແລະ ເຕັກໂນໂລຊີໃນໄລຍະໃໝ່ນີ້ແມ່ນມີການຂະຫຍາຍຕົວລັກສະນະກະໂດດຂັ້ນຊຶ່ງໄດ້ເຮັດໃຫ້ພື້ນຖານຊີວິດການເປັນຢູ່ຂອງສັງຄົມມະນຸດທາງດ້ານການເມືອງ, ເສດຖະກິດ ແລະ ວັດທະນະທຳກໍໄດ້ຫັນໄປສູ່ລັກສະນະສາກົນຫຼາຍຂຶ້ນສິ່ງດັ່ງກ່າວຕັ້ງເປັນບັນຫາຕໍ່ການສ້າງຊັບພະຍາກອນມະນຸດຂອງແຕ່ລະປະເທດໃນໂລກຊຶ່ງພົວພັນເຖິງ ລະບົບການສຶກສາ, ການສ້າງຄູ, ວິທີການສິດສອນ ແລະ ຮ່ຳຮຽນເພື່ອສ້າງຄົນໃຫ້ສາມາດດຳລົງຊີວິດໃນສັງຄົມຂອງປະເທດ ແລະ ຂອງໂລກໄດ້ເປັນຢ່າງດີ. ຈາກທ່າອ່ຽງຂອງການຂະຫຍາຍຕົວທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີໃນປະຈຸບັນ, ບັນດາປະເທດທີ່ພັດທະນາແລ້ວລ້ວນແຕ່ມີຄວາມຕ້ອງການປ່ຽນແປງໃໝ່ໂຄງປະກອບເສດຖະກິດພາຍໃນຂອງປະເທດຕົນ, ຈຶ່ງສົ່ງທຶນໄປລົງທຶນ ແລະ ສົ່ງເຕັກໂນໂລຊີອອກໄປຍັງປະເທດທີ່ກຳລັງພັດທະນາຍ້ອນແນວນີ້ການຮັບເອົາທຶນ ແລະ ເຕັກໂນໂລຊີໃໝ່ ຈຶ່ງມີຄວາມສະດວກຫຼາຍຂຶ້ນ. ຂັ້ນຕອນຂອງການພັດທະນາແມ່ນຈະໄດ້ມີການສ້າງເປັນຈຸດສຸມເພື່ອສ້າງພື້ນຖານດ້ານເສດຖະກິດ-ສັງຄົມ ແລະ ວັດທະ ນະທຳໃຫ້ມີການພົວພັນກົມກຽວກັນລະຫວ່າງການພັດທະນາເຕັກໂນໂລຊີກັບປັດໄຈຕ່າງໆຂອງສັງຄົມມີການຮັບຮູ້ເຂົ້າໃຈຢ່າງກວ້າງຂວາງ ແລະ ເລິກເຊິ່ງ. ເພື່ອຍາກບັນລຸໄດ້ຕາມເປົ້າໝາຍທີ່ກ່າວມານັ້ນ, ຂະແໜງການຜະລິດ, ການບໍລິການ ແລະ ການຄຸ້ມຄອງແມ່ນຈະໄດ້ຫັນໄປສູ່ການນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານຢ່າງເປັນລະບົບ. ຜົນສະທ້ອນຈາກການພັດທະນາທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີໄດ້ກາຍເປັນທ່າແຮງຊຸກດັນໃຫ້ທົ່ວ

ໂລກໄດ້ມີການຫັນປ່ຽນລວມຕົວກັນ ເປັນກຸ່ມ ແລະ ຂົງເຂດທີ່ໄດ້ເຮັດໃຫ້ເສດຖະກິດມີການຂະຫຍາຍຕົວຢ່າງວ່ອງໄວເຊັ່ນ: -ກຸ່ມ 8 ປະເທດທີ່ມີອຸດສາຫະກຳຂະຫຍາຍຕົວ, -ກຸ່ມຕະຫຼາດຮ່ວມເອີຣົບ ແລະ ກຸ່ມອາຊຽນດັ່ງນີ້ເປັນຕົ້ນ.

2.2.2- <u>ທ່າອ່ຽງໃນສະເພາະໜ້າຂອງຂົງເຂດ</u>

ໃນປັດຈຸບັນບັນດາປະເທດໃນອາຊີ-ປາຊີຟິກແມ່ນກຳລັງເດີນຕາມເສັ້ນທາງການຂະຫຍາຍ ຕົວຢ່າງໜັກແໜ້ນໃນການກ້າວເຂົ້າສູ່ໂລກາພິວັດຂອງສະຕະວັດທີ 21, ຍ້ອນເສດຖະກິດຕະຫຼາດກຳລັງມີການຂະຫຍາຍຕົວສູງ, ການຫັນເປັນອຸດສາຫະກຳມີທ່າກ້າວໄວ ແລະ ອັດຕາສ່ວນການລົງທຶນມີທ່າກ້າວເພີ່ມຂຶ້ນຊຶ່ງເປັນເຫງົ້າພະລັງ ແລະ ທ່າແຮງອັນດີໃຫ້ແກ່ການພັດທະນາປະເທດໃນພາກພື້ນນີ້. ແຕ່ບັນຫາຈະຕາມມາແມ່ນປະຊາກອນຂອງພາກພື້ນນີ້ຈະເພີ່ມຂຶ້ນຫຼາຍ, ຄາດຄະເນໄວ້ໃນປີ 2020 ຈະມີປະຊາກອນເຖິງ 4.5 ຕື້ຄົນ (ເພີ່ມຂຶ້ນປະມານ 46 ລ້ານຄົນຕໍ່ປີ) ຊຶ່ງຈະສ້າງບັນຫາອັນໜັກໜ່ວງໃຫ້ແກ່ການຊອກວຽກເຮັດງານທຳ. ບັນດາປະເທດໃນກຸ່ມອາຊຽນໄດ້ຫຼີງເຫັນອະນາຄົດຂອງພາກພື້ນນີ້ໃນການຫັນເປັນກຸ່ມເສດຖະກິດ ແລະ ຕະຫຼາດແຫ່ງໃໝ່ໃນອາຊີອາຄະເນຈຶ່ງໃຫ້ຄວາມສຳຄັນເປັນພິເສດດ້ວຍການສະໜັບສະໜູນ ແລະ ຊ່ວຍເຫຼືອດ້ານການພັດທະນາໂຄງລ່າງເປັນຕົ້ນ: -ໂຄງການພັດທະນາເສັ້ນທາງຄົມມະນາຄົມ; -ໂຄງການພັດທະນາພະລັງງານ ແລະ ປົກປັກຮັກສາສະພາບແວດລ້ອມ; -ໂຄງການພັດທະນາຊັບພະຍາກອນມະນຸດ ແລະ -ໂຄງການພັດທະນາສິ່ງເສີມດ້ານການຄ້າ, ການລົງທຶນ ແລະ ການທ່ອງທ່ຽວ. ຕີລາຄາລວມແລ້ວໃນສະຕະວັດທີ 21 ທ່າອ່ຽງລວມຂອງໂລກ ແລະ ພາກພື້ນຈະສ້າງການລະໂອກາດ ແລະ ສິ່ງທ້າທາຍຕໍ່ກັບບັນດາປະເທດທີ່ກຳລັງພັດທະນາ ແລະ ດ້ອຍພັດທະນາເພື່ອຈະຍາດແຍ່ງຜົນປະໂຫຍດໃນການເລັ່ງລັດພັດທະນາປະເທດຕົນໃຫ້ຈະເລີນທຽມທັນປະເທດອື່ນ.

ທ່າອ່ຽງທາງດ້ານເສດຖະກິດຂອງໂລກ ແລະ ພາກພື້ນໄດ້ເປັນແຮງຊຸກດັນໃຫ້ມີການຍົກສະສະມັດຖະພາບຂອງການພັດທະນາຊັບພະຍາກອນມະນຸດໂດຍສະເພາະແມ່ນການບໍລິການດ້ານການສຶກສາ ແລະ ສາທາລະນະສຸກແນໃສ່ຍົກລະດັບກຳລັງແຮງງານໃຫ້ມີຄວາມສາມາດສອດຄ່ອງຕາມຄວາມຕ້ອງການຂອງຍຸກສະໄໝ. ໃນຍຸກສະໄໝໂລກາພິວັດມີສັນຕິພາບ, ມີການຮ່ວມມື ແລະ ມີການແຂ່ງຂັນກັນພັດທະນາດ້ວຍການນຳໃຊ້ເຕັກໂນໂລຊີດ້ານຂໍ້ມູນຂ່າວສານຈະສ້າງເງື່ອນໄຂ ແລະ ຂໍ້ສະດວກຕ່າງໆໃນການພົວພັນຊຶ່ງກັນ ແລະ ກັນ ເພື່ອຮັບໃຊ້ການພັດທະນາປະເທດຊາດບົນພື້ນຖານຕ່າງຝ່າຍຕ່າງມີຜົນປະໂຫຍດ. ຈາກເງື່ອນໄຂດ້ານເຕັກນິກວິທະຍາສາດເຕັກໂນໂລຊີມີຄວາມກ້າວໜ້າທັນສະໄໝຂອງບັນດາປະເທດທີ່ອຸດສາຫະກຳຂະຫຍາຍຕົວບວກກັບ ປະເທດມີລະບອບການເມືອງໝັ້ນຄົງ ແລະ ມີແຫຼ່ງຊັບພະຍາກອນທຳມະຊາດຢ່າງພໍພຽງທີ່ເປັນຂໍ້ສະດວກໃຫ້ແກ່ການພັດທະນາປະເທດກ້າວຂຶ້ນໃນອະນາຄົດ. ການພັດທະນາຊັບພະຍາກອນມະນຸດໃນສະ

ເພາະໜ້າຕ້ອງໄດ້ເອົາໃຈໃສ່ແກ້ໄຂຂໍ້ຈຳກັດທີ່ເປັນຢູ່ໃນປະຈຸບັນຄືກຳລັງແຮງງານຍັງຂາດເຂີນທັງ ທາງດ້ານປະລິມານກໍຄືຄຸນະພາບ. ໄປຄຽງຄູ່ກັນນັ້ນການພັດທະນາການສຶກສາແມ່ນຈະໄດ້ເອົາໃຈ ໃສ່ການຍົກຄຸນະພາບການສອນ-ການຮຽນ ແລະ ການຍົກປະສິດທິພາບດ້ານການບໍລິຫານ-ຄຸ້ມ ຄອງໃຫ້ສູງຂຶ້ນໃຫ້ຕອບສະໜອງເງື່ອນໄຂໃນການນຳໃຊ້ ແລະ ຂະຫຍາຍວິທະຍາສາດເຕັກນິກ-ເຕັກໂນໂລຊີຂອງຍຸກສະໄໝຮັບໃຊ້ໃຫ້ແກ່ການຜະລິດເປັນອຸດສາຫະກຳ ຕາມກົນໄກເສດຖະກິດ ຕະຫຼາດ.

2.3- ທິດທາງລວມ

ແຜນການພັດທະນາການສຶກສາໃນຊ່ວງ 5 ປີຕໍ່ໜ້າແມ່ນການສືບຕໍ່ປະຕິບັດຕາມມະຕິກອງ ປະຊຸມໃຫຍ່ຄັ້ງທີ VI ຂອງພັກ ແລະ ມະຕິຕ່າງໆກ່ຽວກັບການພັດທະນາຊັບພະຍາກອນມະນຸດຕາມ ທິດທາງລວມດັ່ງລຸ່ມນີ້:

1. ປະຕິບັດການສຶກສາແບບບັງຄັບສຳລັບເຍົາວະຊົນຊາວໜຸ່ມໂດຍມີການນຳໃຊ້ງົບປະມານຂອງ ລັດເປັນຕົ້ນຕໍ,
2. ດຳເນີນການລົບລ້າງຄວາມບໍ່ຮູ້ໜັງສືໃຫ້ແກ່ປະຊາຊົນໃນກຸ່ມເປົ້າໝາຍທີ່ຍັງກ້ຳກຶ່ງໜັງສື, ບຳລຸງ ຍົກກະດັບການສຶກສາຊັ້ນປະຖົມ, ມັດທະຍົມໃຫ້ແກ່ປະຊາຊົນ ແລະ ພະນັກງານໃຫ້ໄດ້ ທັງປະລິມານ ແລະ ຄຸນນະພາບ,
3. ສົ່ງເສີມການສຶກສາພາກເອກະຊົນໃຫ້ມີການຂະຫຍາຍຕົວນັບທັງສາຍສາມັນສຶກສາ ແລະ ອາຊີວະສຶກສາ ແລະ ຊຸກຍູ້ໃຫ້ພາກສ່ວນເສດຖະກິດຕ່າງໆປະກອບສ່ວນເຂົ້າໃນການພັດທະນາການ ສຶກສາໃຫ້ຫລາຍຂຶ້ນ,
4. ສັບຊ້ອນຕາໜ່າງໂຮງຮຽນມັດທະຍົມສຶກສາ ແລະ ໂຮງຮຽນອາຊີວະສຶກສາຊັ້ນຕ່າງໆໃຫ້ສອດ ຄ່ອງກັບຄວາມສາມາດຕົວຈິງຂອງປະເທດ ແລະ ມີການສອບເສັງໃນທຸກຂັ້ນຮຽນ,
5. ເອົາໃຈໃສ່ສົ່ງເສີມການສຶກສາສຳລັບເພດຍິງ ແລະ ຜູ້ດ້ອຍໂອກາດ,
6. ການສ້າງພະນັກງານແມ່ນສ້າງໃຫ້ທຸກພາກສ່ວນເສດຖະກິດ-ສັງຄົມ ບໍ່ແມ່ນສ້າງເພື່ອສັງກັດກົ ຈົກລົດເທົ່ານັ້ນ,
7. ການພັດທະນາການສຶກສາໃນສະເພາະໜ້າ ແລະ ຍາວນານແມ່ນແໃສ່ຍົກຄຸນນະພາບຂອງ ການສຶກສາແຫ່ງຊາດໃຫ້ສູງຂຶ້ນໃຫ້ທຽບເທົ່າກັບມາດຕະຖານສາກົນເທື່ອລະກ້າວ,
8. ປັບປຸງ ແລະ ຂະຫຍາຍຕາໜ່າງໂຮງຮຽນປະຖົມໃຫ້ໄປເຖິງເຂດພູດອຍຫ່າງໄກ-ສອກຫລີກ, ສ້າງ ແລະ ປັບປຸງໂຮງຮຽນກິນນອນຊົນເຜົ່າຢູ່ບາງແຂວງເພື່ອສ້າງເງື່ອນໄຂໃຫ້ລູກຫລານຂອງ ບັນດາເຜົ່າໄດ້ເຂົ້າໂຮງຮຽນ,

9. ເພີ່ມທະວີການຄຸ້ມຄອງ ແລະ ກວດກາຕາມສາຍຂະແໜງການໃຫ້ມີປະສິດທິພາບ ແລະ ປະຕິບັດນະໂຍບາຍຕໍ່ຄູຢ່າງເໝາະສົມ,
10. ບູລະນະການສຶກສາສົ່ງໃຫ້ແທດເໝາະກັບເງື່ອນໄຂໃໝ່.

2.4- ຈຸດໝາຍລວມ

ສ້າງຄົນລາວໃຫ້ມີໂລກະທັດວິທະຍາສາດ, ມີຈິດໃຈຮັກຊາດ, ມີນ້ຳໃຈສາມັກຄີກັບຊົນເຜົ່າອື່ນໆ ພາຍໃນຊາດ ແລະ ສາມັກຄີກັບປະຊາຊົນບັນດາປະເທດເພື່ອນມິດໃນໂລກ; ຮູ້ສິດຜິນປະໂຫຍດ ແລະ ພັນທະຂອງພົນລະເມືອງ, ຮູ້ຮັກສາ ແລະ ເສີມຂະຫຍາຍມູນເຊື້ອວັດທະນະທຳອັນດີງາມຂອງຊາດ; ມີສະ ຕິເພິ່ງຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ຮູ້ປະຫງັດມັດທະຍັດ ແລະ ຮູ້ສົມທົບລະຫວ່າງຜິນ ປະໂຫຍດສ່ວນຕົວກັບຜິນປະໂຫຍດສ່ວນລວມ; ກຳແໜ້ນຄວາມ ຮູ້ສາມັນ ແລະ ຄວາມຮູ້ທາງດ້ານວິທະຍາສາດວິຊາສະເພາະເຕັກນິກເປັນຢ່າງດີ; ມີລະບຽບວິໄນ, ມີຄວາມຮັບຜິດຊອບຕໍ່ໜ້າທີ່ການງານ, ມີສຸຂະພາບແຂງແຮງ, ມີຫົວຄິດປະດິດສ້າງ, ມີຄວາມສີວິໄລທາງດ້ານຈິດໃຈກຽມພ້ອມປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດ.

2.5- ລະດັບຄາດໝາຍລວມ

1. ຂະຫຍາຍອັ້ນຸບານສຶກສາໃຫ້ສາມາດຮັບເດັກໃນເກນອາຍຸເຂົ້າຮຽນໃຫ້ໄດ້ເພີ່ມຂຶ້ນຢ່າງຕ່ຳ (5%) ຕໍ່ປີ,
2. ປັບປຸງ ແລະ ຂະຫຍາຍປະຖົມສຶກສາໃຫ້ອັດຕາເຂົ້າຮຽນສຸດທິເພີ່ມຂຶ້ນເປັນປົກກະຕິຈາກ 79% ໃນປີ 2000-01 ໃຫ້ໄດ້ 86% ໃນປີຮຽນ 2004-05, ສ້າງເງື່ອນໄຂເພື່ອເຮັດໃຫ້ອັດຕາຄ້າງຫ້ອງ ແລະ ອັດຕາປະລະການຮຽນຫລຸດລົງຕາມລຳດັບໃຫ້ໄດ້ຢ່າງຕ່ຳ 2% ຕໍ່ປີ ແລະ 3% ຕໍ່ປີ ,
3. ລົບລ້າງຄວາມບໍ່ຮູ້ໜັງສືໃຫ້ປະຊາຊົນໃນກຸ່ມເປົ້າໝາຍທີ່ມີອາຍຸ (15-40)ປີ ໃຫ້ໄດ້ 85% ແລະ ຜູ້ທີ່ມີອາຍຸ 15 ປີຂຶ້ນໄປໃຫ້ໄດ້ 80% ພ້ອມກັນນັ້ນກໍສ້າງເງື່ອນໄຂໃຫ້ກຸ່ມດັ່ງກ່າວນີ້ໄດ້ ສືບຕໍ່ຮຽນຊັ້ນປະຖົມໃຫ້ໄດ້ຢ່າງຕ່ຳ 30% ຂອງຜູ້ທີ່ລົບລ້າງແລ້ວ,
4. ຂະຫຍາຍມັດທະຍົມສຶກສາຢ່າງມີແຜນການ ແລະ ເພີ່ມອັດຕາເຂົ້າຮຽນລວມຂອງຊັ້ນມັດທະຍົມຕອນຕົ້ນຈາກ 46% ແລະ ຕອນປາຍຈາກ 23% ໃນປີຮຽນ 2000-01 ໃຫ້ໄດ້ 52% ແລະ 24% ຕາມລຳດັບໃນປີຮຽນ 2004-05,
5. ພັດທະນາຫົລັກສູດ ແລະ ປະກອບອຸປະກອນຮັບໃຊ້ການສອນ-ການຮຽນເພື່ອຍົກຄຸນນະພາບຂອງທຸກຊັ້ນຮຽນໃຫ້ທຽບມໍ່ກັບມາດຕະຖານສາກົນເພື່ອລະກ້າວ ພ້ອມທັງເລີ່ມແບ່ງສາຍວິຊາຮຽນໃນຊັ້ນມັດທະຍົມຕອນປາຍ,

6. ປັບປຸງການສອນ-ການຮຽນວິທະຍາສາດ ແລະ ພາສາຕ່າງປະເທດຂອງຊັ້ນມັດທະຍົມສຶກສາ ໃຫ້ມີຫ້ອງທົດລອງ ແລະ ປະກອບອຸປະກອນຮັບໃຊ້ຄົບຊຸດຢ່າງຫນ້ອຍ 2 ແຫ່ງຕໍ່ແຂວງ,
7. ເອົາໃຈໃສ່ການສອນ-ການຮຽນພະລະສຶກສາ ແລະ ສິນລະປະສຶກສາໃຫ້ມີພາກປະຕິບັດຕົວຈິງ ແລະ ສົ່ງເສີມນັກຮຽນ-ນັກສຶກສາຜູ້ຮຽນເກັ່ງ ແລະ ມີ ພອນສະຫວັນ,
8. ບຳລຸງຍົກລະດັບຄູປະຖົມຕາມຫລັກສູດໃຫມ່ໃຫ້ໄດ້ຢ່າງຫນ້ອຍ 50% ຂອງຈຳນວນຄູສອນທີ່ບໍ່ ໄດ້ຜ່ານໂຮງຮຽນສ້າງຄູທັງຫມົດ,
9. ສືບຕໍ່ເພີ່ມອັດຕາສ່ວນນັກຮຽນຕໍ່ຄູສຳລັບຊັ້ນປະຖົມຈາກ 30:1 ໃນປີຮຽນ 2000-01 ໃຫ້ໄດ້ 33:1 ໃນປີຮຽນ 2004-05 ແລະ ສຳລັບຊັ້ນມັດທະຍົມຈາກ 20:1 ໃຫ້ໄດ້ 25:1 ໃນປີ ຮຽນ ດຽວກັນ,
10. ສືບຕໍ່ພັດທະຫລັກສູດສ້າງຄູປະຖົມລະບົບ (8+3), (11+1) ແລະ ສ້າງຄູມັດທະຍົມລະບົບ (11+3) ໃຫ້ເຫມາະສົມກວ່າເກົ່າ,
11. ປັບປຸງພື້ນຖານວັດຖຸຂອງໂຮງຮຽນສ້າງຄູ ແລະ ວິທະຍາໄລຄູແຕ່ລະແຫ່ງເປັນຕົ້ນ: ຫ້ອງທົດ ລອງ, ຫ້ອງສະມຸດ, ຫ້ອງຮຽນພາສາ ແລະ ຫ້ອງຮຽນຄອມພິວເຕີ,
12. ປັບປຸງສູນພັດທະນາຄູທີ່ມີຢູ່ໃນປັດຈຸບັນໃຫ້ເປັນສູນກາງພັດທະນາຫລັກສູດ ແລະ ເອກະສານ ຮັບໃຊ້ໃຫ້ແກ່ການກໍ່ສ້າງ ແລະ ບຳລຸງຄູແຕ່ລະປະເພດ,
13. ສຶກສາວິໄຈຄວາມຕ້ອງການຄູສອນແຕ່ລະຊັ້ນຮຽນຂອງສາຍສາມັນ ແລະ ສາຍສ້າງຄູພ້ອມທັງ ກຳນົດອັດຕາສ່ວນຈຳນວນນັກຮຽນຕໍ່ຄູໃນໂຮງຮຽນສ້າງຄູ ແລະ ວິທະຍາໄລຄູ,
14. ສືບຕໍ່ປັບປຸງ ແລະ ຂະຫຍາຍວຽກງານອາຊີວະສຶກສາ ແລະ ການອົບຮົມວິຊາຊີບເຕັກນິກໃຫ້ມີ ການເພີ່ມຂຶ້ນ, ໂດຍຈະມີການປັບປຸງໂຮງຮຽນເຕັກນິກ 3 ແຫ່ງ (ຫຼ.ບ, ສຂ, ວຈ) ໃຫ້ໄດ້ມາດ ຖານ ແລະ ສ້າງຕັ້ງຂຶ້ນໃຫມ່ຢູ່ 2 ແຫ່ງ (ຄມ, ຈປ); ສ້າງຕັ້ງໂຮງຮຽນວິຊາຊີບຂຶ້ນໃຫມ່ 2 ແຫ່ງ (ອຊ, ຊຂ) ແລະ ສ້າງສູນບຳລຸງວິຊາຊີບຂັ້ນພື້ນຖານຂຶ້ນ 4 ແຫ່ງ (ນຫ, ຊຍ, ບຊ, ສອ) ພ້ອມທັງ ປັບປຸງສູນຊຸມຊົນທີ່ມີຢູ່ແລ້ວໃຫ້ສາມາດເຄື່ອນໄຫວເປັນປົກກະຕິເພື່ອຕອບສະຫນອງໄດ້ຕາມ ຄວາມຕ້ອງການຂອງການພັດທະນາເສດຖະກິດ,
15. ສົ່ງເສີມການສຶກສາວິຊາຊີບ ແລະ ເຕັກນິກຂອງພາກເອກະຊົນໃຫ້ມີການຂະຫຍາຍຕົວໃຫ້ສາ ມາດຮັບເອົານັກຮຽນໄດ້ຢ່າງຕ່ຳ 10% ຂອງນັກຮຽນທັງຫມົດໃນສາຍນີ້,
16. ສືບຕໍ່ປັບປຸງ ແລະ ຂະຫຍາຍການສຶກສາຊັ້ນສູງ ແລະ ມະຫາວິທະຍາໄລໃຫ້ສາມາດຮັບນັກສຶກ ສາເພີ່ມຂຶ້ນຈາກ 320 ຄົນຕໍ່ປະຊາກອນ 100,000 ຄົນ ໃນປີຮຽນ 1999-2000 ເປັນ 410 ຄົນ ໃນປີຮຽນ 2004-05 ແລະ ສ້າງຕັ້ງວິທະຍາເຂດຂຶ້ນໃຫ້ໄດ້ 1 ແຫ່ງ,
17. ກໍ່ສ້າງກຳລັງແຮງງານລະດັບຊັ້ນຕົ້ນ, ຊັ້ນກາງ, ຊັ້ນສູງ ແລະ ມະຫາວິທະຍາໄລໃຫ້ສອດຄ່ອງ ກັບໂຄງປະກອບເສດຖະກິດ,

18. ສືບຕໍ່ພັດທະນາການຄຸ້ມຄອງຂ່າວສານ, ການຄຸ້ມຄອງບຸກຄະລາກອນ, ການວາງແຜນ, ການສ້າງແຜນງົບປະມານ ແລະ ການບັນຊີໃຫ້ເປັນລະບົບແຕ່ສູນກາງລົງເຖິງທ້ອງຖິ່ນຮາກຖານ (ແຂວງ, ເມືອງ, ໂຮງຮຽນ),
19. ສືບຕໍ່ປັບປຸງ ແລະ ຂະຫຍາຍການພົວພັນຮ່ວມມືກັບບັນດາປະເທດສະມາຊິກອາຊຽນ, ປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນຕ່າງໆໃຫ້ໄດ້ຢ່າງເລິກເຊິ່ງ ແລະ ກວ້າງຂວາງ,
20. ສືບຕໍ່ເອົາໃຈໃສ່ການລົງທຶນຂອງລັດເຂົ້າໃນແຜນພັດທະນາການສຶກສາໃຫ້ເພີ່ມຂຶ້ນເປັນປົກກະຕິ, ເພີ່ມສ່ວນແບ່ງການລົງທຶນຂອງລັດໃຫ້ແກ່ຂະແໜງສຶກສາຈາກ 12% ໃນປີ 2000-01 ໃຫ້ໄດ້ 14% ໃນປີ 2004-05.

24/VII
ຫ້າມຈຳໜ່າຍ

ตาตะลาง 1.3: ສ້າງລວມງົບປະມານຂອງຂະແໜງສຶກສາແຕ່ 1995-96 ຫາ 1999-00

(ຫົວໜ່ວຍ: x ຕື້ກີບ)

	ສົກປີງົບປະມານ				
	1995/96	1996/97	1997/98	1998/99	1999/00
ງົບປະມານຂະແໜງສຶກສາ	46.5	64.3	72.1	101.6	198.4
- ຮ່ວງບໍລິຫານ	27.7	35.5	40.2	53.8	103.7
- ຮ່ວງລົງທຶນ	18.8	28.8	31.9	47.8	94.7
+ ພາຍໃນ	4.8	6.4	6.7	13.3	24.1
+ ຕ່າງປະເທດ	14.0	22.4	25.3	34.5	70.6
ການໃຊ້ຈ່າຍພາຍໃນ (ບໍລິຫານ + ລົງທຶນພາຍໃນ)	32.5	41.9	47.0	67.1	127.8
	ຄິດໄລ່ (ຕື້ກີບ)ໃນປີ 95=100				
ງົບປະມານຂະແໜງສຶກສາ	43.7	57.2	49.7	55.9	79.4
- ຮ່ວງບໍລິຫານ	26.0	31.6	27.7	29.6	41.5
- ຮ່ວງລົງທຶນ .	17.7	25.6	22.0	26.3	37.9
+ ພາຍໃນ	4.5	5.7	4.7	7.3	9.6
+ ຕ່າງປະເທດ	13.2	19.9	17.3	19.0	28.2
ການໃຊ້ຈ່າຍພາຍໃນ (ບໍລິຫານ + ລົງທຶນພາຍໃນ)	30.6	37.3	32.4	36.9	51.1
	ການແບ່ງຮ່ວງຕ່າງໆ				
ງົບປະມານຂະແໜງສຶກສາ	100.0	100.0	100.0	100.0	100.0
- ຮ່ວງບໍລິຫານ	59.6	55.2	55.8	53.0	52.3
- ຮ່ວງລົງທຶນ	40.4	44.8	44.2	47.0	47.7
+ ພາຍໃນ	10.4	10.0	9.2	11.3	12.1
+ ຕ່າງປະເທດ	30.0	34.8	35.0	34.7	35.6
ການໃຊ້ຈ່າຍພາຍໃນ (ບໍລິຫານ + ລົງທຶນພາຍໃນ)	70.0	65.2	65.0	64.3	64.4
ງົບປະມານຂະແໜງສຶກສາ	%				
- ສົມທຽບກັບ GDP	2.8	3.1	1.9	1.1	1.4
- ສົມທຽບກັບງົບປະມານລວມຂອງລັດຖະບານການ	10.9	13.0	10.1	5.8	7.3
ການໃຊ້ຈ່າຍພາຍໃນສົມທຽບກັບ GDP	2.0	2.0	1.3	0.8	0.9
ງົບປະມານຂອງລັດຖະບານ	425.5	493.8	714.8	1,758.7	2,705.0
ຮ່ວງບໍລິຫານ	196.6	233.8	346.7	688.9	954.0
ຮ່ວງລົງທຶນ	228.9	260.0	368.1	1,069.8	1,820.0
	1996	1997	1998	1999	2000
GDP	1,654.5	2,086.0	3,730.3	8,839.0	13,780.0

ตาตะลาๆ 2.3: ສັງລວມຄວາມຕ້ອງການງົບປະມານຂອງຂະແໜງສຶກສາແຕ່ 2000-2005

(ຫົວໜ່ວຍ: x ຕື້ກີບ)

	ສົກປີງົບປະມານ				
	2000/01	2001/02	2002/03	2003/04	2004/05
ງົບປະມານຂະແໜງສຶກສາ	259.86	380.03	525.70	742.15	991.40
- ຮ່ວງບໍລິຫານ	117.67	149.03	254.70	422.05	622.80
- ຮ່ວງລົງທຶນ	142.19	231.00	271.00	320.10	368.60
+ ພາຍໃນ	35.59	46.00	54.00	64.02	73.72
+ ຕ່າງປະເທດ	106.60	185.00	217.00	256.08	294.88
ການໃຊ້ຈ່າຍພາຍໃນ (ບໍລິຫານ + ພາຍໃນ)	153.26	195.03	308.70	486.07	696.52
	ຄິດໄລ່ (ຕື້ກີບ)ໃນປີ 2000=100				
ງົບປະມານຂະແໜງສຶກສາ					
- ຮ່ວງບໍລິຫານ					
- ຮ່ວງລົງທຶນ					
+ ພາຍໃນ					
+ ຕ່າງປະເທດ					
ການໃຊ້ຈ່າຍພາຍໃນ (ບໍລິຫານ + ພາຍໃນ)					
	ການແບ່ງຮ່ວງຕ່າງໆ				
ງົບປະມານຂະແໜງສຶກສາ	100.0	100.0	100.0	100.0	100.0
- ຮ່ວງບໍລິຫານ	45.3	39.2	48.5	56.9	62.8
- ຮ່ວງລົງທຶນ	54.7	60.8	51.5	43.1	37.2
+ ພາຍໃນ	13.7	12.1	10.3	8.6	7.4
+ ຕ່າງປະເທດ	41.0	48.7	41.3	34.5	29.7
ການໃຊ້ຈ່າຍພາຍໃນ (ບໍລິຫານ + ພາຍໃນ)	59.0	51.3	58.7	65.5	70.3
ງົບປະມານຂະແໜງສຶກສາ	%				
- ສົມທຽບກັບ GDP	1.5	1.9	2.3	2.8	3.2
- ສົມທຽບກັບງົບປະມານລວມຂອງລັດຖະບານການ	7.4	9.0	10.7	12.3	14.0
ການໃຊ້ຈ່າຍພາຍໃນສົມທຽບກັບ GDP	0.9	1.0	1.3	1.8	2.3
ງົບປະມານຂອງລັດຖະບານ	3,531.35	4,213.60	4,922.60	6,014.30	7,081.40
ຮ່ວງບໍລິຫານ	1,526.09	1,713.60	2,122.60	2,714.30	3,281.40
ຮ່ວງລົງທຶນ	2,005.26	2,500.00	2,800.00	3,300.00	3,800.00
GDP	16,800.00	19,850.00	23,350.00	26,850.00	30,930.00

ແຜນງານ 1: ການຂະຫຍາຍໂອກາດການເຂົ້າຮຽນ

ນະໂຍບາຍ	ຍຸດທະສາດ	ກິດຈະກຳ activities	ຜົນໄດ້ຮັບ
1. ຂະຫຍາຍການເຂົ້າຮຽນສຳລັບທຸກຊັ້ນຮຽນ	1. ປັບປຸງແລະພັດທະນາການສຶກສາຂັ້ນພື້ນຖານ	1.1 .ສ້າງໂຮງຮຽນອະນຸບານຂອງລັດ ແລະຈັດຕັ້ງຫ້ອງຮຽນອະນຸບານ1 ຫ້ອງ ຕິດກັບໂຮງຮຽນປະຖົມຢ່າງມີການ ເລືອກເຟັ້ນ	1.1.1. ເດັກຈະຢູ່ໃນໂຮງຮຽນ, ລັດຖະບານຈະລົງທຶນເພີ່ມສຳລັບກໍ່ສ້າງໂຮງຮຽນອະນຸບານ
		1.2 .ສຸມການລົງທຶນ, ໂດຍສະເພາະໃສ່ການສຶກສາຂັ້ນພື້ນຖານ / ປะถม	1.2.1.ໃນຕົວເມືອງໃຫຍ່ ,ມີການຊຸກຍູ້ໂຮງຮຽນເອກະຊົນ,ການຂະຫຍາຍຫ້ອງຮຽນ ໄດ້ຕິດພັນກັບສະພາບເສດຖະກິດ
		1.3-.ກໍ່ສ້າງໂຮງຮຽນ ปะถม ?	1.3.1 .ຊ່ວຍໃຫ້ມີການປຸກສ້າງໂຮງຮຽນໃນເຂດທີ່ຫຍຸ້ງຍາກ; ມີໂຮງຮຽນຄົບຊັ້ນໃນເຂດຫ່າງໄກສອກຫຼີກ;ມີການສະໜອງ ອຸປະກອນຂອງລັດ ແລະ ແຮງງານຂອງຊຸມຊົນ; ມີການປະກອບສ່ວນ ຂອງຊຸມຊົນ ແລະຊັ້ນນຳການສຶກສາ.
		1.4 .ຈັດຕັ້ງການສອນຫ້ອງຄວບ Multigrade	1.4.1. ແກ້ໄຂໂຮງຮຽນຂະໜາດນ້ອຍໃນເຂດຫ່າງໄກໂດຍສະເພາະແມ່ນແກ້ໄຂຂອດການຂາດເຂີນຄູ ແລະຮັກສານັກຮຽນໃຫ້ຮຽນຈົບຊັ້ນປະຖົມ.
		1.5 .ຂະຫຍາຍກຸ່ມໂຮງຮຽນ Cluster schools	1.5.1. ຄຸນະພາບໄດ້ຮັບການປັບປຸງ ແລະຈຳນວນນັກຮຽນໃນກຸ່ມໂຮງຮຽນໄດ້ເພີ່ມຂຶ້ນ
		1.6 .ບຳລຸງຄູ ເພື່ອໃຫ້ຄູສາມາດສອນໄດ້ຫຼາຍໆວິຊາ	1.6.1 . ຄູມີຄວາມສາມາດດຳເນີນກິດຈະກຳທີ່ຫຼາກຫຼາຍເພື່ອດຶງດູດຄວາມສົນໃຈຂອງນັກຮຽນ
		1.7.ບຳລຸງ ຄູເພື່ອຊຸກຍູ້ໃຫ້ຄູໄດ້ຊ່ວຍເຫຼືອນັກຮຽນທີ່ມີຄວາມຕ້ອງການພິເສດ	1.7.1.ນັກຮຽນທີ່ມີຄວາມຕ້ອງການພິເສດໄດ້ຮຽນຕາມລະດັບຄວາມສາມາດຂອງເຂົາເຈົ້າ

2. ຫຼຸດຜ່ອນຄວາມແຕກໂຕນທາງດ້ານເຂດແຂວງ, ເພດ ແລະ ຊົນເຜົ່າ.	2.ສະໜອງຄູແລະພື້ນຖານວັດຖຸໃຫ້ແກ່ເຂດທີ່ດ້ອຍໂອກາດ	2.1.ສົ່ງສົມແລະຄັດເລືອກ ນັກຮຽນຊົນເຜົ່າມາຈາກເຂດທີ່ດ້ອຍໂອກາດແລະ	2.1.1ຈຳນວນນັກຮຽນ ແລະຄູຊົນເຜົ່າແລະຄູເພດຍິງໄດ້ເພີ່ມຂຶ້ນ
		2.2. ເອົາໃຈໃສ່ຕິດສຳລັບນັກຮຽນທີ່ມາຈາກເຂດດ້ອຍໂອກາດ	
3.ສົ່ງເສີມການຮູ້ໜັງສືແລະ ການບຳລຸງຍົກລະດັບການສຶກສາເພື່ອໃຫ້ມີຄຸນນະພາບຊີວິດທີ່ດີແລະຫຼຸດຜ່ອນຄວາມຍາກຈົນ	3.ເສີມກຳລັງແຮງແຜນການບຳລຸງເຂັ້ມຄູເຝິກ ການສຶກສານອກລະບົບ ໂຮງຮຽນ	3.1. ບຳລຸງຄູເຝິກ.	3.1.1 ອັດຕາການຮູ້ໜັງສື ໄດ້ເພີ່ມຂຶ້ນ ໂດຍຜ່ານວິທີການທີ່ເປັນລະບົບ
		3.2.ພັດທະນາສູນການສຶກສາຊຸມຊົນ	3.2.1 ມີສິ່ງແວດລ້ອມການ ຮຽນຮູ້ທີ່ດີຂຶ້ນ ເພື່ອປັບປຸງການສຶກສາ ເຊິ່ງພົວພັນເຖິງການປັບ ປຸງຄຸນະພາບຊີວິດ ແລະການຫຼຸດຜ່ອນຄວາມທຸກຈົນ.
		3.3.ຈັດຕັ້ງກອງປະຊຸມ ຕາມຄວາມຕ້ອງການຂອງຊຸມຊົນ ຢ່າງເປັນປົກກະຕິ.	
4. ປັບປຸງ, ພັດທະນາ ແລະ ເລືອກເຟັ້ນການຂະຫຍາຍ ການສຶກສາຊັ້ນມັດທະຍົມ.	4. ປັບປຸງແລະພັດທະນາການສຶກສາຊັ້ນມັດທະຍົມ.		4.1.1.ອັດຕາການຄ້າງຫ້ອງໄດ້ຫຼຸດລົງ,ບັນຫາການລົ້ນຫ້ອງໄດ້ຮັບການແກ້ໄຂແລະການນຳໃຊ້ງົບປະມານໄດ້ມີປະສິດທິຜົນ
			4.2.1.ນັກຮຽນສາມາດເລືອກໄດ້ໃນສິ່ງທີ່ເຂົາເຈົ້າຕ້ອງການຮຽນ.
			4.3.1.ການເຂົ້າຮຽນໄດ້ຮັບການປັບປຸງ ແລະການພົວພັນລະຫວ່າງການຮຽນທິດສະດີ ແລະພາກປະຕິບັດຕົວຈິງໄດ້ມີຄວາມແຂງແຮງຂຶ້ນ.
			4.4.1.ການເຂົ້າຮຽນຊັ້ນມັດທະຍົມ ຢ່າງເປັນທຳໄດ້ຮັບການປັບປຸງ.

	5.ປັບປຸງແລະພັດທະນາ ການສຶກສາວິຊາຊີບ.	5.1.ຍົກລະດັບການສຶກສາວິຊາຊີບແລະເຕັກນິກ +ສ້າງຕັ້ງໂຮງຮຽນວິຊາຊີບໃນບາງແຂວງທີ່ຍັງບໍ່ທັນມີ +ສ້າງຕັ້ງໂຮງຮຽນເຕັກນິກໃນລະດັບເຂດ ແລະ +ຍົກລະດັບໂຮງຮຽນເຕັກນິກທີ່ມີຢູ່ ເພື່ອເພີ່ມການເຂົ້າຮຽນໂດຍມີທາງເລືອກຮຽນເພີ່ມຂຶ້ນ.	5.1.1.ການເຂົ້າຮຽນຂອງກຸ່ມທີ່ດ້ອຍໂອກາດໄດ້ຮັບຄວາມເປັນທຳ ແລະໄດ້ຮັບການປັບປຸງໂດຍອີງຕາມຄວາມຕ້ອງການຂອງສັງຄົມ
		5.2.ປັບປຸງລະບົບໂຄຕາສຳລັບການເຂົ້າຮຽນເພື່ອຫຼຸດຜ່ອນຄວາມແຕກໂຕນລະຫວ່າງແຂວງ,ເພດ ແລະຊົນເຜົ່າ.	5.2.1.ການເຂົ້າຮຽນທີ່ມີຄວາມເປັນທຳໄດ້ຮັບການປັບປຸງອີງຕາມຄວາມສົນໃຈຂອງນັກຮຽນ ໂດຍບໍ່ໄດ້ຫຼຸດດ້ານຄຸນະພາບ
			5.2.2.ມີການນຳໃຊ້ພື້ນຖານວັດຖຸແລະຊັບພະຍາກອນຢ່າງມີປະສິດທິພາບ;ການຮ່ວມມືກັບກະຊວງອື່ນໆ ແລະອີງການຈັດຕັ້ງທີ່ກ່ຽວຂ້ອງໃນການຈັດການອົບຮົມວິຊາຊີບ ໄດ້ຮັບການປັບປຸງ.
	6.ປັບປຸງແລະພັດທະນາ ການສ້າງຄູ	6.1.ນຳໃຊ້ສູນພັດທະນາຄູ ແລະອົງກອນອື່ນໆ ເພື່ອປັບປຸງການເຂົ້າຮັບການບຳລຸງຢ່າງມີຄວາມເປັນທຳໂດຍນຳໃຊ້ວິທີການບຳລຸງໄລຍະສັ້ນແລະໄລຍະຍາວ	6.1.1.ມີການສະໜອງ ຄູຕາມຮູບແບບມາດຖານທີ່ແທດເໝາະ,ລວມເຖິງພະລະສຶກສາ ແລະສິລະປະສຶກສາ
		6.2.ປັບປຸງຄຸນະພາບຂອງພື້ນຖານວັດຖຸການສ້າງຄູ.ລວມເຖິງເງື່ອນໄຂຊີວິດການເປັນຢູ່ຂອງນັກຮຽນຄູ	6.2.1.ຄູໄດ້ຮັບແຮງຈູງໃຈເພື່ອຮັບການບຳລຸງ ແລະປັບປຸງຕົນເອງ.

		6.3.ປັບປຸງຫໍພັກ ເພື່ອດຶງ ດູດນັກຮຽນທີ່ຮຽນດີ ເຂົ້າຮຽນຄູ.	6.3.1.ຫໍພັກໄດ້ມີການປັບປຸງ ແລະຄຸນະພາບຂອງຜູ້ສະໜັກເຂົ້າຮຽນຄູໄດ້ ຮັບການປັບປຸງ.
	7. ປັບປຸງແລະພັດທະ ນາການສຶກສາຊັ້ນສູງ.	7.1.ເພີ່ມງົບປະມານການບໍລິຫານໃຫ້ສູງຂຶ້ນ ຜ່ານ: +ຄາດຄະເນຄວາມອາດສາມາດໃນການສ້າງວິ ທະຍາໄລເຂດສຳລັບການສຶກສາຊັ້ນສູງ. +ປັບປຸງແລະໃຫ້ຄວາມເປັນທຳແກ່ນັກຮຽນໄດ້ ເຂົ້າຮຽນຢູ່ໃນຄະນະຕາມການເລືອກຂອງເຂົາ ເຈົ້າ +ເຮັດໃຫ້ມີຫຼາຍປະເພດການຮຽນຮູ້ເຊັ່ນ:ລະ ບົບປົກກະຕິ, ການຮຽນທາງໄກແລະທົດ ລອງມະຫາວິທະຍາໄລເປີດຢູ່ໃນບາງຂະ ແໜງ.	7.1.1.ການເຂົ້າຮຽນຂອງນັກຮຽນສຳລັບການສຶກສາຊັ້ນສູງໃນຂັ້ນເຂດໄດ້ ເພີ່ມຂຶ້ນ:ນະໂຍບາຍການສອບເສັງເຂົ້າ ມ.ຊ ໄດ້ຮັບການປັບປຸງແລະມີ ຄວາມເປັນທຳ; ນຳໃຊ້ໂຄຕາສຳລັບເຂດແຂວງ; ຊົນເຜົ່າ.ແລະເພດ; ມີການ ປັບປຸງການເຂົ້າຮຽນຊັ້ນສູງໂດຍນຳໃຊ້ເທັກໂນໂລຢີ ໄປພ້ອມກັບການຮັກສາ ມາດຖານດ້ານຄຸນະພາບ.
		7.2..ດຳເນີນການເຮັດການວິໃຈໃນມະຫາວິ ທະຍາໄລສຳລັບການນຳໃຊ້ວິທະຍາສາດ ແລະ ເທັກໂນໂລຢີ.	7.2.1 .ນຳໃຊ້ ເທັກໂນໂລຢີທີ່ທັນສະໃໝສຳລັບການວິໃຈ,ການຄຸ້ມຄອງ ຫ້ອງສະໝຸດ , ອີແມວ ແລະອິນເຕີແນດສຳລັບຄູແລະ ນັກຮຽນ .
	8.ປັບປຸງການມີສ່ວນ ຮ່ວມຂອງພາກເອກະ ຊົນຢູ່ໃນການສຶກສາ .	8.1..ຊຸກຍູ້ພາກສ່ວນເອກະຊົນໃນການປັບປຸງ ຄຸນະພາບຢູ່ໃນທຸກຊັ້ນຮຽນ. ຕິດຕາມ ເບິ່ງມາດຖານທາງດ້ານວິຊາການ	8.1.1 .ໂຮງຮຽນເອກະຊົນ ມີສະຖຽນລະພາບແລະ ຄວາມສາມາດໃນການ ຮັບນັກຮຽນໃນພາກການສຶກສາຂັ້ນພື້ນຖານ, ການອົບຮົມວິຊາຊີບ ແລະເຕັກ ນິກ.
		8.2.ເພີ່ມຈຳນວນນັກຮຽນໂດຍອີງໃສ່ພາກ ສ່ວນເອກະຊົນ.	8.2.1ປະຢັດງົບປະມານຂອງລັດໄດ້ຫຼາຍຂຶ້ນໂດຍມີນັກຮຽນຈຳນວນ ຫຼວງຫຼາຍຢູ່ໃນພາກສ່ວນເອກະຊົນ.

		8.3.ຊຸກຍູ້ພາກສ່ວນເອກະຊົນໂດຍຜ່ານການເກັບອາກອນລາຍໄດ້ຕ່ຳ,ການຍົກເວັ້ນພາສີ,ແລະອື່ນໆໂດຍມີຄວາມຮັບຜິດຊອບປະສານງານກັບລັດ.	8.3.1ກິດຈະກຳຂອງພາກສ່ວນເອກະຊົນຢູ່ໃນການສຶກສາໃນລະດັບຕ່າງໆໄດ້ມີການເພີ່ມຂຶ້ນ.
	9.ສົ່ງເສີມແລະໃຫ້ໂອກາດແກ່ພາກສ່ວນເອກະຊົນໄດ້ມີສ່ວນຮ່ວມໃນການສຶກສາຢູ່ໃນທຸກລະດັບ	9.1.ສ້າງຕັ້ງກອງທຶນນຳໃຊ້ດອກເບ້ຍສຳລັບພາກສ່ວນເອກະຊົນເພື່ອນຳໃຊ້ເຂົ້າໃນການໃຫ້ມີສ່ວນຮ່ວມເພີ່ມຂຶ້ນ.	9.1.1.ກອງທຶນນຳໃຊ້ດອກເບ້ຍຈະສາມາດສົ່ງເສີມການຂະຫຍາຍການສຶກສາພາກເອກະຊົນ.

ແຜນງານ 2: ການປັບປຸງຄຸນະພາບ

ນະໂຍບາຍ	ຍຸດທະສາດ	ກິດຈະກຳ	ຜົນໄດ້ຮັບ
1.ການພັດທະນາການສຶກສາໃນຕໍ່ໜ້າຕ້ອງສຸມໃສ່ຄຸນະພາບ: +ເອົາໃຈໃສ່ພັດທະນາເດັກຢ່າງຮອບດ້ານ. +ສົ່ງເສີມນັກຮຽນທີ່ຮຽນເກັ່ງ ແລະ ມີພອນສະຫັວນຢ່າງເປັນລະບົບ	1.ພັດທະນາເດັກທາງດ້ານຮ່າງກາຍ, ປັນຍາ,ຄວາມຮູ້ສຶກ ແລະ ສັງຄົມ -ສ້າງເງື່ອນໄຂສະດວກເພື່ອປັບປຸງຄຸນະພາບຂອງໂຮງຮຽນອະນຸບານ.	1.1.ສ້າງໂຮງລ້ຽງເດັກແລະຮ/ຮອະນຸບານຢູ່ໃນບາງແຂວງເພື່ອນຳໃຊ້ເປັນຕົວແບບແລະເປັນສູນຊັບພະຍາກອນ.	1.1.1.ມາດຖານຂອງຮ/ຮອະນຸບານຈະໄດ້ຮັບການປັບປຸງ.ຮ/ຮອະນຸບານຕົວແບບຈະສະໜອງຄຳແນະນຳເພື່ອຂະຫຍາຍໄປໃນຂອບເຂດທົ່ວປະເທດ.ເດັກຈະໄດ້ມີການກະກຽມດີເພື່ອເຂົ້າຊັ້ນປະຖົມ.
		1.2.ປັບປຸງຄຸນະພາບຂອງການກໍ່ສ້າງນາງ ລ້ຽງເດັກແລະນາງຄູອະນຸບານແລະຜະລິດໃນປະລິມານທີ່ພຽງພໍເພື່ອຕອບສະໜອງຄວາມຕ້ອງການຂອງອະນຸບານສຶກສາ.	1.2.1.ນາງລ້ຽງເດັກ ແລະ ຄູອະນຸບານໄດ້ຮັບການກໍ່ສ້າງເປັນຢ່າງດີ ,ມີຄວາມຮູ້ແລະທັກສະທີ່ແທດເໝາະ.

		1.3.ພັດທະນາຫຼັກສູດ,ອຸປະກອນການສອນ,ເຄື່ອງຫຼິ້ນເພື່ອຕອບສະໜອງຄວາມຕ້ອງການໂຮງຮຽນອະນຸບານຕົວແບບ.	1.3.1. ໂຮງລ້ຽງເດັກແລະໂຮງຮຽນອະນຸບານຈະມີປຶ້ມແບບຮຽນ,ອຸປະກອນ,ເຄື່ອງຫຼິ້ນທີ່ສອດຄ່ອງກັບຫຼັກສູດ.
2.ປັບປຸງປະສິດທິພາບພາຍໃນຂອງສາມັນສຶກສາ	2.ນຳໃຊ້ວິທີການຮຽນການສອນ ແລະການປະເມີນຜົນທີ່ແທດເໝາະ.	2.1.ປະຕິບັດການເລື່ອນຫ້ອງແຕ່ ປ1 ຮອດ ປ3 ຢ່າງອັດຕະໂນມັດ.	2.1.1.ອັດຕາການເລື່ອນຫ້ອງດີຂຶ້ນ.
		2.2.ກວດຄືນກົດແລະລະບຽບການຕ່າງໆ	2.2.1. ມີລະບຽບການຕ່າງ ໆກ່ຽວກັບການເລື່ອນຫ້ອງ
		2.3.ແນະນຳຄູໃນການນຳໃຊ້ລະບຽບການໃຫມ່	2.3.1.ຄູສາມາດນຳໃຊ້ລະບຽບການຢ່າງແທດເໝາະກັບຕົວຈິງ.

3-ປັບປຸງຄຸນະພາບຂອງກຳລັງແຮງສິດສອນ	3.ເສີມກຳລັງແຮງການກໍ່ສ້າງ ຄູ ແລະດຳເນີນການບຳລຸງຄູຢ່າງເປັນລະບົບ	3.1.ພັດທະນາ ຮູບແບບມາດຕະຖານຂອງຄູຢູ່ໃນທຸກລະດັບ: • ຍົກລະດັບຄວາມສາມາດແລະຄຸນະພາບຂອງຄູໃນໂຮງຮຽນສ້າງຄູແລະຄະນະສຶກສາສາດຜ່ານກິດຈະກຳການເຮັດການວິໄຈ. • ປັບປຸງຫຼັກສູດສ້າງ ຄູເພື່ອໃຫ້ມີຄວາມສອດຄ່ອງກວ່າເກົ່າ, ເປັນຕົ້ນແມ່ນການສ້າງຄູປະຖົມລະບົບ 11+1 • .ຜະລິດຄູໃນວິຊາທີ່ຂາດແຄນ ,ປະຕິຮູບຫຼັກສູດສ້າງຄູເພື່ອໃຫ້ສອດຄ່ອງກັບການປ່ຽນແປງຫຼັກສູດສາຍສາມັນ. • .ປະຕິບັດການບຳລຸງຄູໃນຕໍ່ໜ້າ, ລວມທັງຄູທີ່ໄດ້ມາດຖານແລ້ວແລະຍັງບໍ່ໄດ້ມາດຖານ ເພື່ອປັບປຸງປະສິດທິພາບພາຍໃນ. • .ດຳເນີນການບຳລຸງຄູຢ່າງເປັນລະບົບ ເພື່ອເຮັດໃຫ້ຄູມີລະດັບສູງຂຶ້ນດ້ວຍການສຶກສາທາງໄກ.	3.1.1.ຈະມີການຄົ້ນຄວ້າວິໄຈໃນຂັ້ນໂຮງຮຽນ ແລະ ຄຸນນະພາບການຮຽນ-ການສອນຈະໄດ້ຮັບການປັບປຸງ 3.1.2.ຫຼັກສູດສ້າງ ຄູລະບົບ 11+1 ຈະສອດຄ່ອງກັບຫລັດສູດສາມັນສຶກສາ 3.1.3.ມີການສ່ະໜອງຄູໃຫ້ແກ່ທຸກໆວິຊາຮຽນ 3.1.4. ຈຳນວນຄູທີ່ບໍ່ໄດ້ມາດຖານ ແລະ ທຸດມາດຖານຈະຫຼຸດລົງເປັນລຳດັບ.
	4.ປັບປຸງຄວາມສາມາດຂອງຄູ	4.1.ເຝິກອົບຮົມ ຄູເຝິກສຳລັບ : _ຄູສອນຫ້ອງຄວບ _ຄູສອນພາສາຕ່າງປະເທດ ແລະຄູອື່ນໆ	4.1.1.ຈະມີຊັບພະຍາກອນບຸກຄົນທີ່ມີຄຸນະພາບເພື່ອໃຫ້ການອົບຮົມຄູປະເພດຕ່າງໆ

			4.1.2.ຄູໃນລະດັບຕ່າງໆໄດ້ຮັບການອົບຮົມທາງດ້ານ: +ເນື້ອໃນຄວາມຮູ້ +ວິທີການສອນ + ການນຳໃຊ້ຫຼັກສູດ ແລະປຶ້ມແບບຮຽນ.
5-ປັບປຸງຖານະທາງສັງຄົມແລະຄຸນະພາບຊີວິດຂອງຄູ	5.ປັບປຸງເງື່ອນໄຂດຳລົງຊີວິດຂອງຄູ	5.1.ສ້າງຕັ້ງກອງທຶນ ສຳລັບຄູ ແລະສະຫະກອນໂຮງຮຽນ	5.1.1.ຄູຈະມີສິ່ງຈູງໃຈ ແລະການສິດສອນຈະດີຂຶ້ນ
		5.2ຮັບຮູ້ປະລິບການສິດສອນ ແລະການຈ່າຍເງິນເດືອນຢ່າງເປັນປົກກະຕິ	5.2 .1.ຜະລິດ,ນຳໃຊ້ອຸປະກອນການຮຽນ ແລະອຸປະກອນຫ້ອງທົດລອງ
6- ພັດທະນາຫຼັກສູດທີ່ສອດຄ່ອງ	6. ປັບປຸງຫຼັກສູດແລະພັດທະນາອຸປະກອນການຮຽນ-ການສອນ ເພື່ອບັນລຸດ້ານຄຸນະພາບ ແລະ ມີຈຳນວນທີ່ພຽງພໍ	6.1 ປັບປຸງຫຼັກສູດສາມັນສຶກສາເພື່ອໃຫ້ມີຄວາມສອດຄ່ອງ,ຕໍ່ເນື່ອງ ແລະເປັນລະບົບຢູ່ໃນຊັ້ນຮຽນຕ່າງໆ,ທັງທາງຕັ້ງແລະທາງຂວາງ. + ເຮັດໃຫ້ຊົ່ວໂມງສອນດ້ານທິດສະດີ ແລະ ພາກປະຕິບັດມີລັກສະນະດູນດຽງກັນ; +ນຳເອົາທັກສະຊີວິດເຂົ້າ ຢູ່ໃນຫຼັກສູດ	6.1.1.ຫຼັກສູດຈະສອດຄ່ອງແລະແທດເໝາະກັບການພັດທະນາເສດຖະກິດ ແລະສັງຄົມໃນອານາຄົດ;ຜະລິດນັກຮຽນທີ່ຈົບອອກໄປໃຫ້ເປັນນັກຄົ້ນຄິດວິຈານ ແລະນັກແກ້ບັນຫາ.
7-ສະໜອງອຸປະກອນການສອນໃຫ້ພຽງພໍ	7.ພັດທະນາແລະແຈກຢາຍອຸປະກອນສິ່ງພິມ ແລະບໍ່ພິມສຳລັບທຸກລະດັບການສຶກສາ	7.1.ກວດຄືນ ແລະເບິ່ງຄືນປຶ້ມແບບຮຽນສຳລັບທຸກຂັ້ນຮຽນ. ພັດທະນາປຶ້ມແບບຮຽນໂລກ ອອມຕິວສຳລັບຂັ້ນປ1ຫາປ3.ປຶ້ມບົດເຝິກຫັດ ແລະເຈ້ຍບົດເຝິກຫັດ.ປຶ້ມອ່ານເສີມ;ພັດທະນາ ກ່ອງອຸປະກອນການສອນສຳລັບທຸກຊັ້ນຮຽນ.	7.1 .1ນັກຮຽນແລະຄູຈະມີເອກະສານດັ່ງກ່າວ ແລະສາມາດນຳໃຊ້ເອກະສານຫຼັກສູດທີ່ມີຄຸນະພາບ.
8-ສະໜອງພື້ນຖານວັດຖຸ ແລະອຸປະກອນສຳລັບສາຍສາມັນສຶກສາ ແລະສາຍສ້າງຄູ	8. ປັບປຸງອາຄານໂຮງຮຽນທີ່ມີແລ້ວ ແລະ ກໍ່ສ້າງໃໝ່ຈຳນວນໜຶ່ງ.	8.1.ຍົກລະດັບ ແລະຂະຫຍາຍໜ່ວຍພັກ ແລະ ເຮືອນພະນັກງານ ຂອງໂຮງຮຽນສ້າງຄູ	8.1.1.ມີການດຶງດູດນັກຮຽນເຂົ້າຮຽນອາຊີບຄູ

		8.2.ฟື້ນຟູຫ້ອງທົດລອງ ແລະສະໜອງ ອຸປະກອນລາຄາຖືກ/ທັນສະໄໝ	8.1.2 .ໂຮງຮຽນມັດທະຍົມຈະມີຫ້ອງທົດລອງໃນລະດັບປານກາງ.
